ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການແຫ່ງຊາດດ້ານໂພຊະນາການ

# ບົດລາຍງານ

## ການຈັດຕັ້ງປະຕິບັດ
## ແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ
## ປະຈຳ ປີ 2023
## ແລະ ທິດທາງແຜນການ ປີ 2024

ສປປ ລາວ ໄດ້ຮັບຮອງເອົາແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ ສະບັບໃໝ່ (NPAN 2021-2025) ທີ່ໄດ້ມີການເຜີຍແຜ່ໃນເດືອນພະຈິກ ປີ 2021. ສໍາລັບສົກປີ 2023 ຖືເປັນປີທີ 02 ໃນການຈັດຕັ້ງປະຕິບັດແຜນດັ່ງກ່າວ, ເຊິ່ງໄດ້ມີຄວາມຄືບໜ້າ ໃນການແກ້ໄຂບັນຫາທາງດ້ານໂພຊະນາການຢ່າງຮອບດ້ານ, ແຕ່ເຖິງຢ່າງໃດກໍ່ຕາມ ການຂາດສານອາຫານ ກໍ່ຍັງສືບຕໍ່ ເພາະເປັນບັນຫາທີ່ສໍາຄັນ ໃນການພັດທະນາເສດຖະກິດ–ສັງຄົມຂອງຊາດ. ການລົງທຶນໃສ່ດ້ານໂພຊະນາການ ແມ່ນໄດ້ເພີ່ມຂຶ້ນ ແລະ ຈະເຮັດໜ້າທີ່ສໍາຄັນ ໃນການບັນລຸເປົ້າໝາຍຕ່າງໆ ແລະ 02 ຕົວຊີ້ບອກທາງດ້ານໂພຊະນາການ ທີ່ສະພາຮັບຮອງ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດສະໄໝທີ IX.

ຄະນະກໍາມະການແຫ່ງຊາດດ້ານໂພຊະນາການ, ກອງເລຂາຂັ້ນສູນກາງ ແລະ ທ້ອງຖິ່ນໃນ 17 ແຂວງ ແລະ 01 ນະຄອນຫຼວງ, 148 ເມືອງ ໄດ້ມີການເຄື່ອນໄຫວຢ່າງເປັນປົກກະຕິ ແລະ ບາງເມືອງ ມີການປັບປຸງລາຍຊື່ຄະນະກໍາມະການຄືນ. ແຕ່ລະຂະແໜງການໄດ້ປັບປຸງກົນໄກການປະສານງານ ລວມທັງ ຂໍ້ຕົກລົງຄະນະກໍາມະການໂພຊະນາການຂັ້ນແຂວງ-ເມືອງ.

ສໍາລັບແຜນງານໜຶ່ງດຽວ ທີ່ມີສ່ວນຮ່ວມຫຼາຍຂະແໜງການ ເພື່ອປັບປຸງໂພຊະນາການ ເຊິ່ງມີຫຼາຍພາກສ່ວນຈັດຕັ້ງປະຕິບັດ ເປັນຕົ້ນ 1) ໂຄງການຫຼຸດຜ່ອນຄວາມທຸກຍາກ ແລະ ການຂາດສານອາຫານໃນເຂດຊົນນະບົດ (RRPM) (ກະຊວງກະສິກໍາ ແລະ ປ່າໄມ້), 2) ໂຄງການເຂົ້າເຖິງການບໍລິການດ້ານສາທາລະນະສຸກ ແລະ ໂພຊະນາການ (HANSA) (ກະຊວງສາທາລະນະສຸກ), 3) ໂຄງການຂະຫຍາຍການສະໜອງນໍ້າປະປາ, ສຸຂາພິບານ ແລະ ສຸຂານາໄມ (SWSSHP) (ກະຊວງໂຍທາທິການ ແລະ ຂົນສົ່ງ), 4) ໂຄງການການສຶກສາກ່ອນໄວຮຽນ (ECE) (ກະຊວງສຶກສາທິການ ແລະ ກິລາ) ແລະ 5) ກອງທຶນຫຼຸດຜ່ອນຄວາມທຸກຍາກ (PRF) (ກະຊວງກະສິກໍາ ແລະ ປ່າໄມ້).

## I. ຜັນຂະຫຍາຍວຽກງານບູລິມະສິດດ້ານໂພຊະນາການ ໃນປີ 2023:

ໄດ້ຜັນຂະຫຍາຍທິດຊີ້ນໍາຂອງ ທ່ານ ຮອງນາຍົກລັດຖະມົນຕີ ໃນກອງປະຊຸມຄະນະກໍາມະການແຫ່ງຊາດດ້ານໂພຊະນາການ ປະຈໍາປີ 2022 ຄັ້ງວັນທີ 21 ກຸມພາ 2023 ທີ່ຜ່ານມາ:

1. ສືບຕໍ່ປັບປຸງຍົກສູງຄວາມສາມາດນໍາພາ ຊີ້ນໍາຂອງຄະນະກໍາມະການໂພຊະນາການຂັ້ນຂອງຕົນ, ເພີ່ມທະວີຄວາມເຂັ້ມແຂງ ໃຫ້ແກ່ຖັນແຖວພະນັກງານວິຊາການ ໃນດ້ານຄວາມຮັບຮູ້ ກ່ຽວກັບ ແນວທາງນະໂຍບາຍຂອງພັກ, ລັດ ຕະຫຼອດຮອດຄວາມຮູ້ດ້ານວິຊາສະເພາະບົດຮຽນປະສົບປະການ ຄວາມຊໍານິຊໍານານງານ ເພື່ອຮັບຜິດຊອບໜ້າທີ່ການເມືອງຂອງຕົນ ຄື ສາທາລະນະສຸກ ແມ່ນສ້າງຄວາມເຂັ້ມແຂງ ແລະ ຕິດຕາມ ຄະນະກໍາມະການໂພຊະນາການ, ກະສິກໍາ ແລະ ປ່າໄມ້ ແມ່ນໄດ້ມີການຕິດຕາມຊຸກຍູ້ແບບສະໜັບສະໜູນຄະນະຊີ້ນໍາຂັ້ນແຂວງ ແລະ ຂັ້ນເມືອງ, ສຶກສາທິການ ແລະ ກິລາ ແມ່ນສືບຕໍ່ ນໍາຄວາມຮູ້ເຂົ້າໃນຫຼັກສູດ ແລະ ຝຶກອົບຮົມໃຫ້ຄູ, ຫຼາຍຂະແໜງການ ແມ່ນສະພາແຫ່ງຊາດ ໄດ້ມີການຄົ້ນຄວ້າ ແລະ ສະໜອງເອົາຂໍ້ມູນ ໃນການຮັບເອົາມະຕິວ່າດ້ວຍງົບປະມານແຫ່ງລັດ, (NIPN) ມີການຝຶກອົບຮົມການນໍາໃຊ້ຂໍ້ມູນ ແລະ ວິທີການຄົ້ນຄວ້າ;
2. ໃຫ້ແຕ່ລະຂະແໜງການ ນໍາເອົາບັນດາກຸ່ມກິດຈະກໍາ ແລະ ກິດຈະກໍາຍ່ອຍ ທີ່ນອນຢູ່ໃນແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ ໄປຜັນຂະຫຍາຍເຂົ້າໃນແຜນງານປະຈໍາປີ 2023 ຂອງຕົນ ໂດຍກໍານົດເປັນແຜນງານ, ໂຄງການລະອຽດ ພ້ອມທັງການ ຂຶ້ນແຜນງົບປະມານ ແລະ ຈັດສັນທຶນໄປຕາມຈຸດສຸມບູລິມະສິດ ລວມທັງ ງົບປະມານຂອງລັດຖະບານທີ່ມີຢູ່ຢ່າງຈໍາກັດ ແລະ ຄຸ້ມຄອງການນໍາໃຊ້ງົບປະມານທຶນຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກສາກົນ ໃຫ້ມີປະສິດທິພາບ ໂດຍຖືເອົາ ບັນດາຕົວຊີ້ບອກ ເປັນເຄື່ອງມືໃນການປະເມີນການຈັດຕັ້ງປະຕິບັດ ແລະ ພາຍຫຼັງປະຕິບັດສໍາເລັດແລ້ວ ໃຫ້ລາຍງານຄວາມຄືບໜ້າໃຫ້ແກ່ຈຸດປະສານງານຂອງກອງເລຂາຄະນະກໍາມະການແຫ່ງຊາດດ້ານໂພຊະນາການ, ທຸກຂະແໜງການ ແມ່ນໃຫ້ສອດແຊກ ແຜນກິດຈະກໍາ ເຂົ້າໃນແຜນຈັດຕັ້ງປະຕິບັດໂພຊະນາການ;
3. ຍູ້ແຮງຂະບວນການສ້າງບ້ານຕົວແບບດ້ານໂພຊະນາການ ໂດຍຜັນຂະຫຍາຍຍຸດທະສາດໜຶ່ງດຽວ ແລະ ນໍາໃຊ້ເຄື່ອງມືທີ່ມີຢູ່ ໂດຍສະເພາະ ຄູ່ມືການຈັດຕັ້ງປະຕິບັດບ້ານໂພຊະນາການຕົວແບບທີ່ຖືກຮັບຮອງແລ້ວ ໃນທຸກແຂວງທົ່ວປະເທດ, ສາທາລະນະສຸກ ແມ່ນມີການລິເລີ່ມ ການເກັບກໍາຂໍ້ມູນຈໍານວນບ້ານ,

ກະສິກຳ ແລະ ປ່າໄມ້ ແມ່ນມີໂຄງການຫຼຸດຜ່ອນຄວາມທຸກຍາກ ແລະ ຂາດໂພຊະນາການໃນຊຸມຊົນນະບົດ, ສຶກສາທິການ ແລະ ກິລາ ແມ່ນໄດ້ເຮັດສຸຂະອະນາໄມ ພາຍໃນໂຮງຮຽນ ແລະ ຫຼາຍຂະແໜງການ ແມ່ນ ສະພາແຫ່ງຊາດ ໄດ້ມີການຄົ້ນຄວ້າ ແລະ ຮັບຮອງບັນດາມາດຕະການ ໃນການຈັດຕັ້ງປະຕິບັດວຽກງານໂພຊະນາການ;

4. ສືບຕໍ່ປັບປຸງ ແລະ ເພີ່ມທະວີການປະສານງານ ລະຫວ່າງ ຂະແໜງການ ໃນທຸກຂັ້ນທັງສູນກາງ, ທ້ອງຖິ່ນ, ພາກລັດ, ເອກະຊົນ ຄູ່ຮ່ວມພັດທະນາ ຕະຫຼອດຮອດອົງການຈັດຕັ້ງສັງຄົມ ແລະ ປະຊາຊົນ, ສ້າງກົນໄກການປະສານງານທີ່ໂລ່ງລຽນ, ວ່ອງໄວທັນການ ແລະ ພົວພັນສະນິດແໜ້ນ ທັງຕິດຕາມ ແລະ ກວດກາ ຊຸກຍູ້ການເຄື່ອນໄຫວວຽກງານໂພຊະນາການ ຢ່າງເປັນປົກກະຕິ. ສາທາລະນະສຸກ ແມ່ນຈັດກອງປະຊຸມປຶກສາຫາລື ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດ, ກະສິກຳ ແລະ ປ່າໄມ້ ແມ່ນຖອດຖອນບົດຮຽນ ແລະ ຕິດຕາມຊຸກຍູ້ ການປະສານງານ ລະຫວ່າງຂະແໜງການ ໃນທຸກຂັ້ນ, ສຶກສາທິການ ແລະ ກິລາ ແມ່ນແຕ່ງຕັ້ງຄະນະກຳມະການຮັບຜິດຊອບວຽກງານປ້ອງກັນ ແລະ ສົ່ງເສີມສຸຂະພາບໃນໂຮງຮຽນ ແລະ ຫຼາຍຂະແໜງການ ແມ່ນໃຫ້ຕິດຕາມກວດກາ ການຈັດຕັ້ງປະຕິບັດ;
5. ເອົາໃຈໃສ່ຕິດຕາມ ແລະ ເຝົ້າລະວັງສະພາບຮ້ອນດ່ວນ, ເຄັ່ງຮ້ອນ ໃນການຈັດຕັ້ງຜັນຂະຫຍາຍ ແລະ ຈຳເປັນ ດ້ານໂພຊະນາການ ຢ່າງເປັນປົກກະຕິ ໄປຄຽງຄູ່ກັບ ການຄົ້ນຄວ້າ ວິເຄາະ, ວິໄຈ ສະພາບຄວາມເປັນຈິງ ແລະ ຄວາມສາມາດຕົວຈິງ ໃນການຈັດຕັ້ງປະຕິບັດ ວຽກງານດ້ານໂພຊະນາການ ໃນແຕ່ລະໄລຍະ ໃຫ້ຫຼາຍຂຶ້ນ ໂດຍອາໄສ ທີມງານຈາກຖານຂໍ້ມູນແຫ່ງຊາດດ້ານໂພຊະນາການ (NIPN) ຂອງສະຖາບັນວິໄຈຄົ້ນຄວ້າການພັດທະນາ, ກະຊວງແຜນການ ແລະ ການລົງທຶນ ເພື່ອນຳມາວາງແຜນການ ໃນການຈັດຕັ້ງປະຕິບັດ ວຽກງານດ້ານໂພຊະນາການໃຫ້ດີຂຶ້ນ. ສາທາລະນະສຸກ ແມ່ນດຳເນີນການຄົ້ນຄວ້າ, ເຝົ້າລະວັງ, ປະເມີນ ແລະ ຕິດຕາມຂໍ້ມູນທາງດ້ານໂພຊະນາການ ຢູ່ໃນລະບົບຂໍ້ມູນຂ່າວສານສາທາລະນະສຸກ (DHIS2) ໃຫ້ໄດ້ດຳເນີນການຢ່າງເປັນປົກກະຕິ;
6. ເພີ່ມທະວີການໂຄສະນາເຜີຍແຜ່ ຄວາມຈຳເປັນ ແລະ ຄວາມສຳຄັນຂອງວຽກງານໂພຊະນາການ ໃນການພັດທະນາ ແລະ ປຸກລະດົມ ຂົນຂວາຍ ການມີສ່ວນຮ່ວມຂອງສັງຄົມ ຢ່າງເປັນເຈົ້າການ, ແຂງແຮງຢ່າງກວ້າງຂວາງ ເຂົ້າໃນການພັດທະນາວຽກງານໂພຊະນາການແບບຕໍ່ເນື່ອງ ແລະ ຍືນຍົງ. ສາທາລະນະສຸກ ແມ່ນກະກຽມຈັດຕັ້ງສະເຫຼີມສະຫຼອງວັນໂພຊະນາການ ແລະ ສັບປະດາສາກົນການລ້ຽງລູກດ້ວຍນໍ້ານົມແມ່, ກະສິກຳ ແລະ ປ່າໄມ້ ແມ່ນສ້າງ ແລະ ຈັດຕັ້ງແຜນປະຕິບັດ ເລື່ອງລະບົບອາຫານ, ສຶກສາທິການ ແລະ ກິລາ ແມ່ນກະກຽມຈັດກອງປະຊຸມ ກ່ຽວກັບ ການນຳໃຊ້ຄູ່ມືແນະນຳ ກ່ຽວກັບ ການບໍລິໂພກໃຫ້ຖືກຫຼັກໂພຊະນາການ ແລະ ເຜີຍແຜ່ໂຄສະນາ ບັນດານິຕິກຳ ທີ່ກ່ຽວກັບ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;
7. ໃຫ້ຄະນະກຳມະການໂພຊະນາການແຕ່ລະຂັ້ນ ເອົາໃຈໃສ່ຈັດຕັ້ງເຜີຍແຜ່ແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ ໃຫ້ກວ້າງຂວາງ ໃຫ້ເລິກເຊິ່ງ ຢ່າງທົ່ວເຖິງ ແລະ ຂົນຂວາຍ ໃຫ້ມີການຈັດຕັ້ງປະຕິບັດ ໃນທຸກກຸ່ມກິດຈະກຳ ໂດຍສຸມໃສ່ ໃຫ້ບັນລຸ 02 ຕົວຊີ້ບອກທີ່ສະພາແຫ່ງຊາດ ໄດ້ຮັບຮອງແລ້ວ ທີ່ກ່ຽວພັນກັບ ວຽກງານໂພຊະນາການ. ກະສິກຳ ແລະ ປ່າໄມ້ ແມ່ນໃຫ້ມີກອງປະຊຸມຊີ້ນຳຂອງບັນດາໂຄງການທີ່ກ່ຽວຂ້ອງ.

ອີງໃສ່ ທິດທາງ, ໜ້າທີ່ ແລະ ຄາດໝາຍລວມ ຂອງການຈັດຕັ້ງປະຕິບັດ 22 ກຸ່ມກິດຈະກຳ, 36 ຕົວຊີ້ບອກ ທີ່ໄດ້ຮັບຮອງ ໃນແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ 05 ປີ (2021-2025) ເພື່ອໃຫ້ເຊື່ອມສານກັບແຜນພັດທະນາເສດຖະກິດ–ສັງຄົມແຫ່ງຊາດ ຄັ້ງທີ IX ຂອງທຸກຂະແໜງການ.

## II. ຄວາມຄືບໜ້າການຈັດຕັ້ງປະຕິບັດແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການປະຈໍາປີ 2023 ຂອງແຕ່ລະຂະແໜງການ:

### 1. ຂະແໜງສາທາລະນະສຸກ: ຄວາມຄືບໜ້າຂອງຕົວຊີ້ບອກ ຂະແໜງສາທາລະນາສຸກ:

| ກຸ່ມກິດຈະກໍາ | 19 ຕົວຊີ້ບອກ | ຂໍ້ມູນພື້ນຖານ 2020 | ປະຕິບັດໄດ້ໃນ 2021 | ປະຕິບັດໄດ້ໃນ 2022 | ປະຕິບັດໄດ້ໃນ ປີ 2023 | ເປົ້າໝາຍ 2023 | ເປົ້າໝາຍ 2024 | ເປົ້າໝາຍ 2025 |
|---|---|---|---|---|---|---|---|---|
| | **ຕົວຊີ້ບອກ 1**: ອັດຕາສ່ວນຮ້ອຍຂອງແມ່ຍິງຖືພາທີ່ໄດ້ຮັບຄໍາປຶກສາແນະນໍາໃນການລ້ຽງລູກດ້ວຍນົມແມ່, ການໃຫ້ອາຫານເສີມ ແລະ ພັດທະນາການເດັກ | ບໍ່ມີຂໍ້ມູນ 2020 | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | 60% | 70% | >80% |
| 1 | **ຕົວຊີ້ບອກ 2**: ອັດຕາສ່ວນຮ້ອຍຂອງເດັກນ້ອຍເກີດໃໝ່ທີ່ໄດ້ເລີ່ມກິນນົມແມ່ພາຍໃນໜຶ່ງຊົ່ວໂມງທໍາອິດຫຼັງເກີດ. | 39% (LSIS 2017) | 43% | 58.9% (DHIS2) | DHIS II 70.2% | 50% | 55% | 85% |
| | **ຕົວຊີ້ບອກ 3**: ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸລຸ່ມ 06 ເດືອນທີ່ໄດ້ກິນນໍ້ານົມແມ່ພຽງຢ່າງດຽວ. | 45% (LSIS 2017) | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | 50,6% (LSIS 3) | 57% | 59% | >65% |
| | **ຕົວຊີ້ບອກ 4**: ອັດຕາສ່ວນຮ້ອຍຂອງແມ່ຍິງຖືພາ ທີ່ໄດ້ຮັບທາດເຫຼັກ-ອາຊິດໂຟລິກມື້ລະເມັດ ຢ່າງໜ້ອຍ 90 ເມັດ | 25% (LSIS1: 2012) | | 92% | 84.3% (DHIS2) | 68% | 69% | 70% |
| 2 | **ຕົວຊີ້ບອກ 5**: ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 12 ຫາ 25 ປີ ທີ່ໄດ້ກິນທາດເຫຼັກ-ອາຊິດໂຟລິກອາທິດລະເມັດ. | ບໍ່ມີຂໍ້ມູນ | | 6.5% (DHIS2) | 5.6% (DHIS2) | 50% | 60% | >70% |
| | **ຕົວຊີ້ບອກ 6**: ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸ 6 ຫາ 59 ເດືອນ ທີ່ໄດ້ກິນວິຕາມິນອາ ໃນ 6 ເດືອນ ຜ່ານມາ. | 59% (LSIS 2017) | | 99.8% | 51.9% (DHIS2) | ບໍ່ມີຂໍ້ມູນ | | >80% |
| | **ຕົວຊີ້ບອກ 7**: ອັດຕາສ່ວນຮ້ອຍຂອງຄົວເຮືອນ ທີ່ໄດ້ນໍາໃຊ້ແຫຼ່ງນໍ້າກິນທີ່ໄດ້ຖືກປັບປຸງແລ້ວ (ສະອາດ ແລະ ປອດໄພ). (ສາທາລະນະສຸກ /WASH) | 83.9% (LSIS 2017) | | 92.1% | 93.25% (DHIS2) | 93% | 94% | 95% |
| | **ຕົວຊີ້ບອກ 8**: ອັດຕາສ່ວນຮ້ອຍຂອງຄົວເຮືອນ ທີ່ໄດ້ນໍາໃຊ້ສິ່ງອໍານວຍຄວາມສະດວກດ້ານສຸຂາພິບານ ທີ່ໄດ້ຖືກປັບປຸງແລ້ວ. (ສາທາລະນະສຸກ /WASH) | 73.8% (LSIS 2017) | | 83.5% | 84.58% (DHIS2) | 83% | 84% | 85% |
| 3 | **ຕົວຊີ້ບອກ 9**: ອັດຕາສ່ວນຮ້ອຍຂອງຄົວເຮືອນ ທີ່ໄດ້ນໍາໃຊ້ບ່ອນລ້າງມືດ້ວຍສະບູ. (ສາທາລະນະສຸກ /WASH) | 89.9% (LSIS 2017) | | ບໍ່ມີຂໍ້ມູນ | 63% (LSIS 3) | 93% | 94% | 95% |
| | **ຕົວຊີ້ບອກ 10**: ອັດຕາສ່ວນຮ້ອຍຂອງໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມ ທີ່ໄດ້ນໍາໃຊ້ແຫຼ່ງນໍ້າດື່ມທີ່ໄດ້ຖືກປັບປຸງແລ້ວ (ສະອາດ ແລະ ປອດໄພ). (ສຶກສາທິການ/WASH) | ກ່ອນໄວຮຽນ 77%<br>ປະຖົມ 76% | | ກ່ອນໄວຮຽນ 61%<br>ປະຖົມ 43.28% | ກ່ອນໄວຮຽນ 73%<br>ປະຖົມ ບໍ່ມີຂໍ້ມູນ… | ກ່ອນໄວຮຽນ 81%<br>ປະຖົມ 77.5% | | ກ່ອນໄວຮຽນ 86%<br>ປະຖົມ 80% |
| | **ຕົວຊີ້ບອກ 11**: ອັດຕາສ່ວນຮ້ອຍຂອງໂຮງຮຽນ ອະນຸບານ ແລະ ໂຮງຮຽນປະຖົມທີ່ໄດ້ນໍາໃຊ້ ສິ່ງອໍານວຍຄວາມສະດວກ ດ້ານສຸຂາພິບານ (ວິດຖ່າຍ) ທີ່ມີການປັບປຸງແລ້ວ. (ສຶກສາທິການ/WASH) | ກ່ອນໄວຮຽນ 77%<br>ປະຖົມ 76% | | ກ່ອນໄວຮຽນ 49%<br>ປະຖົມ 76.21% | ກ່ອນໄວຮຽນ 72%<br>ປະຖົມ ບໍ່ມີຂໍ້ມູນ | ກ່ອນໄວຮຽນ 81%<br>ປະຖົມ 77.5% | | ກ່ອນໄວຮຽນ 85%<br>ປະຖົມ: 80% |

| | | | | | | | | |
|---|---|---|---|---|---|---|---|---|
| | **<u>ຕົວຊີ້ບອກ 12</u>:** ອັດຕາສ່ວນຮ້ອຍຂອງໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມ ທີ່ໄດ້ນຳໃຊ້ສະຖານທີ່ລ້າງມືດ້ວຍສະບູ. (ສຶກສາທິການ/WASH) | ກ່ອນໄວຮຽນ 54%<br>ປະຖົມ 54%<br>ລວມ 54% | | ກ່ອນໄວຮຽນ<br>59%<br>ປະຖົມ 82.74% | ກ່ອນໄວຮຽນ 65%<br>ປະຖົມ ບໍ່ມີຂໍ້ມູນ | ກ່ອນໄວຮຽນ<br>74.5%<br>ປະຖົມ 70% | | ກ່ອນໄວຮຽນ<br>95%<br>ປະຖົມ 80%<br>ລວມ >80% |
| 4 | **<u>ຕົວຊີ້ບອກ 13</u>:** ອັດຕາສ່ວນຮ້ອຍຂອງເດັກນ້ອຍ ອາຍຸ 12 ຫາ 59 ເດືອນ ທີ່ໄດ້ກິນຢາຂ້າແມ່ທ້ອງ. (ສາທາລະນະສຸກ) | 67% (DHIS2 2018) | 57.6% | 85.5% | 47.9%<br>(DHIS2) | 76% | 78% | >80% |
| | **<u>ຕົວຊີ້ບອກ 14</u>:** ອັດຕາສ່ວນຮ້ອຍຂອງເດັກນ້ອຍ ອາຍຸລຸ່ມ 5 ປີ ທີ່ເປັນພະຍາດຖອກທ້ອງຜູ້ທີ່ໄດ້ຮັບການປິ່ນປົວຢູ່ສະຖານທີ່ບໍລິການສຸຂະພາບ. (ແຍກຕາມເພດ: ຍິງ-ຊາຍ) (ສາທາລະນະສຸກ ) | 49% (LSIS2) | | 36.9% | 51.5 %<br>(DHIS2) | 61% | 65% | >70% |
| | **<u>ຕົວຊີ້ບອກ 15</u>:** ອັດຕາສ່ວນຂອງເດັກນ້ອຍອາຍຸລຸ່ມ 2 ປີ ທີ່ໄດ້ຮັບວັກຊີນກັນພະຍາດຄົບ. | 75 (RMNCAH Strategy 2020) | 75% | 83.4% | 96,2%<br>(DHIS2) | 85% | 88% | 90% |
| 10 | **<u>ຕົວຊີ້ບອກທີ 21</u>:** ອັດຕາສ່ວນຮ້ອຍ ຂອງ ນັກຮຽນຍິງໃນໂຮງຮຽນມັດທະຍົມທີ່ກິນທາດເຫຼັກ-ອາຊິດໂຟລິກ (IFA). (ສຶກສາທິການ ແລະ ສາທາລະນະສຸກ ຮ່ວມກັນ) | ບໍ່ມີຂໍ້ມູນ | | ບໍ່ມີຂໍ້ມູນ | ບໍ່ໄດ້ປະຕິບັດ | 70% | | >80% ຂອງ<br>ນັກຮຽນທັງໝົດ<br>ໃນເຂດເປົ້າໝາຍ |
| | **<u>ຕົວຊີ້ບອກທີ 22</u>:** ອັດຕາສ່ວນຮ້ອຍຂອງນັກຮຽນໃນໂຮງຮຽນປະຖົມທີ່ໄດ້ກິນຢາຂ້າແມ່ທ້ອງ. (ແຍກຕາມເພດ: ຍິງ-ຊາຍ) (ສຶກສາທິການ ແລະ ສາທາລະນະສຸກ ຮ່ວມກັນ) | 91%<br>(2020) | | 99.50% | 77.39% | 94% ຂອງ<br>ນັກຮຽນທັງໝົດ<br>ໃນແຂວງທີ່ຖືກ<br>ຄັດເລືອກ | 95% | > 95% ຂອງ<br>ນັກຮຽນທັງໝົດ<br>ໃນແຂວງທີ່ຖືກຄັດ<br>ເລືອກ |
| 13 | **<u>ຕົວຊີ້ບອກທີ 24:</u>** ອັດຕາສ່ວນຮ້ອຍຂອງສະຖານທີ່ບໍລິການສຸຂະພາບທີ່ໄດ້ມີການຄຸ້ມຄອງ ການຂາດສານອາຫານກະທັນຫັນແບບເຊື່ອມສານ (IMAM). (ສາທາລະນະສຸກ) | ບໍ່ມີຂໍ້ມູນ | | 36.3% | 51.9%<br>(DHIS2) | 60% | 70% | ≥80% |
| 16 | **<u>ຕົວຊີ້ບອກທີ 29:</u>** ອັດຕາສ່ວນຮ້ອຍຂອງບ້ານທີ່ໄດ້ຖືກປະກາດເປັນບ້ານໂພຊະນາການຕົວແບບ ແລະ ມີກິດຈະກຳໂພຊະນາການ ແບບປະສົມປະສານທີ່ມີຫຼາຍກວ່າໜຶ່ງຂະແໜງການເຂົ້າຮ່ວມ. (ນຳພາໂດຍສາທາລະນະສຸກ, ໂດຍມີຂະແໜງການອື່ນສະໜັບສະໜູນ) | ບໍ່ມີຂໍ້ມູນ | | ສຳເລັດ ການ<br>ເຜີຍແຜ່ | 04 ບ້ານ | 18 ບ້ານ<br>ຢ່າງໜ້ອຍແຂວງ<br>ລະ 1 ບ້ານ | 148 ບ້ານ | 295 ບ້ານ |

**ກຸ່ມກິດຈະກຳທີ 01: ສົ່ງເສີມໂພຊະນາການໃນແມ່ຍິງ, ແມ່, ເດັກອ່ອນ ແລະ ເດັກນ້ອຍ (MIYCN)**

**ຜົນສຳເລັດ ທາງການເຄື່ອນໄຫວ ກິດຈະກຳ ທີ່ພົ້ນເດັ່ນ ໃນ ປີ 2023:**

- ອັດຕາສ່ວນຮ້ອຍຂອງແມ່ຍິງຖືພາ ທີ່ໄດ້ຮັບຄຳປຶກສາແນະນຳ ໃນການລ້ຽງລູກດ້ວຍນ້ຳນົມແມ່, ການໃຫ້ອາຫານເສີມ ແລະ ພັດທະນາການເດັກ ບໍ່ມີຂໍ້ມູນປະຈຳປີ (ບໍ່ມີໃນລະບົບ DHISII) ແມ່ຍິງຖືພາ ໄດ້ຮັບການບໍລິການຝາກທ້ອງກັບພະນັກງານແພດທີ່ຊຳນານຢ່າງໜ້ອຍ 1 ຄັ້ງ 89.8% ແລະ ໄດ້ຢ່າງໜ້ອຍ 4 ຄັ້ງ 71.6% ຄາດວ່າຈະໄດ້ຮັບຄຳປຶກສາ ໃນການລ້ຽງລູກດ້ວຍນົມແມ່, ການໃຫ້ອາຫານເສີມ ແລະ ພັດທະນາການຂອງເດັກ ໃນໄລຍະການບໍລິການຝາກທ້ອງ;
- ຝຶກອົບຮົມ ການນຳໃຊ້ເຄື່ອງມືຕິດຕາມ ການລະເມີດດຳລັດວ່າດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບ ອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍໃນຮ້ານຄ້າທັງໝົດ ແມ່ນໄດ້ຝຶກອົບຮົມໃຫ້ຄົບ 18 ແຂວງຄົບທຸກເມືອງ ໂດຍສະເພາະປີ 2023 ແມ່ນອົບຮົມ ໄດ້ຈຳນວນ 08 ແຂວງ ຄື ແຂວງບໍ່ແກ້ວ, ອຸດົມໄຊ, ໄຊຍະບູລີ, ບໍລິຄຳໄຊ, ຈຳປາສັກ, ເຊກອງ, ໄຊສົມບູນ ແລະ ວຽງຈັນ;
- ສຳເລັດການລົງຕິດຕາມ ດຳລັດວ່າດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບ ອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ສຳລັບຄູຝຶກຂັ້ນສູນກາງ ເພື່ອຈະໄປອົບຮົມໃຫ້ 08 ແຂວງ ແລະ ຈັດກອງປະຊຸມຮ່ວມກັບຄະນະກຳມະການ ເພື່ອປຶກສາຫາລືຜົນຂອງການຕິດຕາມຊຸກຍູ້ ໃນການປະຕິບັດຕໍ່ຜູ້ລະເມີດ ແລະ ວາງທິດທາງແຜນການໃນຕໍ່ໜ້າ;
- ຕິດຕາມຊຸກຍູ້ ການນຳໃຊ້ເຄື່ອງມືຕິດຕາມການລະເມີດດຳລັດວ່າດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບ ອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ໃນສະຖານທີບໍລິການ ທີ່ໂຮງໝໍມະໂຫສົດ ແລະ ໂຮງໝໍແມ່ ແລະ ເດັກເກີດໃໝ່, ແຂວງ ຄຳມ່ວນ, ສະຫວັນນະເຂດ, ເຊກອງ ແລະ ຜົ້ງສາລີ;
- ສຳເລັດການຝຶກອົບຮົມ ການນຳໃຊ້ເຄື່ອງມືການປະເມີນການລະເມີດດຳລັດ 472/ບລ, ວ່າດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບ ອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ ໃນສະຖານທີ່ບໍລິການສາທາລະນະສຸກ ໃຫ້ນັກປະເມີນ 7 ໂຮງໝໍສູນກາງ, ມະໂຫສົດ, ມິດຕະພາບ, ເດັກ, ແມ່ ແລະ ເດັກເກີດໃໝ່, 103 ກອງທັບ ແລະ 5 ເມສາ, ຂັ້ນແຂວງ ມີ ໂຮງໝໍແຂວງຜົ້ງສາລີ ແລະ ເຊກອງ;
- ສຳເລັດກອງປະຊຸມປຶກສາຫາລື ເພື່ອຕອບຄຳຖາມຂອງສະມາຄົມນົມຝຸ່ນ ກ່ຽວກັບ ດຳລັດວ່າດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບ ອາຫານ ສຳລັບເດັກອ່ອນ ແລະ ເດັກນ້ອຍ;
- ເປີດຊຸດອົບຮົມທີ່ປຶກສາສົ່ງເສີມການລ້ຽງລູກດ້ວຍນ້ຳນົມແມ່ ໃຫ້ແກ່ພະນັກງານ–ແພດ ຈຳນວນທັງໝົດ 22 ທ່ານ ຈາກໂຮງໝໍສູນກາງ 3 ແຫ່ງ (ມະໂຫສົດ, ເຊດຖາທິຣາດ ແລະ ຫ້າເມສາ), ໂຮງໝໍແຂວງ 8 ແຫ່ງ (ຜົ້ງສາລີ, ຫົວພັນ, ອຸດົມໄຊ, ບໍ່ແກ້ວ, ຊຽງຂວາງ, ຄຳມ່ວນ, ສະຫວັນນະເຂດ, ໄຊຍະບູລີ) ແລະ ພະນັກງານ ສູນໂພຊະນາການ;
- ສຳເລັດການສະເຫຼີມສະຫຼອງວັນໂພຊະນາການແຫ່ງຊາດ ແລະ ສຳເລັດຈັດພິທີສະເຫຼີມສະຫຼອງສັບປະດາສາກົນການລ້ຽງລູກດ້ວຍນ້ຳນົມແມ່ ປະຈຳປີ 2023 ທີ່ໂຮງແຮມ ຄຣາວພລາຊາ, ໂຮງໝໍແມ່ ແລະ ເດັກເກີດໃໝ່, ໂຮງງານອານປີລາວ ອິນເຕີເນັດເຊີນນໍ ຈຳກັດ ແລະ ໂຮງງານ ຟາມປາ ເອດີຊີ;
- ສຳເລັດຄູ່ມືແນະນຳ ການຈັດຕັ້ງປະຕິບັດການປະເມີນໂຮງໝໍຕົວແບບໃນການສົ່ງເສີມການລ້ຽງລູກດ້ວຍນ້ຳນົມແມ່;
- ເຂົ້າຮ່ວມກອງປະຊຸມປຶກສາຫາລື ແລະ ທົບທວນຄືນການຈັດຕັ້ງປະຕິບັດກິດຈະກຳ ກ່ຽວກັບ ຄູ່ມືອົບຮົມວຽກງານການຂະຫຍາຍການເຊື່ອມສານການຄຸ້ມຄອງກໍລະນີສຸຂະພາບໄວຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ໃນລະດັບຊຸມຊົນ ໃນວັນທີ 09 ສິງຫາ 2023 ທີ່ຫ້ອງປະຊຸມກົມອະນາໄມ ແລະ ສົ່ງເສີມສຸຂະພາບ (ຊັ້ນ 03) ກະຊວງສາທາລະນະສຸກ;
- ອົບຮົມແບບຟອມປະເມີນໂຮງໝໍຕົວແບບສົ່ງເສີມການລ້ຽງລູກດ້ວຍນ້ຳນົມແມ່ ໃນວັນທີ 22 ສິງຫາ 2023 ທີ່ຫ້ອງປະຊຸມສູນໂພຊະນາການ (ຊັ້ນ 02);
- ເຂົ້າຮ່ວມກອງປະຊຸມຊີ້ແຈງ ແລະ ວາງແຜນ ໂຄງການສ້າງຄວາມເຂັ້ມແຂງວຽກງານສຸຂະພາບແມ່ ແລະ ເດັກ ແລະ ໂພຊະນາການ ຢູ່ແຂວງສາລະວັນ ແລະ ແຂວງເຊກອງ;

- ສຳເລັດການຮັບຮອງເນື້ອໃນການຝຶກອົບຮົມ ໃນຫົວຂໍ້ ການລ້ຽງດູເດັກອ່ອນ ແລະ ເດັກນ້ອຍ ແລະ ຝຶກອົບຮົມຄືນໃຫ້ແກ່ທີມງານຄູ່ຝຶກຂັ້ນສູນກາງ;
- ສຳເລັດການຮັບຮອງໂຮງໝໍສົ່ງເສີມການລ້ຽງລູກດ້ວຍນ້ຳນົມແມ່ ໃນປີ 2023 ໄດ້ 03 ແຫ່ງ ໂດຍລວມທັງໝົດໃນປະຈຸບັນ ແມ່ນໄດ້ 07 ແຫ່ງ.

**ກຸ່ມກິດຈະກຳທີ 2: ສະໜອງຈຸລະສານອາຫານໃຫ້ແກ່ ແມ່ຍິງ ແລະ ເດັກນ້ອຍ ໃນກຸ່ມເປົ້າໝາຍ**

**ຜົນສຳເລັດ ທາງການເຄື່ອນໄຫວ ກິດຈະກຳ ທີ່ພົ້ນເດັ່ນໃນປີ 2023:**

- ໂດຍອີງຕາມ ຂໍ້ມູນຈາກ DHISII ເຫັນວ່າ 84.2% ຂອງແມ່ຍິງຖືພາ ທີ່ໄດ້ຮັບທາດເຫຼັກ-ອາຊິດໂຟລິກ (IFA) ຢ່າງໜ້ອຍ 90 ເມັດ ເຊິ່ງເປົ້າໝາຍປີ 2023 ແມ່ນ 68% ບັນລຸເກີນຄາດໝາຍ ແລະ ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸ 6 ຫາ 59 ເດືອນ ໄດ້ຮັບວິຕາມິນອາ 51.9% ທຽບໃສ່ເປົ້າໝາຍແມ່ນ 80% ແມ່ນບໍ່ບັນລຸ;
- 5.6% ຂອງແມ່ຍິງອາຍຸ 12 ຫາ 25 ປີ ທີ່ໄດ້ກິນທາດເຫຼັກ-ອາຊິດໂຟລິກ ອາທິດລະເມັດ ທຽບໃສ່ແຜນ (50%) ແມ່ນບໍ່ສຳເລັດ ຍ້ອນບໍ່ມີຢາ ທາດເຫຼັກ-ອາຊິດໂຟລິກ ບໍ່ມີງົບປະມານ ແລະ ຜູ້ສະໜັບສະໜັບ.
- ໄດ້ຮັບຢາໂພຊະນາການ ວິຕາມິນອາ ສາມາດປົກຄຸມໃຫ້ເດັກນ້ອຍ 6-11 ເດືອນ ຈຳນວນ 143,200 ຄົນ, ແລະ ເດັກນ້ອຍ 12-59 ເດືອນ 594,000 ຄົນ ໂດນມີມູນຄ່າ 29,088.92 ໂດລາສະຫະລັດ ໂດຍໄດ້ຮັບການສະໜັບສະໜູນຈາກອົງການອຸຍນິເຊບ ເຊິ່ງພຽງພໍ ຕໍ່ຄວາມຕ້ອງການໃນປີ 2023;
- ສຳເລັດກອງປະຊຸມ ກ່ຽວກັບ ການປັບປຸງເນື້ອໃນຄູ່ມືມາດຕະຖານຂອງອາຊຽນໃນການເສີມຈຸລະສານອາຫານ ໃສ່ໃນອາຫານ;
- ລົງຕິດຕາມຄວາມຄືບໜ້າໃນການປະສົມວິຕາມິນ ແລະ ແຮ່ທາດ ໃສ່ໃນເຂົ້າສານ ທີ່ໂຮງສີເຂົ້າ ແຂວງສະຫວັນນະເຂດ ຈຳນວນ 150 ໂຕນ ເຊິ່ງໄດ້ແຈກຢາຍໃຫ້ ໂຮງຮຽນ 454 ແຫ່ງ;
- ສຳເລັດການຈັດກອງປະຊຸມທົບທວນຄືນ ການຈັດຕັ້ງປະຕິບັດ ການຢາຍຢາວິຕາມິນອາ, ຢາຂ້າແມ່ທ້ອງ, ທາດສັງກະສີ, ຢາທາດເຫຼັກ, ອາຫານທາງການແພດ ແລະ ອຸປະກອນທາງໂພຊະນາການ ຢູ່ 03 ພາກ ເພື່ອກະຕຸ້ນອັດຕາການປົກຄຸມ ແລະ ປັບປຸງການລາຍງານ;
- ແກ້ໄຂບັນຫາການຂາດທາດ ໂປຕາຊຽມ ໄອໂອເດດ (Potassium Iodate) ໃນເກືອບໍລິໂພກ ໂດຍປຶກສາຫາລື ກັບກະຊວງການເງິນ ແລະ ກະຊວງອຸດສະຫະກຳ ແລະ ການຄ້າ ເພື່ອນຳສະເໜີຕໍ່ລັດຖະບານພິຈາລະນາ ໃນການຍົກເວັ້ນພາສີນຳເຂົ້າ ແລະ ອາກອນມູນຄ່າເພີ່ມ ເພື່ອຫຼຸດຜ່ອນລາຄາຕົ້ນທຶນ ເພາະທາດດັ່ງກ່າວ ແມ່ນມີຄວາມຈຳເປັນ ໃນການເສີມສ້າງພັດທະນາການທາງດ້ານມັນສະໝອງຂອງຄົນໃຫ້ມີຄວາມສະຫຼຽວສະຫຼາດ ຊ່ວຍປ້ອງກັນການເປັນພະຍາດຄໍໜຽງ ແລະ ພະຍາດສະໝອງພິການແຕ່ກຳເນີດ. ແນໃສ່ໃຫ້ແມ່ຍິງ, ເດັກນ້ອຍ ກໍຄື ທົ່ວສັງຄົມໄດ້ບໍລິໂພກເກືອທີ່ມີຄຸນນະພາບ ທັງເປັນການສົ່ງເສີມ ການບໍລິໂພກເກືອພາຍໃນປະເທດ ຫຼຸດຜ່ອນການນຳເຂົ້າເກືອຈາກຕ່າງປະເທດ ແລະ ໃນປີ 2025 ນີ້ ສປປ ລາວ ຈະກະກຽມປະກາດລົບລ້າງພະຍາດຂາດທາດ ໂປຕາຊຽມ ໄອໂອເດດ;
- ດ້ວຍເຫດນັ້ນ, ທຸກໂຮງງານຜະລິດເກືອໃນ ສປປ ລາວ ຕ້ອງໄດ້ສະໜອງເກືອທີ່ປະສົມທາດ ໂປຕາດຊຽມໄອໂອເດດ ໃຫ້ໄດ້ຕາມມາດຕະຖານຂອງກະຊວງສາທາລະນະສຸກ ຄື 60 PPm.

**ກຸ່ມກິດຈະກຳທີ 3: ປັບປຸງ ແລະ ເຊື່ອມສານ ລະບົບການອະນາໄມ, ນ້ຳສະອາດ ແລະ ສຸຂາພິບານ ດ້ວຍການເພີ່ມການເຂົ້າເຖິງ ແລະ ສົ່ງເສີມ ທາງດ້ານພຶດຕິກຳ ແລະ ພາກປະຕິບັດ ທາງດ້ານອະນາໄມ:**

**ຜົນສຳເລັດ ທາງການເຄື່ອນໄຫວ ກິດຈະກຳ ທີ່ພົ້ນເດັ່ນໃນປີ 2023:**

- ອີງຕາມ ຂໍ້ມູນ DHIS2 ເຫັນວ່າ:
    - 93.25% ຂອງຈຳນວນຄົວເຮືອນ ໄດ້ນຳໃຊ້ແຫຼ່ງນ້ຳກິນ ທີ່ໄດ້ຖືກປັບປຸງແລ້ວ ຖ້າທຽບໃສ່ (LSISII 83.50%) ເຫັນວ່າເພີ່ມຂຶ້ນ 9.75% ທຽບໃສ່ເປົ້າໝາຍປີ 2023 (93%) ເຫັນວ່າບັນລຸ;
    - 84.58% ອັດຕາສ່ວນຮ້ອຍຂອງຄົວເຮືອນ ທີ່ໄດ້ນຳໃຊ້ສິ່ງອຳນວຍຄວາມສະດວກດ້ານສຸຂາພິບານ ທີ່ໄດ້ຖືກປັບປຸງແລ້ວ ຖ້າທຽບໃສ່ (LSISII 73.8%) ເຫັນວ່າເພີ່ມຂຶ້ນ 10.78% ທຽບໃສ່ເປົ້າໝາຍປີ 2023 (83%) ເຫັນວ່າລື່ນຄາດໝາຍ.
- ການປະກາດບ້ານ ຊຈສ ມາຮອດປະຈຸບັນແມ່ນ ສາມາດປະກາດໄດ້ 03 ແຂວງ, 95 ເມືອງ ແລະ 7,753 ບ້ານ;

- ສຳເລັດການພັດທະນາປຶ້ມຄູ່ມືແນະນຳ ການຕິດຕາມ, ກວດກາ ແລະ ເຝົ້າລະວັງຄຸນນະພາບນ້ຳ;
- ສຳເລັດການສຳຫຼວດຄິດໄລ່ອອກແບບການກໍ່ສ້າງລະບົບນ້ຳໃຊ້ ໃຫ້ສະຖານທີ່ບໍລິການສາທາລະນະສຸກ 2 ແຂວງ ຄື ແຂວງຫົວພັນ: (ໂຮງໝໍສົບເບົາ, ເມືອງຮ້ຽມ), ແຂວງວຽງຈັນ (ເມືອງແມດ ແລະ ຫີນເຫີບ);
- ຈັດກອງປະຊຸມປຶກສາຫາລືວາງແຜນປະຈຳປີຂອງໂຄງການນ້ຳ 04 ແຂວງພາກເໜືອ ເພື່ອກະກຽມຕໍ່ໂຄງການ ທີ່ກົມອະນາໄມ ແລະ ສົ່ງເສີມສຸຂະພາບ;
- ເຂົ້າຮ່ວມກອງປະຊຸມເຊັນບົດບັນທຶກຄວາມເຂົ້າໃຈ (MoU) ໃນການຈັດຕັ້ງປະຕິບັດໂຄງການປັບປຸງເງື່ອນໄຂຊີວິດການເປັນຢູ່ຂອງຊຸມຊົນເຂດຫ່າງໄກສອກຫຼີກ ໂດຍການເຂົ້າເຖິງນ້ຳ ແລະ ສຸຂານາໄມ ເພື່ອຫຼຸດຜ່ອນຄວາມທຸກຍາກ ທີ່ແຂວງອຸດົມໄຊ;
- ລົງຕິດຕາມເຕັກນິກການກໍ່ສ້າງ ແລະ ແນະນຳດ້ານເຕັກການປົກປັກຮັກສາ ແລະ ນຳໃຊ້ລະບົບນ້ຳສະອາດໃນໂຮງຮຽນ ໂຄງການອາຫານທ່ຽງໃນໂຮງຮຽນ ຢູ່ 3 ແຂວງພາກໃຕ້ (ສາລະວັນ, ເຊກອງ ແລະ ອັດຕະປື);
- ສຳເລັດການ ມອບ-ຮັບ ໂຄງການກໍ່ສ້າງລະບົບນ້ຳສະອາດໃຫ້ຊຸມຊົນເປັນຜູ້ຄຸ້ມຄອງ-ນຳໃຊ້ ແລະ ນຳພາສ້າງ ຕັ້ງຄະນະກຳມະການຄຸ້ມຄອງນຳໃຊ້ລະບົບນ້ຳ ພ້ອມກັບ ກຳນົດໜ້າທີ່ ພາລະບົດບາດ ແລະ ກົດລະບຽບ ໃນວຽກງານດັ່ງກ່າວ ໃຫ້ແກ່ບ້ານ 3 ເປົ້າໝາຍ ຢູ່ເມືອງໂຂງ, ແຂວງຈຳປາສັກ ໂດຍແມ່ນງົບປະມານຂອງກອງທຶນພິເສດແມ່ນ້ຳ ຂອງ-ແມ່ນ້ຳລ້ານຊ້າງ;
- ລົງຕິດຕາມຊຸກຍູ້ການນຳໃຊ້ເຄື່ອງຜະລິດນ້ຳຢາກູ້ລີນ ຢູ່ແຂວງ ຜົ້ງສາລີ, ບໍ່ແກ້ວ, ອຸດົມໄຊ, ບໍລິຄຳໄຊ, ຊຽງຂວາງ, ສະຫວັນນະເຂດ, ຈຳປາສັກ, ສາລະວັນ ແລະ ອັດຕະປື;
- ລົງເກັບກຳຂໍ້ມູນການນຳໃຊ້ວິດຖ່າຍ ເພື່ອນຳໄປພັດທະນາລະບົບວິດຖ່າຍ ໃນຄົວເຮືອນໃຫ້ຖືກຫຼັກສຸຂານາໄມ ແລະ ປັບເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການເກີດໄພພິບັດທາງທຳມະຊາດ ທີ່ ເມືອງ ວາປີ ແຂວງ ສາລະວັນ ຮ່ວມກັບ ອົງການອຸຍນິເຊບ;
- ຈັດກອງປະຊຸມສະຫຼຸບໂຄງການສຶກສາຄົ້ນຄວ້າກໍ່ສ້າງຕົວແບບການຈັດຫານ້ຳສະອາດທີ່ປອດໄພໃນເຂດຊົນນະບົດ ຢູ່ 04 ແຂວງພາກໃຕ້ຂອງ ສປປ ລາວ ຜ່ານກອງທຶນພິເສດ ແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ ສົກປີ 2020-2022;
- ສຳເລັດການຄົ້ນຄວ້າ ປັບປຸງຮ່າງຄູ່ມືແຜນນ້ຳປອດໄພທີ່ທົນທານຕໍ່ພູມອາກາດ ແລະ ຮ່າງເຄື່ອງມືສື່ສານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃນວຽກງານນ້ຳສະອາດ;
- ຈັດຝຶກອົບຮົມການຄຸ້ມຄອງສຸຂາພິບານໃຫ້ມີຄວາມຍືນຍົງ ແລະ ການຂ້າເຊື້ອໃນຂຸມນ້ຳເປື້ອນ ໃຫ້ສະຖານທີ່ບໍລິການສາທາລະນະສຸກ (ວຽກງານໂຄວິດ-19) ທີ່ ແຂວງ ຜົ້ງສາລີ, ແຂວງ ຫຼວງນ້ຳທາ ແລະ ແຂວງຫົວພັນ;
- ລົງຝຶກອົບຮົມການປັບປຸງຄຸນນະພາບນ້ຳໃນໂຮງໝໍນ້ອຍ ຢູ່ ແຂວງຄຳມ່ວນ, ແຂວງບໍລິຄຳໄຊ, ແຂວງຊຽງຂວາງ ແລະ ແຂວງຫົວພັນ;
- ຈັດກອງປະຊຸມປຶກສາຫາລືດ້ານວິຊາການ ກ່ຽວກັບ ການພັດທະນາ ແລະ ອອກແບບວິດຖ່າຍຄົວເຮືອນ, ໂຮງຮຽນ, ໂຮງໝໍນ້ອຍ ແບບໃໝ່ ທີ່ຫ້ອງປະຊຸມສູນນ້ຳສະອາດ ຮ່ວມກັບອົງການອຸຍນິເຊບ;
- ຈັດຝຶກອົບຮົມນາຍຊ່າງ 10 ບ້ານ ວິດຖ່າຍຄົວເຮືອນແບບໃໝ່ ຂອງເມືອງວາປີ ທີ່ແຂວງ ສາລະວັນ ຮ່ວມກັບອົງການ ອຸຍນິເຊບ;
- ລົງຕິດຕາມການກໍ່ສ້າງວິດຖ່າຍແບບໃໝ່ ທີ່ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດທີ່ ເມືອງ ວາປີ ແຂວງ ສາລະວັນ;
- ຂະແໜງນ້ຳສະອາດ ຕ້ອນຮັບການມາພົບຂອງຜູ້ຕາງໜ້າອົງການ Enfants d'Asie ປຶກສາຫາລື ກ່ຽວກັບວຽກງານນ້ຳສະອາດ ທີ່ທາງອົງການ ມີແຜນຈະໃຫ້ການຊ່ວຍເຫຼືອຈຳນວນໜຶ່ງ ໃນແຂວງພາກເໜືອ;
- ຈັດຊຸດອົບຮົມ ວາງແຜນ, ປັບປຸງ ວຽກງານ WASH FIT ຢູ່ໂຮງໝໍຊຸມຊົນ ຂອງເມືອງທີ່ຢູ່ຕິດຊາຍແດນ, ທຶນແຜນງານ 10 ເສົາຄ້ຳ ຂອງໂຄງການ ກັນ, ຄວບຄຸມ ແລະ ຕອບໂຕ້ພະຍາດໂຄວິດ-19 ທີ່ແຂວງ ຫຼວງນ້ຳທາ, ບໍ່ແກ້ວ ແລະ ຜົ້ງສາລີ;
- ເກັບກຳ ແລະ ສັງລວມຂໍ້ມູນພື້ນຖານຂອງບ້ານເປົ້າໝາຍ ເພື່ອສະໜອງໃຫ້ແກ່ການຂຽນບົດສຶກສາຄວາມເປັນໄປໄດ້ ຂອງໂຄງການຍ່ອຍ 4x100 ຊຸດທີ 3 ຢູ່ແຂວງບໍ່ແກ້ວ, ໄຊຍະບູລີ, ຊຽງຂວາງ ແລະ ໄຊສົມບູນ

ໃນໂຄງການຫຼຸດຜ່ອນຄວາມທຸກຍາກຢູ່ຊົນນະບົດ ຂອງ ສປປ ລາວ ໂດຍທຶນການຊ່ວຍເຫຼືອຂອງລັດຖະບານ ສປ ຈີນ;

- ກະກຽມ ລົງສໍາຫຼວດ ຄວາມເປັນໄປໄດ້ ການກໍ່ສ້າງລະບົບນໍ້າສະອາດ ບ້ານຊຽງຈ່າ, ເມືອງນໍ້າບາກ, ແຂວງຫຼວງພະບາງ ໂດຍງົບປະມານຂອງກອງທຶນພິເສດ ແມ່ນໍ້າຂອງ-ແມ່ນໍ້າລ້ານຊ້າງ;
- ກວດກາ ແລະ ປະກອບຄໍາເຫັນ ໃສ່ປຶ້ມການຄິດໄລ່ ອອກແບບເຕັກນິກ ການກໍ່ສ້າງລະບົບນໍ້າສະອາດ ທີ່ແຂວງສະເໜີຫາສູນ ມີ 2 ແຂວງ ຄື: ແຂວງໄຊສົມບູນ ແລະ ແຂວງຄໍາມ່ວນ, ແຂວງລະ 4 ໂຄງການ;
- ເຂົ້າຮ່ວມກອງປະຊຸມການລາຍງານຜົນການປະເມີນໄລຍະກາງ ໃນການຮ່ວມມືດ້ານວິຊາການຂອງກະຊວງສາທາລະນະສຸກ ແລະ ກະຊວງພາຍໃນ ໃນການຈັດຕັ້ງປະຕິບັດແບບວິທີການເຊື່ອມຕໍ່ ແລະ ການວາງແຜນການ ຮ່ວມມືດ້ານວິຊາການໄລຍະຍາວ ທີ່ ໂຮງແຮມ ດອນຈັນພາເລດ;
- ລົງຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ຄະນະກໍາມະການນໍ້າ ແລະ ອະນາໄມຂັ້ນບ້ານ ດ້ານການວາງແຜນຮັບມື ໃນພາວະສຸກເສີນ ກໍລະນີເກີດໄພພິບັດທໍາມະຊາດ ທີ່ມີຜົນກະທົບຕໍ່ວຽກງານ ນໍ້າ, ສຸຂະພິບານ ແລະ ອະນາໄມ ເພື່ອຫຼຸດຜ່ອນການປະເຊີນໜ້າກັບພະຍາດ ໃນແຂວງທີ່ມັກເກີດໄພພິບັດ ທີ່ ແຂວງ ສາລະວັນ;
- ຝຶກອົບຮົມ ການຕິດຕັ້ງ ແລະ ນໍາໃຊ້ ເຄື່ອງຜະລິດນໍ້າດື່ມເຄື່ອນທີ່ ທີ່ ສູນນໍ້າສະອາດ ແລະ ອະນາໄມສິ່ງແວດລ້ອມ;
- ລົງຕອບໂຕ້ໄພພິບັດນໍ້າຖ້ວມທີ່ເມືອງຄູນຄໍາ, ມະຫາໄຊ ແລະ ຫີນບູນ ທີ່ແຂວງ ຄໍາມ່ວນ.
- ສໍາເລັດການຂຶ້ນແຜນ ຂໍນໍາໃຊ້ງົບປະມານຈາກອົງການອຸຍນີເຊບ ເພື່ອລົງເກັບກໍາຂໍ້ມູນ ແລະ ວາງແຜນ ຟື້ນຟູ ລະບົບນໍ້າ ແລະ ວິດຖ່າຍ ທີ່ໄດ້ຮັບຜົນກະທົບເສຍຫາຍຈາກໄພນໍ້າຖ້ວມ ໃນ 5 ແຂວງ 11 ເມືອງ;
- ເຂົ້າຮ່ວມອົບຮົມການເກັບກໍາຂໍ້ມູນ ODF ທາງອອນລາຍ ໃຫ້ແກ່ພະນັກງານໂຮງໝໍນ້ອຍ ຂອງ 13 ເມືອງທີ່ ຍັງບໍ່ໄດ້ຮັບເປັນເມືອງຢຸດຕິການຖ່າຍຊະຊາຍ ທີ່ ແຂວງ ສະຫວັນນະເຂດ;
- ລົງຕິດຕາມຊຸກຍູ້ວຽກງານຊຸມຊົນເປັນເຈົ້າການດ້ານສຸຂານາໄມ (ຊຈສ) ທີ່ເມືອງຊໍາເໜືອ, ແຂວງຫົວພັນ;
- ລົງຕິດຕາມຊຸກຍູ້ການກໍ່ສ້າງ ການຄຸ້ມຄອງຊົມໃຊ້ ການປົກປັກຮັກສາລະບົບນໍ້າແຈກຢາຍເຂົ້າຄົວເຮືອນ ຢູ່ 3 ບ້ານ ເມືອງ ໂຂງ, ແຂວງ ຈໍາປາສັກ ໂດຍທຶນສະໜັບສະໜູນຂອງແມ່ນໍ້າຂອງ-ແມ່ນໍ້າລ້ານຊ້າງ.

**ກຸ່ມກິດຈະກໍາທີ 4: ກັນ ແລະ ຄວບຄຸມພະຍາດ ແລະ ໃຫ້ຢາຂ້າແມ່ທ້ອງ ສໍາລັບເດັກນ້ອຍອາຍຸລຸ່ມ 05 ປີ:**

**ຜົນສໍາເລັດ ທາງການເຄື່ອນໄຫວ ກິດຈະກໍາ ທີ່ພົ້ນເດັ່ນໃນປີ 2023:**

- ອີງຕາມ ຂໍ້ມູນ DHISII ເຫັນວ່າ:
    - ອັດຕາສ່ວນຮ້ອຍຂອງເດັກອາຍຸ 12-59 ເດືອນໄດ້ຮັບຢາຂ້າແມ່ທ້ອງ 47.9% ທຽບໃສ່ເປົ້າໝາຍປີ 2023 (76%) ບໍ່ທັນບັນລຸ;
    - 51% ອັດຕາສ່ວນຮ້ອຍຂອງເດັກນ້ອຍ ອາຍຸລຸ່ມ 5 ປີ ທີ່ເປັນພະຍາດຖອກທ້ອງ ຜູ້ທີ່ໄດ້ຮັບການປິ່ນປົວຢູ່ສະຖານທີ່ບໍລິການສຸຂະພາບ;
    - 96.2% ອັດຕາສ່ວນຂອງເດັກນ້ອຍອາຍຸລຸ່ມ 2 ປີ ທີ່ໄດ້ຮັບວັກຊີນກັນພະຍາດຄໍບ ທຽບໃສ່ຄາດໝາຍ ປີ 2023 (85%) ບັນລຸ.
- ກອງປະຊຸມເຜີຍແຜ່ປຶ້ມຄູ່ມື້ ແລະ ປຶກສາຫາລື ກ່ຽວກັບ ການແຈກຢາຍຢາວິຕາມິນອາ, ຢາຂ້າແມ່ທ້ອງ, ຢາທາດເຫຼັກ ໃຫ້ທົ່ວປະເທດ ໂດຍຮ່ວມກັບ ສູນສະໜອງຢາ ແລະ ອຸປະກອນການແພດ, ສູນສຸຂະພາບແມ່ ແລະ ເດັກ, ສູນສົ່ງເສີມການສຶກສາສຸຂະສຶກສາສຸຂະສຶກສາສຸຂະສຶກສາ
- ຕິດຕາມກວດກາອະນາໄມສິ່ງແວດລ້ອມ ແລະ ອະນາໄມອາຫານສົດໃນຕະຫຼາດໃຫ້ຖືກຕ້ອງຕາມລະບຽບການທີ່ກໍານົດໄວ້ ຢູ່ເມືອງຄໍາເກີດ ແລະ ເມືອງປາກກະດິງ, ແຂວງບໍລິຄໍາໄຊ;
- ເຂົ້າຮ່ວມກອງປະຊຸມປຶກສາຫາລື ປັບປຸງນະໂຍບາຍ, ຍຸດທະສາດ ແລະ ແຜນປະຕິບັດງານການກັນ ແລະ ຄວບຄຸມພະຍາດເຂດຮ້ອນທີ່ຄວນເອົາໃຈໃສ່ເພີ່ມເຕີມ;
- ເຂົ້າຮ່ວມກອງປະຊຸມ A Round table dialogue of Asia-Pacific Champion Governments for the 2023 UN High-level Meeting on Universal Health coverage (UHC), Pandemic Prevention, Preparedness and Pesponse (PPPR) and Tuberculosis (TB).

**ກຸ່ມກິດຈະກຳ 10: ໃຫ້ຈຸລະສານອາຫານເສີມ, ຢາຂ້າແມ່ທ້ອງ, ໃຫ້ວັກຊີນກັນພະຍາດ ແລະ ການບໍລິການສາທາລະນະສຸກອື່ນໆ ພາຍໃນໂຮງຮຽນ ດ້ອຍການ ຈັດກິດຈະກຳ ຮ່ວມກັນ ລະຫວ່າງ ກະຊວງການສຶກສາທິການ ແລະ ກິລາ ແລະ ສາທາລະນະສຸກ:**

**ຜົນສຳເລັດ ທາງການເຄື່ອນໄຫວ ກິດຈະກຳ ທີ່ພົ້ນເດັ່ນໃນ ປີ 2023:**

- ອັດຕາສ່ວນຮ້ອຍຂອງເດັກນັກຮຽນຍິງຊັ້ນມັດທະຍົມ ທີ່ໄດ້ກິນທາດເຫຼັກ-ອາຊິດໂຟລິກ (ສຶກສາທິການ ແລະ ກິລາ ແລະ ສາທາລະນະສຸກ ຮ່ວມກັນ) ແມ່ຍິງອາຍຸ 12 ຫາ 25 ປີ ທີ່ໄດ້ກິນທາດເຫຼັກ-ອາຊິດໂຟລິກ ອາທິດລະເມັດ ບໍ່ສຳເລັດ ຍ້ອນ ປັດຈຸບັນ ຢາທາດເຫຼັກ-ອາຊິດໂຟລິກ ສຳລັບກຸ່ມອາຍຸແມ່ຍິງອາຍຸ 12 ຫາ 25 ປີ ຍັງບໍ່ທັນມີງົບປະມານ ແລະ ຜູ້ສະໜັບສະໜູນ;
- ອັດຕາສ່ວນຮ້ອຍຂອງເດັກນັກຮຽນໃນໂຮງຮຽນ ປະຖົມທີ່ໄດ້ກິນຢາຂ້າແມ່ທ້ອງ ແຍກຕາມເພດ: ຍິງ-ຊາຍ (ສຶກສາທິການ ແລະ ກິລາ ແລະ ສາທາລະນະສຸກ ຮ່ວມກັນ) ປະຕິບັດໄດ້ 77% ຈາກບົດລາຍງານກົມຄວບຄຸມພະຍາດຕິດຕໍ່;
- ພິມປື້ມຄູ່ມືແນະນຳການກິນຢາຂ້າແມ່ທ້ອງໃນໂຮງຮຽນປະຖົມ ແລະ ມັດທະຍົມຕອນຕົ້ນ ສະບັບປັບປຸງໃໝ່ ໄດ້ຈຳນວນ 11,000 ຫົວ, ໃຊ້ງົບປະມານທັງໝົດ 12,000 USD ຫຼື 216,000,000 ກີບ;
- ສຳເລັດກອງປະຊຸມປຶກສາຫາລື ກ່ຽວກັບ ວຽກການອະນາໄມເດັກຍິງ ເວລາເປັນປະຈຳເດືອນ ຢູ່ໃນໂຮງຮຽນ ຜູ້ເຂົ້າຮ່ວມຈຳນວນ 27 ຄົນ, ຍິງ 14 ຄົນ;
- ສຳເລັດຈັດຕັ້ງການກິນຢາຂ້າແມ່ທ້ອງໃນໂຮງຮຽນປະຖົມ ແລະ ມັດທະຍົມສຶກສາຕອນຕົ້ນ ໃນຂອບເຂດທົ່ວປະເທດ ໃນເດືອນຕຸລາ 2023 ສຳເລັດຢູ່ໃນ 120 ເມືອງ, ຍັງ 28 ເມືອງ;
- ສຳເລັດສ້າງຄວາມເຂັ້ມແຂງໃນການສອດແຊກຄວາມຮູ້ພະຍາດວໍ້ ແລະ ການກິນຢາຂ້າແມ່ທ້ອງໃນໂຮງຮຽນ ແຂວງຊຽງຂວາງ, ຫົວພັນ, ຜົ້ງສາລີ ແລະ ອຸດົມໄຊ, ຜູ້ເຂົ້າຮ່ວມ ຈຳນວນ 296 ຄົນ, ຍິງ 142 ຄົນ;
- ສຳເລັດລົງຕິດຕາມການສອດແຊກຄວາມຮູ້ພະຍາດວໍ້ ແລະ ການກິນຢາຂ້າແມ່ທ້ອງໃນໂຮງຮຽນ ແຂວງບໍ່ແກ້ວ, ຫົວພັນ ແລະ ຄຳມ່ວນ ຊຶ່ງໄດ້ຊຸກຍູ້ຊ່ວຍເຫຼືອຄູ 64 ທ່ານ ແລະ ສຳພາດ ນັກຮຽນ ຈຳນວນ 760 ຄົນ;
- ສຳເລັດຝຶກອົບຮົມ ແລະ ລົງຕິດຕາມສອນສອດແຊກຄວາມຮູ້ ກ່ຽວກັບ ເພດສຶກສາ, ທັກສະຊີວິດໃນແຂວງຫຼວງພະບາງ, ສະຫວັນນະເຂດ ຈຳນວນຜູ້ເຂົ້າຮ່ວມ 98 ຄົນ, ຍິງ 49 ຄົນ;
- ສຳເລັດຝຶກອົບຮົມການສອນ ສອດແຊກຄວາມຮູ້ ກ່ຽວກັບ ພະຍາດໃບໄມ້ໃນເລືອດ ໃຫ້ແກ່ຄູສອນໃນເມືອງມູນລະປະໂມກ ແລະ ເມືອງແຂວງ, ແຂວງຈຳປາສັກ ຜູ້ເຂົ້າຮ່ວມ ຈຳນວນ 198 ຄົນ, ຍິງ 104 ຄົນ;
- ສຳເລັດແຈກຢາຍປື້ມຄູ່ມືກິນຢາຂ້າແມ່ທ້ອງໃນໂຮງຮຽນປະຖົມ ແລະ ມັດທະຍົມສຶກສາຕອນຕົ້ນ ໃຫ້ທຸກໂຮງຮຽນໃນທົ່ວປະເທດ ແລະ ແຈກຢາຍແຜ່ນພັບ, ໂປດສະເຕີຄວາມຮູ້ພະຍາດວໍ້ ແລະ ເພດສຶກສາໃຫ້ໂຮງຮຽນໃນແຂວງເປົ້າໝາຍ.

**ກຸ່ມກິດຈະກຳ 13: ສົ່ງເສີມ ໃຫ້ມີໜ່ວຍບໍລິການ ໃນການຄຸ້ມຄອງການຂາດສານອາຫານກະທັນຫັນແບບເຊື່ອມສານ ແລະ ການບໍລິການໂພຊະນາບຳບັດ ຢູ່ໃນໂຮງໝໍ (IMAM)**

**ຜົນສຳເລັດ ທາງການເຄື່ອນໄຫວ ກິດຈະກຳ ທີ່ພົ້ນເດັ່ນໃນປີ 2023:**

- ຢູ່ໃນລະບົບຂໍ້ມູນຂ່າວສານທາລະນະສຸກ (DHIS2) 51.9% ຂອງຈຳນວນສະຖານທີ່ບໍລິການສຸຂະພາບທັງໝົດໄດ້ບໍລິການ (IMAM) ທຽບໃສ່ຄາດໝາຍ ແມ່ນ 60% ບໍ່ບັນລຸ;
- ສຳເລັດກອງປະຊຸມ ຄະນະກຳມະການການຄຸ້ມຄອງການຂາດສານອາຫານ ທີ່ ໂຮງແຮມດອນຈັນພາເຣດ, ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມທັງໝົດ 38 ທ່ານ;
- ຈັດກອງປະຊຸມ 06 ເດືອນຕົ້ນປີ ຂອງຄະນະກຳມະການການຄຸ້ມຄອງການຂາດສານອາຫານກະທັນຫັນແບບເຊື່ອມສານ (IMAM) ໃນວັນທີ 21 ສິງຫາ 2023 ທີ່ໂຮງແຮມລາວພລາຊ່າ, ນະຄອນຫຼວງວຽງຈັນ;
- ສຳເລັດການປຶກສາຫາລືກັບ ທ່ານ ຜູ້ອຳນວຍການໂຮງໝໍ ເຊດຖາທິຣາດ ແລະ ທ່ານ ຮອງຜູ້ອຳນວຍການໂຮງໝໍມະໂຫສົດ ກ່ຽວກັບ ວຽກງານ ສົ່ງເສີມການລ້ຽງລູກດ້ວຍນ້ຳນົມແມ່ ແລະ ການປິ່ນປົວເດັກນ້ອຍຂາດສານອາຫານຮ້າຍແຮງໂຮງໝໍຂັ້ນສູນກາງ ໃນການເປີດສູນປິ່ນປົວເດັກຂາດສານອາຫານຄົບວົງຈອນ;

- ສຳເລັດກອງປະຊຸມທາງດ້ານວິຊາການຂອງວຽກງານການຄຸ້ມຄອງການຂາດສານອາຫານ ທີ່ ໂຮງແຮມດອນຈັນພາເຣດ ມີຜູ້ເຂົ້າຮ່ວມທັງໝົດ 55 ທ່ານ;
- ສຳເລັດກອງປະຊຸມທາງດ້ານວິຊາການ ກ່ຽວກັບ ເຄື່ອງມືຕິດຕາມຊຸກຍູ້ ວຽກງານການຄຸ້ມຄອງການຂາດສານອາຫານ ມີຜູ້ເຂົ້າຮ່ວມທັງໝົດ 27 ທ່ານ;
- ເຂົ້າຮ່ວມກອງປະຊຸມວິຊາການ ການແພດສຶກສາຕໍ່ເນື່ອງ ຂອງສະມາຄົມແພດເດັກລາວ ຄັ້ງທີ XVIII ປະຈໍາປີ 2023 ໃນຫົວຂໍ້ ‘’ແນວທາງປະຕິບັດຕໍ່ພາວະສຸກເສີນທີ່ພົບເລື້ອຍໃນເດັກ, ນະຄອນຫຼວງວຽງຈັນ;
- ເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບ Asean Guideline on Minimum Standards for the Management of Child Wasting in National Health Systems ເປັນກອງປະຊຸມທາງໄກ;
- ເຂົ້າຮ່ວມກອງປະຊຸມປຶກສາຫາລື ແລະ ຜ່ານຮ່າງຄູ່ມືມາດຕະຖານການປະຕິບັດງານສຳລັບການບໍລິການເດັກເຈັບແບບເຊື່ອມສານ (SOP SO5);
- ສຳເລັດການຈັດຝຶກອົບຮົມການຄຸ້ມຄອງການຂາດສານອາຫານ OPD ຈຳນວນ 08 ຄັ້ງ ໃຫ້ແກ່ 07 ແຂວງ 49 ເມືອງ ແລະ 97 ໂຮງໝໍນ້ອຍ ມີຜູ້ເຂົ້າຮ່ວມທັງໝົດ 298 ທ່ານ;
- ສຳເລັດການຈັດຝຶກອົບຮົມການຄຸ້ມຄອງການຂາດສານອາຫານ IPD ຈຳນວນ 02 ຄັ້ງ ໃຫ້ແກ່ 18 ແຂວງ ມີຜູ້ເຂົ້າຮ່ວມທັງໝົດ 49 ທ່ານ.
- ສຳເລັດການອົບຮົມການຄຸ້ມຄອງອຸປະກອນ ແລະ ການຕິດຕາມຢາໂພຊະນາການ ທີ່ເມືອງບຸນເໜືອ, ແຂວງ ຜົ້ງສາລີ;
- ສຳເລັດຝຶກອົບຮົມ (CIMAM) ໃຫ້ 03 ແຂວງ ຄື ແຂວງ ວຽງຈັນ, ບໍລິຄຳໄຊ ແລະ ຫົວພັນ ໂດຍມີຜູ້ເຂົ້າຮ່ວມທັງໝົດ 15 ທ່ານ;
- ສຳເລັດອົບຮົມ ການຄຸ້ມຄອງກໍລະນີຂາດສານອາຫານກະທັນຫັນແບບເຊື່ອມສານ ຢູ່ເມືອງບຸນເໜືອ, ແຂວງຜົ້ງສາລີ;
- ສຳເລັດຈັດອົບຮົມການປິ່ນປົວເດັກຂາດສານອາຫານພາກາວດເຂດນອກ ຢູ່ຂັ້ນໂຮງໝໍຊຸມຊົນ ແລະ ໂຮງໝໍນ້ອຍ ພ້ອມທັງ ລົງຕິດຕາມກິດຈະກຳການການກັ່ນຕອງເດັກນ້ອຍຂາດສານອາຫານໃນຂັ້ນຊຸມຊົນ;
- ສຳເລັດການເຂົ້າຮ່ວມ ເປັນຄູຝຶກ ໃນການຝຶກອົບຮົມ ການຄຸ້ມຄອງກໍລະນີເດັກຂາດສານອາຫານກະທັນຫັນແບບເຊື່ອມສານແຫ່ງຊາດ 22 ທ່ານ;
- ສຳເລັດຈັດອົບຮົມການປິ່ນປົວເດັກຂາດສານອາຫານພາກາວດເຂດນອກ ຢູ່ຂັ້ນໂຮງໝໍຊຸມຊົນ ແລະ ໂຮງໝໍນ້ອຍ ພ້ອມທັງ ລົງຕິດຕາມກິດຈະກຳ ການກັ່ນຕອງເດັກນ້ອຍຂາດສານອາຫານໃນຂັ້ນຊຸມຊົນ ທີ່, ແຂວງສະຫວັນນະເຂດ ແລະ ແຂວງຜົ້ງສາລີ;
- ອົບຮົມ ການຄຸ້ມຄອງເດັກຂາດສານອາຫານກະທັນຫັນຮ້າຍແຮງແບບເຊື່ອມສານ ໃນເດັກລຸ່ມ 05 ປີ ທີ່ ແຂວງ ອັດຕະປື ແລະ ເຊກອງ;
- ສຳເລັດການຝຶກອົບຮົມການວັດແທກຮ່າງກາຍໃຫ້ກັບ 09 ເມືອງ ແລະ ຕິດຕາມການຝຶກອົບຮົມໃຫ້ພະນັກງານໂຮງໝໍນ້ອຍ ທີ່ຫ້ອງການສາທາລະນະສຸກເມືອງ ນາຊາຍທອງ, ຫາດຊາຍຟອງ, ໄຊທານີ ແລະ ນະຄອນຫຼວງວຽງຈັນ;
- ສຳເລັດການຝຶກອົບຮົມ ການວັດແທກຮ່າງກາຍເດັກລຸ່ມ 05 ປີ ແລະ ລະບົບການຄຸ້ມຄອງການສະໜອງຂໍ້ມູນເລື່ອງໂພຊະນາການ (NIMSC) ຮ່ວມກັບ ອົງການ CARITAS ໃຫ້ພະນັກງານຫ້ອງການສາທາເມືອງ ແລະ ພະນັກງານໂຮງໝໍນ້ອຍ ຢູ່ 04 ແຂວງ ຄື ແຂວງ ຊຽງຂວາງ, ບໍລິຄຳໄຊ, ວຽງຈັນ ແລະ ສະຫວັນນະເຂດ ໂດຍມີຜູ້ເຂົ້າຮ່ວມທັງໝົດ 27 ທ່ານ ທີ່ຫ້ອງປະຊຸມສູນໂພຊະນາການ;

| ສັງລວມ ຄວາມຄືບໜ້າການຝຶກອົບຮົມ IMAM 2023 | | | | | |
|---|---|---|---|---|---|
| ພາກສ່ວນ | ຈໍານວນສະຖານທີ່ບໍລິການສຸຂະພາບທັງໝົດ | ຈໍານວນສະຖານທີ່ບໍລິການສຸຂະພາບຢ່າງນ້ອຍ 01 ຄົນໄດ້ ຮັບການຝຶກອົບຮົມແລ້ວ | ຈໍານວນສະຖານທີ່ບໍລິການສຸຂະພາບທີ່ບໍ່ທັນໄດ້ຮັບການຝຶກອົບຮົມ | ເປີເຊັນ (%) | ຈໍານວນຜູ້ໄດ້ຮັບການຝຶກອົບຮົມທັງໝົດ |
| ໂຮງໝໍສູນກາງ | 7 | 7 | 0 | 100% | 18 |
| ໂຮງໝໍແຂວງ | 17 | 17 | 0 | 100% | 52 |
| ເມືອງ | 140 | 75 | 73 | 53.5% | 151 |
| ສຸກສາລາ | 1,078 | 89 | 989 | 8% | 178 |
| ບ້ານ | 8,514 | 345 | 8,169 | 4% | 422 |

**ກຸ່ມກິດຈະກໍາ 16: ສົ່ງເສີມການເຊື່ອມສານ ວຽກງານໂພຊະນາການ ເຂົ້າໃນວຽກງານຮັກສາສຸຂະພາບຂັ້ນຕົ້ນ ຜົນສໍາເລັດ ທາງການເຄື່ອນໄຫວ ກິດຈະກໍາ ທີ່ພົ້ນເດັ່ນໃນປີ 2023:**

- ສໍາລັບບ້ານໂພຊະນາການຕົວແບບແມ່ນໄດ້ປະກາດ 04 ບ້ານ ເທົ່າກັບ 22.22% ຂອງແຜນການ 18 ບ້ານ ແມ່ນ ບໍ່ບັນລຸ;
- ສໍາເລັດກອງປະຊຸມດ້ານວິຊາການ ໃນການປັບປຸງຕົວຊີ້ບອກ ແລະ ນິຍາມ ກ່ຽວກັບ ບ້ານໂພຊະນາການຕົວແບບ ກັບຂະແໜງການ;
- ກອງປະຊຸມປຶກສາຫາລື ແລະ ຖອດຖອນບົດຮຽນ ກ່ຽວກັບ ວຽກງານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ ໃນລະດັບຊຸມຊົນ (RMNCH);
- ໄດ້ສໍາເລັດການເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ກ່ຽວກັບ ວຽກງານການໃຫ້ຄໍາປຶກສາແກ່ຄູ່ແຕ່ງງານໃໝ່ ນີ້ ນະຄອນຫຼວງວຽງຈັນ ແລະ ແຂວງ ວຽງຈັນ ໂດຍການຮ່ວມມືກັບກະຊວງພາຍໃນ;
- ກອງປະຊຸມປຶກສາຫາລື ຄົ້ນຄວ້າ ປະກອບຄໍາເຫັນ ແລະ ຮຽບຮຽງ ໃສ່ຮ່າງກົດໝາຍວ່າດ້ວຍຮັກສາສຸຂະພາບຂັ້ນຕົ້ນ ຢູ່ກະຊວງສາທາລະນະສຸກ;
- ອົບຮົມໃຫ້ພະນັກງານສາທາລະນະສຸກເມືອງ ກ່ຽວກັບ ການເກັບກໍາຂໍ້ມູນ ແລະ ປະເມີນສະຖານທີ່ບໍລິການສາທາລະນະສຸກ ແລະ ອາສາສະໝັກສາທາລະນະສຸກບ້ານ (ອສບ) ໃນ 03 ແຂວງ ຄື ແຂວງຄໍາມ່ວນ, ສາລະວັນ ແລະ ອັດຕະປື;
- ກອງປະຊຸມ ກະກຽມ ຝຶກອົບຮົມ ແລະ ສ້າງເຄື່ອງມືອົບຮົມ ອາສາສະໝັກສາທາລະນະສຸກບ້ານ (ອສບ) ໃຫ້ຄູຝຶກຂັ້ນສູນກາງ ກ່ຽວກັບ ຄູ່ມືອົບຮົມວຽກງານເຊື່ອມສານການຄຸ້ມຄອງກໍລະນີ ສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ໃນລະດັບຊຸມຊົນ ''Integrated Community Case Management'' (ICCM);
- ສຸມໃສ່ຈັດຕັ້ງປະຕິບັດ 02 ໂຄງການບຸລິມະສິດ ຄື ໂຄງການບ້ານສາທາລະນະສຸກແບບຢ່າງ ແລະ ໂຄງການບໍລິການສຸຂະພາບແບບເຊື່ອມສານໃນຊຸມຊົນ ໃຫ້ມີຄຸນນະພາບ ແລະ ຍືນຍົງ;
- ສໍາເລັດຈັດກອງປະຊຸມຊີ້ແຈງ 03 ແຂວງ ຄື ແຂວງຫົວພັນ, ແຂວງອຸດົມໄຊ ແລະ ແຂວງຊຽງຂວາງ ໃນວຽກງານໂພຊະນາການ ບ້ານເຂດ 02 ແລະ ເຂດ 03 ຂອງໂຄງການ ການເຂົ້າເຖິງການບໍລິການສຸຂະພາບ ແລະ ໂພຊະນາການ ແລະ ລົງຕິດຕາມວຽກງານໂພຊະນາການ ການເຄື່ອນທີ່ເຊື່ອມສານບ້ານ ເຂດ 02 ເຂດ 03 ຢູ່ 04 ແຂວງ ຄື ແຂວງຜົ້ງສາລີ, ຫົວພັນ, ອຸດົມໄຊ ແລະ ຊຽງຂວາງ ເຊິ່ງສາມາດປະຕິບັດໄດ້ 441 ບ້ານ;
- ການປະຕິບັດບ້ານເຄື່ອນທີ່ເຊື່ອມສານ ບ້ານເຂດ 02 ແລະ ເຂດ 03 ໃນ 04 ແຂວງ ໄດ້ຮອບທີ 01 ປະຕິບັດໄດ້ 64.6%, ຮອບທີ 02 ປະຕິບັດໄດ້ 37.6% ແລະ ຮອບທີ 03 ປະຕິບັດໄດ້ 3%. (ສ່ວນແຂວງອື່ນໆ ໄດ້ຈັດຕັ້ງປະຕິບັດ ແຕ່ບໍ່ໄດ້ເອົາເຂົ້າໃນລະບົບ DHIS2);
- ສໍາເລັດກອງປະຊຸມ ຄົ້ນຄວ້າ ແລະ ປຶກສາຫາລື ເພື່ອພັດທະນາຄູ່ມືອົບຮົມ ວຽກງານເຊື່ອມສານການຄຸ້ມຄອງກໍລະນີ ສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ໃນລະດັບຊຸມ ''ICCM'';

- ສໍາເລັດກອງປະຊຸມ ແລກປ່ຽນບົດຮຽນ ໃນການຈັດຕັ້ງປະຕິບັດ ການສ້າງບ້ານຕົວແບບໂພຊະນາການ ເພື່ອຖອດຖອນບົດຮຽນ ແລະ ວາງແຜນ ໃນຕໍ່ໜ້າກັບຄູ່ຮ່ວມພັດທະນາ;
- ເຂົ້າຮ່ວມກອງປະຊຸມການວາງແຜນຈັດຕັ້ງປະຕິບັດ ການສ້າງບ້ານໂພຊະນາການຕົວແບບ ໃນວັນທີ 07 ສິງຫາ 2023 ທີ່ຫ້ອງປະຊຸມຫ້ອງວ່າການປົກຄອງເມືອງ ໄຊຈໍາພອນ, ແຂວງ ບໍລິຄໍາໄຊ, ໃນວັນທີ 09 ສິງຫາ 2023 ທີ່ຫ້ອງປະຊຸມກະສິກໍາ ແລະ ປ່າໄມ້, ເມືອງ ຜາໄຊ, ແຂວງ ຊຽງຂວາງ, ໃນວັນທີ 11 ສິງຫາ 2023 ທີ່ຫ້ອງປະຊຸມຫ້ອງການສາທາລະນະສຸກເມືອງທຸລະຄົມ, ແຂວງວຽງຈັນ;
- ເຂົ້າຮ່ວມກອງປະຊຸມປຶກສາຫາລື ແລະ ທົບທວນຄືນການຈັດຕັ້ງປະຕິບັດກິດຈະກໍາ ກ່ຽວກັບ ຄູ່ມືອົບຮົມວຽກງານການຂະຫຍາຍການເຊື່ອມສານການຄຸ້ມຄອງກໍລະນີສຸຂະພາບໄວຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ໃນລະດັບຊຸມຊົນ ໃນວັນທີ 09 ສິງຫາ 2023 ທີ່ຫ້ອງປະຊຸມກົມອະນາໄມ ແລະ ສົ່ງເສີມສຸຂະພາບ (ຊັ້ນ 03) ກະຊວງສາທາລະນະສຸກ;
- ເຂົ້າຮ່ວມກອງປະຊຸມ ປຶກສາຫາລື ກ່ຽວກັບ ການເຊື່ອມສານ ອາສາສະໝັກບ້ານ (ອສບ) ຂອງແມ່ ແລະ ເດັກ ສັກຢາກັນພະຍາດ ແລະ ອັກເສບປອດ ຕ່າງໆ ຂອງກົມອະນາໄມ ແລະ ສົ່ງເສີມສຸຂະພາບ ເຊື່ອມສານເຂົ້າກັບອາສາສະໝັກໄຂ້ມາລາເຣຍ ໂດຍນໍາໃຊ້ທຶນຂອງກອງທຶນໂລກ ປີ 2024-2026;
- ເຂົ້າຮ່ວມກອງປະຊຸມປັບປຸງ ແລະ ການທົດລອງຊຸມຊົນ ກ່ຽວກັບ ເຄື່ອງມືສຸຂະສຶກສາ ເພື່ອຫຼຸດຜ່ອນປັດໄຈສ່ຽງຂອງພະຍາດບໍ່ຕິດຕໍ່ (NCD) ສໍາລັບຊຸມຊົນ ຂອງອາສາສະໝັກສາທາລະນະສຸກບ້ານ ທີ່ຫ້ອງວ່າການປົກຄອງເມືອງ ວັງວຽງ, ແຂວງວຽງຈັນ;
- ຈັດກອງປະຊຸມປັບປຸງ ແລະ ຮຽບຮຽງຮ່າງກົດໝາຍວ່າດ້ວຍການຮັກສາສຸຂະພາບຂັ້ນຕົ້ນ ແຕ່ວັນທີ 26-27 ສິງຫາ 2023 ທີ່ ທ່າລາດ, ແຂວງວຽງຈັນ;
- ເຂົ້າຮ່ວມກອງປະຊຸມປຶກສາຫາລື ວຽກງານຮ່ວມມືລະຫວ່າງ ສປປ ລາວ ແລະ ຣາຊະອານາຈັກໄທ (ໂຄງການ Model Development of Intergrated Nutrition Services and Community Engagement) ໃນວັນທີ 23 ກຸມພາ 2023 ເປັນກອງປະຊຸມທາງໄກ ຮ່ວມກັບ ປະເທດໄທ;
- ຈັດຊຸດອົບຮົມ TOT ສໍາລັບແຂວງ ບໍລິຄໍາໄຊ (ບໍລິຄັນ, ວຽງທອງ ແລະ ຄໍາເກີດ) ແລະ ແຂວງ ບໍ່ແກ້ວ (ເມິງ, ຜາອຸດົມ, ປາກທາ) ກ່ຽວກັບ ວຽກງານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມຂັ້ນຊຸມຊົນ, ທີ່ ເມືອງ ວັງວຽງ ແຂວງ ວຽງຈັນ;
- ເຂົ້າຮ່ວມຕິດຕາມການຝຶກອົບຮົມຂອງຄູຝຶກຂັ້ນແຂວງ ແລະ ເມືອງ ກ່ຽວກັບ ຄູ່ມືວຽກງານເຊື່ອມສານການຄຸ້ມຄອງກໍລະນີ ສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ໃນລະດັບຊຸມຊົນ ທີ່ແຂວງວຽງຈັນ, ອຸດົມໄຊ, ບໍລິຄໍາໄຊ ແລະ ບໍ່ແກ້ວ;
- ເຂົ້າຮ່ວມຕິດຕາມການຝຶກອົບຮົມ ການນໍາໃຊ້ເຄື່ອງມືຊ່ວຍ ໃນການປະຕິບັດຕົວຈິງ ຂອງ ອສບ ໃນການຢ້ຽມຢາມຄົວເຮືອນ ເພື່ອໃຫ້ຄໍາປຶກສາວຽກງານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ ໃນຊຸມຊົນ ທີ່ (ເມືອງນອງ, ເມືອງເຊໂປນ), ແຂວງ ສະຫວັນນະເຂດ ແລະ ນະຄອນປາກເຊ, ແຂວງຈໍາປາສັກ;
- ກອງປະຊຸມປຶກສາຫາລື ກ່ຽວກັບ ການນໍາໃຊ້ບັດໃຫ້ຄະແນນເດັກ (Child Scorecard) ແລະ ແຜນໃນການນໍາໃຊ້ຂໍ້ມູນ (Data Use Plan) ສໍາລັບແຜນງານໜຶ່ງດຽວທີ່ມີສ່ວນຮ່ວມຫຼາຍຂະແໜງການ ເພື່ອປັບປຸງວຽກງານໂພຊະນາການ ຢູ່ 04 ແຂວງ ພາກເໜືອ ທີ່ຫ້ອງປະຊຸມກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ.

**2. ຂະແໜງກະສິກຳ ແລະ ປ່າໄມ້:**

**ມີ 04 ກຸ່ມກິດຈະກຳ ແລະ ມີ 07 ຕົວຊີ້ບອກ ເຊິ່ງຈະມີການເກັບກຳ ແລະ ລາຍງານປີລະຄັ້ງ ເຊິ່ງເຫັນໄດ້ວ່າ**

| ລ/ດ | ລຳດັບຕົວຊີ້ບອກ | ຂໍ້ມູນພື້ນຖານ 2020 | ປະຕິບັດໄດ້ 2021 | ປະຕິບັດໄດ້ໃນ 2022 | ປະຕິບັດໄດ້ ໃນປີ 2023 | ເປົ້າໝາຍ 2023 | ເປົ້າໝາຍ 2025 |
|---|---|---|---|---|---|---|---|
| | **<u>ຕົວຊີ້ບອກທີ 16:</u>** ຈຳນວນ ຄອບຄົວ ທີ່ໄດ້ຜະລິດເພື່ອບໍລິໂພກ ພືດ-ຜັກ ແລະ ໝາກໄມ້ ທີ່ຫຼາກຫຼາຍ ໂດຍຕິດພັນກັບລະບົບ ກະສິກຳສະອາດ. | 971,900 ຄອບຄົວ | 18,247 | 15,262 ຄອບຄົວ | 32,864 ຄອບຄົວ | 16,000 ຄອບຄົວ | 1,176,260 ຄອບຄົວ |
| | **<u>ຕົວຊີ້ບອກທີ 17:</u>** ຈຳນວນ ຄອບຄົວທີ່ໄດ້ຜະລິດເພື່ອບໍລິໂພກສັດ ນ້ອຍ, ປາ, ສັດນ້ຳ ແລະ ແມງໄມ້ ຈາກການລ້ຽງ ແລະ ແຫຼ່ງທຳ ມະຊາດ. | 971,900 ຄອບຄົວ | 18,247 | 15,262 ຄອບຄົວ | 32,864 ຄອບຄົວ | 16,000 ຄອບຄົວ | 1,176,260 ຄອບຄົວ |
| | **<u>ຕົວຊີ້ບອກທີ 18:</u>** ຈຳນວນບ້ານ ທີ່ໄດ້ ຄຸ້ມຄອງ, ນຳໃຊ້ ແລະລາຍ ງານ ກ່ຽວກັບ ແຫຼ່ງຊັບພະຍາກອນ ທຳມະຊາດ ແລະ ເຄື່ອງປ່າ ຂອງດົງແບບຍືນຍົງ. (ປ່າໄມ້) | 1,366 ບ້ານ | 90 ບ້ານ 38% | 117 ບ້ານ 48.75% | 147 ບ້ານ ເທົ່າກັບ 59% | 240 ບ້ານ | (ໃຫ້ໄດ້ທັງໝົດ 2,566 ບ້ານ) |
| | **<u>ຕົວຊີ້ບອກທີ 19:</u>** ຈຳນວນກຸ່ມການຜະລິດ ທີ່ ສາມາດເຄື່ອນ ໄຫວໄດ້ຕາມພາລະບົດບາດ ໃນການສ້າງຄວາມເຂັ້ມແຂງ ຂອງກຸ່ມ ການຜະລິດຕິດພັນກັບການຕະຫຼາດ, ການປຸງແຕ່ງ, ການສ້າງມູນຄ່າ ເພີ່ມ ແລະ ການເກັບຮັກສາຜົນຜະລິດກະສິກຳ. (ການສົ່ງເສີມ ເຕັກນິກ ແລະ ການປຸງແຕ່ງກະສິກຳ) | 1,528 ກຸ່ມທີ່ໄດ້ ຕັ້ງແລ້ວ ແຕ່ຍັງ ບໍ່ສາມາດເຄື່ອນ ໄຫວຕາມພາລະ ບົດບາດທັງໝົດ | 813 ກຸ່ມ | 170 ກຸ່ມ 37% | ຕົວເລກສະ ສົມແມ່ນ 458 ກຸ່ມ | 170 ກຸ່ມ | 764 ກຸ່ມທີ່ມີຢູ່ແລ້ວໄດ້ ຮັບການປັບປຸງ ແລະ ສາ ມາດເຄື່ອນໄຫວຕາມ ພາລະບົດບາດ |

**ກຸ່ມກິດຈະກຳທີ 05: ການສົ່ງເສີມການຜະລິດພືດ, ຜັກ ແລະ ໝາກໄມ້ທີ່ມີຄຸນຄ່າທາງດ້ານໂພຊະນາການ ທີ່ຫຼາກຫຼາຍຕິດພັນກັບກະສິກຳສະອາດ ເພື່ອບໍລິໂພກ:**

- ❖ **ການບັນລຸຄາດໝາຍຂອງຕົວຊີ້ບອກ:** ປະກອບສ່ວນໄດ້ ໃຫ້ຄອບຄົວທຸກຍາກ ສາມາດພົ້ນທຸກໄດ້ 32,864 ຄອບຄົວ ບັນລຸ 205% ຂອງແຜນການ 16,000 ຄອບຄົວ;

**– ການຜະລິດເຂົ້າ:**

- ❖ ການຜະລິດເຂົ້ານາແຊງ ແມ່ນເປັນຂະບວນຟົດຟື້ນ ສາມາດປັກດຳໄດ້ 96,543 ເຮັກຕາ, ບັນລຸລື່ນແຜນການ 0.02% ຂອງແຜນການ (96,520 ເຮັກຕາ), ຜົນຜະລິດ 442,000 ໂຕນ, ເທົ່າກັບ 11.6% ຂອງແຜນການປີ 2023;
- ❖ ການຜະລິດເຂົ້ານາປີ ສາມາດປັກດຳໄດ້ທັງໝົດ 805,915 ເຮັກຕາ, ແຕ່ເນື່ອງຈາກ ໄດ້ຮັບຜົນເສຍຫາຍຈາກໄພທຳມະຊາດ ເຮັດໃຫ້ເນື້ອທີ່ປູກເຂົ້າ ເສຍຫາຍ 9,691 ເຮັກຕາ, ເນື້ອທີ່ເກັບກ່ຽວ ປະມານ 796,224 ເຮັກຕາ ລື່ນແຜນການ 4.44% (ແຜນການ 762,360 ເຮັກຕາ), ຜົນຜະລິດປະມານ 3,252,800 ໂຕນ;
- ❖ ການຜະລິດເຂົ້າໄຮ່ ສາມາດປູກໄດ້ທັງໝົດ 100,909 ເຮັກຕາ, ໄດ້ຮັບຜົນເສຍຫາຍຈາກໄພທຳມະຊາດ 4 ເຮັກຕາ, ເນື້ອທີ່ເກັບກ່ຽວ ປະມານ 100,905 ເຮັກຕາ ລື່ນແຜນການ 15% (ແຜນການ 87,060 ເຮັກຕາ), ຜົນຜະລິດ ປະມານ 205,400 ໂຕນ;
- ❖ ສັງລວມແລ້ວ ການຜະລິດເຂົ້າເປືອກ ໃນປີ 2023 ສາມາດປັກດຳໄດ້ທັງໝົດ 1,003,367 ເຮັກຕາ, ເນື້ອທີ່ເກັບກ່ຽວ 993,672 ເຮັກຕາ, ຜົນຜະລິດປະມານ 3,900,200 ໂຕນ, ບັນລຸລື່ນແຜນການ 2.36% (ແຜນການຕາມມະຕິສະພາຮັບຮອງ 3.81 ລ້ານໂຕນ) ຊຶ່ງສະແດງໃຫ້ເຫັນ ລະດັບການສະໜອງເພື່ອບໍລິໂພກ ມີດັ່ງຮູບສະແດງລຸ່ມນີ້:

**ຮູບທີ 01 ການສະໜອງຜົນຜະລິດເຂົ້າເພື່ອດຸ່ນດ່ຽງໃນການບໍລິໂພກ**



❖ **ການຜະລິດພືດສະບຽງອາຫານ:** ສາມາດປູກພືດສະບຽງໄດ້ທັງໝົດ 907,385 ເຮັກຕາ, ຜົນຜະລິດ 2,420,242 ໂຕນ ບັນລຸລື່ນແຜນການ 1.2% ຂອງແຜນການ (ແຜນການ 2.39 ລ້ານໂຕນ), ໃນນັ້ນ ສາລີຫວານ 26,900 ເຮັກຕາ ຜົນຜະລິດປະມານ 161,740 ໂຕນ, ເຜືອກ, ມັນ 10,368 ເຮັກຕາ ຜົນຜະລິດປະມານ 205,343 ໂຕນ, ພືດ, ຜັກ 166,262 ເຮັກຕາ ຜົນຜະລິດປະມານ 1,422,481 ໂຕນ, ໝາກໄມ້ 61,059 ເຮັກຕາ ຜົນຜະລິດປະມານ 630,678 ໂຕນ ແລະ ນອກຈາກນັ້ນ ຜະລິດພືດຕະກູນຖົ່ວ ມີເນື້ອທີ່ທັງໝົດ 28,791 ເຮັກຕາ ແລະ ຜົນຜະລິດ 68,166 ໂຕນ. ພ້ອມດຽວກັນ ຖ້າທຽບໃສ່ ການຕອບສະໜອງຜົນຜະລິດ ໃຫ້ແກ່ສັງຄົມ ເພື່ອດູນດ່ຽງ ໃນການບໍລິໂພກໃນຂອບເຂດທົ່ວປະເທດ ມີດັ່ງຮູບສະແດງລຸ່ມນີ້:

**ຮູບທີ 02 ການສະໜອງຜົນຜະລິດເພື່ອ ດຸ່ນດ່ຽງການບໍລິໂພກພືດຜັກກິນຫົວ, ກິນໃບ ແລະ ໄມ້ໃຫ້ໝາກ**




**ຮູບທີ 03 ການສະໜອງຜົນຜະລິດດຸ່ນດ່ຽງການບໍລິໂພກພືດຕະກູນຖົ່ວ**




❖ **ການປະຕິບັດກິດຈະກຳຍ່ອຍ:**

- ສ້າງ ແລະ ປັບປຸງ ບັນດານິຕິກຳ, ຂໍ້ກຳນົດເງື່ອນໄຂ, ບົດແນະນຳ, ຄູ່ມືວິຊາການຕ່າງໆ ເພື່ອເປັນບ່ອນອີງ ໃນການຄຸ້ມຄອງວຽກງານ ກັນພືດ, ຄຸ້ມຄອງການນຳເຂົ້າ, ສົ່ງອອກ, ສົ່ງຜ່ານ, ວັດຖຸຄວບຄຸມ ແລະ ທຸລະກິດການບໍລິການສຸຂະອະນາໄມພືດ, ໄດ້ສຳເລັດການຈັດສົ່ງບົດປະເມີນຄວາມສ່ຽງສັດຕູພືດ ໃຫ້ ສປ ຈີນ ມີ

21 ພືດ ຄື ໝາກມີ້, ໝາກລຳໄຍ, ໝາກຖົ່ວລຽນ, ໝາກມັງກອນ, ໝາກເຜັດ, ຖົ່ວດິນ, ໝາກນັດ, ຂີງ, ໝາກແໜ່ງ, ສາລີບິດ, ກາເຟ, ສາລີຫວານ, ຜັກຫູອດມ້ອນ, ໝາກເກົາ, ໝາກລິນຈີ່, ຢາງພາລາ, ໝາກຄ່າແດງ, ກ້ອຍໄຂ່, ຊາ, ໜໍ່ໄມ້ແຫ້ງ ແລະ ໝາກເດືອຍ;

- ໄດ້ກຳນົດມາດຕະການປ້ອງກັນ, ຄວບຄຸມ, ກຳຈັດສັດຕູພືດ ແລະ ຕອບໂຕ້ສຸກເສີນ ພ້ອມທັງຫາວິທີການແກ້ໄຂດ້ານວິຊາການທີ່ເໝາະສົມ ໃນກໍລະນີທີ່ມີການແຜ່ລະບາດຂອງສັດຕູພືດ ພ້ອມທັງ ພັດທະນາ ຄູ່ມືເຕັກນິກ ການປ້ອງກັນ ແລະ ກຳຈັດສັດຕູພືດ ໃຫ້ຖ່ວງທັນກັບລະດູການ, ໄດ້ຈັດຝຶກອົບຮົມ ກ່ຽວກັບການປ້ອງກັນພືດແບບປະສົມປະສານ ສຳລັບພືດຜັກ ຜູ້ເຂົ້າຮ່ວມທັງໝົດ 18 ຄົນ (ຍິງ 06 ຄົນ) ມາຈາກ 04 ເມືອງ 02 ແຂວງ, ແຂວງ ເຊກອງ (ເມືອງ ທ່າແຕງ ແລະ ເມືອງ ດາກຈຶງ) ແລະ ແຂວງ ຈຳປາສັກ (ເມືອງປາກຊ່ອງ ແລະ ເມືອງສຸຂຸມາ);
- ສ້າງແປງສາທິດຜະລິດພືດຜັກກິນໃບ, ກິນໝາກ, ກິນຫົວ ຕາມມາດຕະຖານກະສິກຳອິນຊີ ໃນການປູກຜັກໃນເຮືອນຮົ່ມ 16 ຫຼັງ ແລະ ນອກເຮືອນຮົ່ມ ໃນເນື້ອທີ່ 3 ເຮັກຕາ ເພື່ອສາທິດເປັນຕົວແບບໃນແຕ່ລະລະດູການການຜະລິດ, ປັບປຸງຟາມຕົວແບບ ໂດຍສະເພາະ ວຽກງານອະນາໄມ, ສ້ອມແປງເຮືອນຮົ່ມ, ຜະລິດຝຸ່ນບົ່ມອິນຊີໄດ້ 2 ໂຕນ, ນ້ຳສະກັດຊີວະພາບ ໄດ້ 100 ລິດ ເພື່ອຮັບໃຊ້ການຜະລິດພາຍໃນຟາມ.

**ກຸ່ມກິດຈະກຳທີ 06: ສົ່ງເສີມການຜະລິດອາຫານທາດໂປຣຕີນ (ຊີ້ນ-ປາ) ແລະ ອາຫານທີ່ບັນຈຸທາດແຄວຊຽມຈາກການລ້ຽງສັດນ້ອຍ ແລະ ການປະມົງ (ການລ້ຽງປາ ແລະ ສັດນ້ຳ) ຂອງຊຸມຊົນ ລວມມີ 01 ຕົວຊີ້ບອກ ແລະ 10 ກິດຈະກຳຍ່ອຍ, ມີຜົນສຳເລັດຄື:**

- ການບັນລຸຄາດໝາຍຂອງຕົວຊີ້ບອກ: ປະກອບສ່ວນ ໃຫ້ຄອບຄົວທຸກຍາກ ສາມາດພົ້ນທຸກໄດ້ 32,864 ຄອບຄົວ ບັນລຸ 205% ຂອງແຜນການ 16,000 ຄອບຄົວ.

❖ **ການລ້ຽງສັດ ແລະ ການປະມົງ:**

- ໄດ້ເອົາໃຈໃສ່ສົ່ງເສີມການລ້ຽງສັດ ແລະ ການປະມົງ ເຮັດໃຫ້ຝູງສັດ ມີການຂະຫຍາຍຕົວໃນລະດັບ 3.5% (ແຜນການ 3%). ໃນນັ້ນ ຄວາຍ 1,250,174 ໂຕ ເພີ່ມຂຶ້ນ 0.3%, ງົວ 2,561,453 ໂຕ ເພີ່ມຂຶ້ນ 5.5%, ໝູ 4,539,786 ໂຕ ເພີ່ມຂຶ້ນ 3%, ແກະ/ແບ້ 801,338 ໂຕ ເພີ່ມຂຶ້ນ 5% ແລະ ສັດປີກ 51,972,665 ໂຕ ເພີ່ມຂຶ້ນ 3.7%.
- ການຜະລິດຊີ້ນ, ໄຂ່ ແລະ ປາ ສາມາດຜະລິດໄດ້ທັງໝົດ 530,517 ໂຕນ ເທົ່າກັບ 99.9% ຂອງແຜນການ (ແຜນການ 531,000 ໂຕນ). ໃນນັ້ນ, ຜະລິດຊີ້ນ ໄດ້ທັງໝົດ 257,145 ໂຕນ, ໄຂ່ 50,272 ໂຕນ ແລະ ປາ 223,100 ໂຕນ, ເຮັດໃຫ້ອັດຕາການບໍລິໂພກ ຊີ້ນ, ປາ ແລະ ໄຂ່ ໂດຍສະເລ່ຍ ບັນລຸໄດ້ 68 ກິໂລກຣາມ/ຄົນ/ປີ, ສາມາດຄ້ຳປະກັນການບໍລິໂພກພາຍໃນໄດ້ຢ່າງພຽງພໍ. ເຖິງຢ່າງໃດກໍຕາມຖ້າທຽບໃສ່ອັດຕາການບໍລິໂພກໃນຂອບເຂດທົ່ວປະເທດ ແມ່ນຢູ່ເສັ້ນລະດັບ ຂອງແຕ່ລະປະເພດທາດຊີ້ນເຊິ່ງສະແດງຢູ່ຕາຕະລາງລຸ່ມນີ້:

**ຮູບທີ 04 ຄວາມສາມາດໃນການສະໜອງ ທາດຊີ້ນ, ໄຂ່ ແລະ ປາ**



- ການສົ່ງເສີມການຜະລິດ ແລະ ຊົມໃຊ້ພາຍໃນເພື່ອທົດແທນການນຳເຂົ້າ ແລະ ຜະລິດເປັນສິນຄ້າສົ່ງອອກ ຕິດພັນກັບການຈໍລະຈອນດຸນດ່ຽງການບໍລິໂພກຊີ້ນພາຍໃນ ໃຫ້ພຽງພໍທົ່ວສັງຄົມ ຕິດພັນກັບການນຳໃຊ້ເຕັກນິກ-ເຕັກໂນໂລຊີ ເຂົ້າໃນການລ້ຽງ ແລະ ນຳໃຊ້ອາຫານທີ່ມີຄຸນນະພາບ. ມາຮອດປະຈຸບັນ ມີການລ້ຽງສັດ ແລະ ສັດນ້ຳ ເປັນສິນຄ້າ ແບບເປັນກຸ່ມ, ເປັນຟາມ ໄດ້ມີການຂະຫຍາຍຕົວ ມີຟາມ ທັງໝົດ 2,261 ຟາມ ມີສັດລ້ຽງ 6,501,257 ໂຕ. ໃນນັ້ນ, ເປັນຟາມລ້ຽງຄວາຍ 39 ຟາມ ມີຄວາຍ 2,299 ໂຕ, ຟາມລ້ຽງງົວ 713 ຟາມ ມີງົວ 83,192 ໂຕ, ຟາມລ້ຽງໝູ 737 ຟາມ ມີໝູ 547,807 ໂຕ, ຟາມລ້ຽງແບ້/ແກະ 30 ຟາມ ມີແບ້ 111,393 ໂຕ, ຟາມລ້ຽງໄກ່ພັນໄຂ່ 354 ຟາມ ມີໄກ່ແມ່ໄຂ່ 2,375,151 ໂຕ, ຟາມລ້ຽງໄກ່ພັນຊີ້ນ 110 ຟາມ ມີໄກ່ 11,266 ໂຕ, ຟາມເປັດພັນໄຂ່ 78 ຟາມ ມີເປັດແມ່ພັນໄຂ່ 191,500 ໂຕ, ຟາມເປັດຊີ້ນ 193 ຟາມ ມີເປັດ 2,941,349 ໂຕ ແລະ ນົກກະທາ ມີ 07 ຟາມ ມີນົກກະທາ 237,300 ໂຕ.

**ຮູບທີ 05 ຈຳນວນ ແລະ ສັດສ່ວນຟາມຂອງ ສັດລ້ຽງ**




- ໄດ້ຂະຫຍາຍຕາໜ່າງການຜະລິດລູກປາ ຂອງບັນດາສູນ, ສະຖານີ ທັງພາກລັດ ແລະ ເອກກະຊົນ ເພື່ອສະໜອງໃຫ້ແກ່ຊາວກະສິກອນໃນທົ່ວປະເທດ ເຊິ່ງໃນ ສປປ ລາວ ມີສະຖານີທີ່ຜະລິດລູກປາຂອງລັດ 52 ແຫ່ງ, ຜູ້ປະກອບການ ຫຼາຍກວ່າ 112 ແຫ່ງ ແລະ ຜະລິດລູກປາແບບຄອບຄົວມີຫຼາຍກວ່າ 320 ແຫ່ງ. ທົ່ວປະເທດ ມີວັງສະຫງວນ ຈຳນວນ 1,000 ວັງ ທີ່ກວມເນື້ອທີ່ຫຼາຍກວ່າ 60,800 ເຮັກຕາ ແລະ ໄດ້ມີລະບຽບການຄຸ້ມຄອງວັງສະຫງວນ ທີ່ໄດ້ເຊັນຮັບຮອງຈາກການຈັດຕັ້ງຂອງພາກລັດທີ່ກ່ຽວຂ້ອງແລ້ວ 740 ວັງ.
- ຜະລິດແນວພັນສັດປີກ ເພື່ອສະໜອງໃຫ້ແກ່ສັງຄົມ ທັງໝົດໄດ້ 8,348 ໂຕ ເທົ່າກັບ 52.4% ຂອງແຜນການປີ (16,000 ໂຕ), ຜະລິດ ແລະ ຂະຫຍາຍແນວພັນໝູ (ໝູພັນຕ່າງປະເທດ) ໄດ້ທັງໝົດ 164 ໂຕ ເທົ່າກັບ 41% ຂອງແຜນການປີ 2023 (400 ໂຕ);
- ລ້ຽງທອມປາພໍ່-ແມ່ພັນຕ່າງປະເທດ ແລະ ປາພື້ນເມືອງ ເພື່ອກະກຽມຜະລິດໃນປີ 2023 ມີ: ປານິນ, ປາເຊັງ, ປາໄນ, ປາດຸກພັນ ແລະ ປາປາກ ຈຳນວນ 424,000 ໂຕ; ປະສົມພັນປາ 02 ຊະນິດ: ປາປາກ 02 ຊຸດ ແລະ ປາໄນ 04 ຊຸດ ຄາດວ່າໄດ້ປານ້ອຍອາຍຸ 45 ວັນ ຈຳນວນ 80,000 ໂຕ; ຜະລິດປາດຸກພັນ 01 ຊຸດ ຄາດຄະເນຈະໄດ້ປານ້ອຍອາຍຸ 35 ວັນ ຈຳນວນ 3,000 ໂຕ ແລະ ຜະລິດລູກປາໄນ 02 ຊຸດ ຈຳນວນ 18 ກິໂລກຣາມ ຄາດຄະເນຈະໄດ້ ປາໄນນ້ອຍອາຍຸ 35 ວັນ ຈຳນວນ 40,000 ໂຕ.

**ກຸ່ມກິດຈະກຳທີ 7: ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນໃນການວາງແຜນ, ການຄຸ້ມຄອງ ແລະ ນຳໃຊ້ແຫຼ່ງຊັບພະຍາກອນທຳມະຊາດ ແລະ ເຄື່ອງປ່າຂອງດົງແບບຍືນຍົງ ປະກອບສ່ວນເຂົ້າ ໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ:**

- ❖ **ການບັນລຸຄາດໝາຍຂອງຕົວຊີ້ບອກ:**

- ສຳເລັດການວາງແຜນຈັດສັນຄຸ້ມຄອງປ່າໄມ້ຂັ້ນບ້ານ ສາມາດປະຕິບັດໄດ້ທັງໝົດ 147 ບ້ານ ເທົ່າກັບ 59% ຂອງແຜນການປີ (240 ບ້ານ);
- ສຳເລັດ ການຟື້ນຟູປ່າໄມ້ແບບທຳມະຊາດ ຈຳນວນທັງໝົດ 65 ບ້ານ, ເນື້ອທີ່ 880 ເຮັກຕາ; ໃນນັ້ນ, ຢູ່ເມືອງພຽງ, ແຂວງໄຊຍະບູລີ ຈຳນວນ 30 ບ້ານ, ເນື້ອທີ່ 362 ເຮັກຕາ ແລະ ເມືອງໂພນໄຊ, ແຂວງຫຼວງພະບາງ ຈຳນວນ 35 ບ້ານ, ເນື້ອທີ່ 518 ເຮັກຕາ;
- ທົບທວນ ແຜນການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ພ້ອມທັງ ວິເຄາະການໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຂັ້ນບ້ານ ໃນຈຳນວນ 51 ບ້ານ ຢູ່ເຂດເມືອງພຽງ, ແຂວງໄຊຍະບູລີ;
- ສຳເລັດ ປູກໄມ້ ໃນປີ 2023 ທັງໝົດ ຈຳນວນ 400 ເຮັກຕາ; ໃນນັ້ນ ຢູ່ ເມືອງວຽງທອງ, ແຂວງບໍລິຄຳໄຊ ຈຳນວນ 120 ເຮັກຕາ; ເມືອງພຽງ, ແຂວງໄຊຍະບູລີ ຈຳນວນ 209 ເຮັກຕາ ແລະ ເມືອງໂພນໄຊ, ແຂວງຫຼວງພະບາງ ຈຳນວນ 71 ເຮັກຕາ;
- ສຳຫຼວດກຳນົດເຂດຟື້ນຟູປ່າ ແບບປູກເສີມກ້ອງປ່າ ໃນ 42 ບ້ານ, ເນື້ອທີ່ທັງໝົດ 674 ເຮັກຕາ; ໃນນັ້ນ, ຢູ່ເມືອງພຽງ, ແຂວງໄຊຍະບູລີ ຈຳນວນ 20 ບ້ານ, ເນື້ອທີ່ 241 ເຮັກຕາ ແລະ ເມືອງໂພນໄຊ, ແຂວງ ຫຼວງພະບາງ ຈຳນວນ 22 ບ້ານ, ເນື້ອທີ່ 433 ເຮັກຕາ;
- ສຳເລັດການລາຍງານ ຜົນການຈັດຕັ້ງປະຕິບັດ ແຜນການຂຸດຄົ້ນ, ເກັບກູ້ ເຄື່ອງປ່າຂອງດົງ ປະຈຳປີ ມີຄື: 1)ໄມ້ປ່ອງ ແຜນອະນຸມັດ ຈຳນວນ 7,688,140 ລຳ, ປະຕິບັດໄດ້ 1,212,510 ລຳ, ເທົ່າກັບ 15.77% ຂອງແຜນການ; 2)ໄມ້ຕື້ວ ຜະລິດຖ່ານຂາວ ແຜນອະນຸມັດ ຈຳນວນ 131,392 ແມັດກ້ອນໄມ້ຟືນ ປະຕິບັດໄດ້ ຈຳນວນ 80,788 ແມັດກ້ອນໄມ້ຟືນ ເທົ່າກັບ 61.49% ຂອງແຜນການ; 3)ຫວາຍທູນ ແລະ ຫວາຍນ້ອຍ ແຜນການອະນຸມັດຈຳນວນ 268,200 ເສັ້ນ, ປະຕິບັດໄດ້ ຈຳນວນ 18,834 ເສັ້ນ ເທົ່າກັບ 7.02% ຂອງແຜນການ; ແລະ 4)ເຄື່ອງປ່າຂອງດົງ ປະເພດເປືອກ, ຫົວ, ເຄືອ,ຮາກ, ແກ່ນ, ກົກ ແລະ ໝາກຊະນິດຕ່າງໆ ແຜນການອະນຸມັດຈຳນວນ 24,087 ໂຕນ, ປະຕິບັດໄດ້ 14,365 ໂຕນ ເທົ່າກັບ 38.33% ຂອງແຜນການ.

**ກຸ່ມກິດຈະກຳທີ 8: ສົ່ງເສີມລະບົບຕ່ອງໂສ້ມູນຄ່າ ເພີ່ມການຜະລິດກະສິກຳເພື່ອໂພຊະນາການ (ຂະຫຍາຍເຕັກນິກກ່ຽວກັບຂະບວນການດ້ານກະສິກຳ) ລວມມີ 01 ຕົວຊີ້ວັດ ແລະ 11 ກິດຈະກຳຍ່ອຍມີຜົນສຳເລັດຄື:**

- ❖ **ການບັນລຸຄາດໝາຍຂອງຕົວຊີ້ບອກ:** ການຂະຫຍາຍກຸ່ມການຜະລິດໃຫ້ບັນລຸຕາມເງື່ອນໄຂ ເພີ່ມຂຶ້ນ 170 ກຸ່ມ (ຈາກ 1,528 ກຸ່ມ ມາເປັນ 1,698 ກຸ່ມ) ປະຈຸບັນບັນລຸ 37% ຂອງແຜນການ (458 ກຸ່ມ).
- ❖ **ການປະຕິບັດກິດຈະກຳຍ່ອຍ:**

- ພັດທະນາ ແລະ ເຜີຍແຜ່ ຂໍ້ມູນຂ່າວສານການສົ່ງເສີມ ແລະ ຊຸກຍູ້ ການສ້າງເຄືອຂ່າຍທີ່ເປັນລະບົບ;
- ສຳເລັດການຊຸກຍູ້ຕິດຕາມ ແລະ ສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງບໍລິຫານກຸ່ມ ແລະ ສະຫະກອນ ລວມທັງ ການຕະຫຼາດ ໃນພື້ນທີ່ເປົ້າໝາຍຂອງໂຄງການ;
- ຕິດຕາມຊຸກຍູ້ ອຳນວຍຄວາມສະດວກໃຫ້ກຸ່ມເຄືອຂ່າຍຊາວກະສິກອນ, ແນໃສ່ສະໜັບສະໜູນພັດທະນາຕ່ອງໂສ້ມູນຄ່າຜະລິດຕະພັນກະສິກຳ, ສ້າງລາຍຮັບ ຢູ່ແຂວງ ຊຽງຂວາງ ແລະ ຫົວພັນ;
- ເຜີຍແຜ່ຜົນສຳເລັດ ຂອງການກຳນົດຫຼັກການ, ຂໍ້ແນະນຳ, ມາດຕະຖານ ດ້ານເຕັກນິກການຜະລິດ ແລະ ການນຳໃຊ້ກົນຈັກກະສິກຳ, ການຄຸ້ມຄອງ ແລະ ນຳໃຊ້ ໃຫ້ມີປະສິດທິພາບ ຂອງໜ່ວຍບໍລິການກົນຈັກກະສິກຳ ຢູ່ 07 ຫົວໜ່ວຍບໍລິການ ຢູ່ 06 ແຂວງ ຄື ແຂວງ ໄຊຍະບູລີ, ວຽງຈັນ, ນະຄອນຫຼວງວຽງຈັນ, ຄຳມ່ວນ, ສະຫວັນນະເຂດ ແລະ ສາລະວັນ;
- ໄດ້ລົງແນະນຳວິທີການສ້າງແຜນ, ການສະຫຼຸບລາຍງານ, ການເກັບຊີ້ແນວພັນເຂົ້າຈາກກຸ່ມ, ການປຸງແຕ່ງ, ການກວດກາຄຸນນະພາບ ແລະ ການເກັບຮັກສາແນວພັນເຂົ້າລຸ້ນ 03 ສຸມໃສ່ຢູ່ 06 ສູນພັດທະນາກະສິກຳຢູ່ ນະຄອນຫຼວງວຽງຈັນ, ໄຊຍະບູລີ, ຄຳມ່ວນ, ສະຫວັນນະເຂດ ແລະ ສາລະວັນ;
- ວາງແຜນເກັບກຳ, ສັງລວມບັນຊີ, ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ບົດບາດ, ໜ້າທີ່ຂອງຫົວໜ່ວຍ ຜູ້ປະກອບການປຸງແຕ່ງຂັ້ນຕົ້ນ, ຜະລິດຕະພັນທີ່ເປັນເອກະລັກຂອງທ້ອງຖິ່ນ ແລະ ຜົນສຳເລັດ ໃນການດຳເນີນທຸລະກິດ, ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານປຸງແຕ່ງຜົນຜະລິດກະສິກຳຂະໜາດນ້ອຍ ລະດັບຄອບຄົວ, ກຸ່ມ ແລະ ສະຫະກອນ;

- ເອື້ອອຳນວຍການສ້າງ ຍີ່ຫໍ້ ກາໝາຍ ເຄື່ອງໝາຍສິນຄ້າກະສິກຳ, ຊຸກຍູ້–ສົ່ງເສີມການລົງທຶນ ໃນການຜະລິດກະສິກຳສະອາດ ແລະ ການປຸງແຕ່ງສ້າງມູນຄ່າເພີ່ມມີໂພຊະນາການ;
- ສ້າງກົນໄກ ພົບປະ ແລກປ່ຽນບົດຮຽນ ລະຫວ່າງ ຜູ້ຜະລິດ, ຜູ້ປະກອບການ ແລະ ນັກວິຊາການ ດ້ວຍການຈັດງານ ວາງສະແດງສິນຄ້າ, ການປະກວດຜະລິດຕະພັນ ແລະ ການສຳມະນາວິຊາການ ໃຫ້ກວ້າງຂວາງ;
- ຝຶກອົບຮົມການເປັນຄູຝຶກ ດ້ານໂພຊະນາການ ໃຫ້ແກ່ທີມງານໂພຊະນາການຂັ້ນແຂວງ ແລະ ຂັ້ນເມືອງ ຢູ່ແຂວງ ຫຼວງພະບາງ ມີ 04 ເມືອງ, ມີ 24 ບ້ານ, ແຂວງ ໄຊຍະບູລີ ມີ 05 ເມືອງ, ມີ 30 ບ້ານ ລວມເປັນ 54 ບ້ານ;
- ປັບປຸງ ແລະ ພັດທະນາໂຄງລ່າງພື້ນຖານການຜະລິດ ແລະ ເພື່ອຫຼຸດຜ່ອນຕົ້ນທຶນການຜະລິດ ເຊັ່ນ ໂຮງອົບ ມີທັງໝົດ 994 ແຫ່ງ, ເພີ່ມຂຶ້ນໃໝ່ 99 ແຫ່ງ ເທົ່າກັບ 36.8% ຂອງແຜນການ (ແຜນການ 269 ແຫ່ງ); ໂຮງຄັດເມັດພັນເຂົ້າ 67 ແຫ່ງ, ເພີ່ມຂຶ້ນ 15 ແຫ່ງ ເທົ່າກັບ 40.54% ຂອງແຜນການ (ແຜນການ 37 ແຫ່ງ); ສາງເກັບມ້ຽນຜົນຜະລິດກະສິກຳ ມີທັງໝົດ 1,557 ແຫ່ງ ເພີ່ມຂຶ້ນ 122 ແຫ່ງ ເທົ່າກັບ 42.50 % ຂອງແຜນການ (ແຜນການ 287 ແຫ່ງ); ລານຕາກຜົນຜະລິດກະສິກຳມີທັງໝົດ 526 ແຫ່ງ, ເພີ່ມຂຶ້ນ 48 ແຫ່ງ ເທົ່າກັບ 40% ຂອງແຜນການ (120 ແຫ່ງ);
- ທົບທວນບັນດາຂໍ້ມູນ ແລະ ຂ່າວສານ ເພື່ອຈະນຳໃຊ້ເຂົ້າໃນການກຳນົດແຜນກິດຈະກຳ ໃນການສ້າງຕັ້ງກຸ່ມການຜະລິດ, ໄດ້ສຳເລັດການພັດທະນາ ແລະ ເຜີຍແຜ່ຂໍ້ມູນຂ່າວສານການສົ່ງເສີມ ແລະ ຊຸກຍູ້, ການສ້າງເຄືອຂ່າຍທີ່ເປັນລະບົບຖານຂໍ້ມູນ ໃຫ້ກັບ ພະແນກ, ສູນພັດທະນາກະສິກຳ ອ້ອມຂ້າງກົມສົ່ງເສີມກະສິກຳ ແລະ ສະຫະກອນ, ພ້ອມທັງຝຶກອົບຮົມ ສ້າງຄວາມເຂັ້ມແຂງໃນການນຳໃຊ້ຖານຂໍ້ມູນ ແລະ ໄດ້ອັບເດດ ແລະ ອັບໂລດຂໍ້ມູນລົງເວັບໄຊສ໌ ຂອງກົມສົ່ງເສີມກະສິກຳ ແລະ ສະຫະກອນປະກອບມີ ໝວດນິຕິກຳ 147 ເລື່ອງ, ວາລະສານການສົ່ງເສີມ 110 ສະບັບ, ແຜນພັບ 50 ເລື່ອງ, ໂປດສະເຕີ 30 ແລະ ອື່ນໆ 10 ກວ່າ ເອກະສານ;
- ຕິດຕາມຊຸກຍູ້, ອຳນວຍຄວາມສະດວກໃຫ້ກຸ່ມເຄືອຂ່າຍຊາວກະສິກອນ, ແນໃສ່ສະໜັບສະໜູນພັດທະນາຕ່ອງໂສ້ມູນຄ່າຜະລິດຕະພັນກະສິກຳ, ສ້າງລາຍຮັບ ແລະ ປັບປຸງຄ້ຳປະກັນສະບຽງອາຫານ ຂອງຊາວກະສິກອນຢູ່ ເຂດພູດອຍໃຫ້ເຂັ້ມແຂງ, ແຂງແຮງ ແລະ ຍືນຍົງ ຢູ່ແຂວງ ຊຽງຂວາງ ມີ 04 ເມືອງ, ແຂວງ ຫົວພັນ ມີ 02 ເມືອງ ແລະ ແຂວງໄຊສົມບູນ ມີ 01 ເມືອງ.

## 3. ຂະແໜງການສຶກສາທິການ ແລະ ກິລາ:

04 ກຸ່ມກິດຈະກຳຂອງຂະແໜງສຶກສາທິການ ແລະ ກິລາ ມີ 07 ຕົວຊີ້ບອກ ເຊິ່ງຈະມີການເກັບກຳ ແລະ ລາຍງານປີລະຄັ້ງ ເຊິ່ງຈະເຫັນໄດ້ວ່າ

| ກຸ່ມ ກິດຈະກຳ | ລຳດັບຕົວຊີ້ບອກ | ຂໍ້ມູນພື້ນຖານ 2020 | ປະຕິບັດໄດ້ 2021 | ປະຕິບັດໄດ້ 2022 | ປະຕິບັດໄດ້ໃນປີ 2023 | ເປົ້າໝາຍ 2023 | ເປົ້າໝາຍ 2025 |
|---|---|---|---|---|---|---|---|
| | **ຕົວຊີ້ບອກທີ 20**: ອັດຕາສ່ວນຮ້ອຍຂອງໂຮງຮຽນທີ່ໄດ້ເຊື່ອມສານໂພຊະນາການ ເຂົ້າໃນຫຼັກສູດການຮຽນການສອນ | ບໍ່ມີຂໍ້ມູນ | | 100% | 100% | 100% | 100% |
| | **ຕົວຊີ້ບອກ 21**: ອັດຕາສ່ວນຮ້ອຍຂອງເດັກນັກຮຽນຍິງຊັ້ນມັດທະຍົມທີ່ໄດ້ກິນທາດເຫຼັກ-ອາຊິດໂຟລິກ (ສຶກສາທິການ ແລະ ສາທາລະນະສຸກຮ່ວມກັນ) | ບໍ່ມີຂໍ້ມູນ | | ບໍ່ມີຂໍ້ມູນ | ບໍ່ໄດ້ແຈກ (ບໍ່ມີຢາ) | 70% | >80% |
| | **ຕົວຊີ້ບອກ 22**: ອັດຕາສ່ວນຮ້ອຍຂອງເດັກນັກຮຽນ ໃນໂຮງຮຽນປະຖົມທີ່ໄດ້ກິນຢາຂ້າແມ່ທ້ອງ (ແຍກຕາມເພດ: ຍິງ-ຊາຍ) (ສຶກສາທິການ ແລະ ກິລາ ແລະ ສາທາລະນະສຸກ ຮ່ວມກັນ) | 91% (2020) | | 99.50% (09 ແຂວງ) | 77.39% (ບົດລາຍງານກົມຄວບຄຸມພະຍາດຕິດຕໍ່) | 94% | >95% |
| | **ຕົວຊີ້ບອກ 10**: ອັດຕາສ່ວນຮ້ອຍຂອງໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມ ທີ່ໄດ້ນຳໃຊ້ແຫຼ່ງນໍ້າດື່ມທີ່ມີການປັບປຸງແລ້ວ (ສະອາດ ແລະ ປອດໄພ). (ສຶກສາທິການ ແລະ ກິລາ/WASH) | ກ່ອນໄວຮຽນ 77%<br>ປະຖົມ 76% | | ກ່ອນໄວຮຽນ 61%<br>ປະຖົມ 77.1% | ກ່ອນໄວຮຽນ 73%<br>ປະຖົມ ບໍ່ມີຂໍ້ມູນ | ກ່ອນໄວຮຽນ 81%<br>ປະຖົມ 77.5% | ກ່ອນໄວຮຽນ 85%<br>ປະຖົມ 80% |
| | **ຕົວຊີ້ບອກ 11:** ອັດຕາສ່ວນຮ້ອຍຂອງໂຮງຮຽນ ທີ່ເຂົ້າເຖິງ ແລະ ນຳໃຊ້ວິດຖ່າຍ | ກ່ອນໄວຮຽນ 77%<br>ປະຖົມ 76% | | ກ່ອນໄວຮຽນ 49%<br>ປະຖົມ 76.21% | ກ່ອນໄວຮຽນ 72%<br>ປະຖົມ ບໍ່ມີຂໍ້ມູນ | ກ່ອນໄວຮຽນ 81%<br>ປະຖົມ 77.5% | ກ່ອນໄວຮຽນ 85%<br>ປະຖົມ 80% |
| | **ຕົວຊີ້ບອກ 12:** ອັດຕາສ່ວນຮ້ອຍຂອງໂຮງຮຽນ ທີ່ເຂົ້າເຖິງ ແລະ ນຳໃຊ້ສະຖານທີ່ລ້າງມື. | ກ່ອນໄວຮຽນ 77%<br>ປະຖົມ 76% | | ກ່ອນໄວຮຽນ 59%<br>ປະຖົມ 82.74% | ກ່ອນໄວຮຽນ 65%<br>ປະຖົມ ບໍ່ມີຂໍ້ມູນ | ກ່ອນໄວຮຽນ 81%<br>ປະຖົມ 77.5% | ກ່ອນໄວຮຽນ 85%<br>ປະຖົມ 80% |
| | **ຕົວຊີ້ບອກ 23:** ອັດຕາສ່ວນຮ້ອຍຂອງໂຮງຮຽນ ເປົ້າໝາຍທີ່ໄດ້ຮັບການສະໜອງ ແລະ ສົ່ງເສີມອາຫານທ່ຽງທີ່ມີໂພຊະນາການໃນໂຮງຮຽນ | 51% | | 66.48% | 66.48% | 69% | >69% |

**ກຸ່ມກິດຈະກຳທີ 09: ສົ່ງເສີມອາຫານທີ່ມີໂພຊະນາການ ແລະ ສຸຂະພາບດີ ດ້ວຍການນຳໃຊ້ເຂົ້າໃນຫຼັກສູດ ການສຶກສາລວມທັງກະສິກຳຂະໜາດນ້ອຍໃນໂຮງຮຽນ ແລະ ກິດຈະກຳອື່ນໆ:**

- <u>**ຕົວຊີ້ບອກທີ 20**</u>: ອັດຕາສ່ວນຮ້ອຍຂອງໂຮງຮຽນທີ່ໄດ້ເຊື່ອມໂພຊະນາການ ເຂົ້າໃນຫຼັກສູດການຮຽນການສອນ ປະຕິບັດໄດ້ <u>**100%**</u>.

❖ **ການສຶກສາກ່ອນໄວຮຽນ:**

1) ສຳເລັດການນຳເອົາເນື້ອໃນຄວາມຮູ້ ກ່ຽວກັບ ສຸຂະສຶກສາ ແລະ ໂພຊະນາການ ເຊື່ອມສານເຂົ້າໃນການພັດທະນາປຶ້ມແຜນການຈັດປະສົບການ 08 ໜ່ວຍ ການສອນຂອງຫ້ອງກຽມປະຖົມ ມີຄື ໜ່ວຍຕົວຂອງຂ້ອຍ, ຄອບຄົວຂອງຂ້ອຍ, ໂຮງຮຽນຂອງຂ້ອຍ, ບ້ານຂອງຂ້ອຍ, ທຳມະຊາດອ້ອມຕົວເຮົາ, ສິ່ງແວດລ້ອມອ້ອມຕົວ, ການຄົມມະນາຄົມ ແລະ ການສື່ສານ ແລະ ໜ່ວຍສິ່ງຕ່າງໆອ້ອມຕົວເຮົາ ພ້ອມທັງຝຶກອົບຮົມການນຳໃຊ້ໃຫ້ຄູຝຶກຂັ້ນແຂວງ ແລະ ເມືອງ ໃນຂອບເຂດທົ່ວປະເທດ.

❖ **ປະຖົມສຶກສາ:**

1) ສຳເລັດການນຳເອົາເນື້ອໃນຄວາມຮູ້ ກ່ຽວກັບ ສຸຂະສຶກສາ ແລະ ໂພຊະນາການ ເຊື່ອມສານເຂົ້າໃນການພັດທະນາຫຼັກສູດ, ປຶ້ມແບບຮຽນ ແລະ ຄູ່ມືຄູ ຊັ້ນປະຖົມສຶກສາປີທີ 05 ສະບັບປັບປຸງໃໝ່ ໂດຍສະເພາະແມ່ນວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ໂດຍໄດ້ຮັບການສະໜັບສະໜູນຈາກແຜນ ງານບີຄວາ;
2) ສຳເລັດການຝຶກອົບຮົມຄູໃນການນຳໃຊ້ຫຼັກສູດ, ປຶ້ມແບບຮຽນ ແລະ ຄູ່ມືຄູ ຊັ້ນປະຖົມສຶກສາປີທີ 05 ສະບັບປັບປຸງໃໝ່ ໂດຍສະເພາະ ແມ່ນວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ທີ່ໄດ້ເຊື່ອມສານເນື້ອໃນຄວາມຮູ້ ກ່ຽວກັບ ສຸຂະສຶກສາ ແລະ ໂພຊະນາການເຂົ້າໃນຫຼັກສູດດັ່ງກ່າວ ໂດຍໄດ້ຮັບການສະໜັບສະໜູນຈາກ ແຜນງານບີຄວາ;
3) ສຳເລັດການເກັບກຳຂໍ້ມູນ, ຂຽນບົດລາຍງານ ແລະ ເຜີຍແຜ່ຜົນການປະເມີນການນຳໃຊ້ສື່ການຮຽນການສອນ ກ່ຽວກັບ ໂພຊະນາການ, ການເຮັດສວນຄົວໃນໂຮງຮຽນ ແລະ ການປ່ຽນແປງດິນຟ້າອາກາດ (ກ່ອງສີຂຽວ) ຊັ້ນປະຖົມສຶກສາ ໂດຍໄດ້ຮັບການສະໜັບສະໜູນຈາກອົງການອາຫານໂລກ;
4) ສຳເລັດການປັບປຸງ ແລະ ຈັດພິມສື່ການຮຽນການສອນ ກ່ຽວກັບ ໂພຊະນາການ, ການເຮັດສວນຄົວ ໃນໂຮງຮຽນ ແລະ ການປ່ຽນແປງດິນຟ້າອາກາດ (ກ່ອງສີຂຽວ) ເຊິ່ງປະກອບມີ ປຶ້ມຄູ່ມືແນະນຳການ ນຳໃຊ້ສື່ການຮຽນການສອນກ່ອງສີຂຽວ 1 ຫົວ, ໂປດສະເຕີ 12 ເລື່ອງ, ປຶ້ມເລື່ອງ 09 ເລື່ອງ, ເກມ 02 ເລື່ອງ, ບັດຮູບພາບ ແລະ ບັດຄຳສັບ 484 ບັດ ທີ່ຈະໃຊ້ປະກອບເຂົ້າໃນການຮຽນການສອນຊັ້ນປະຖົມສຶກສາ ໂດຍສະເພາະ ວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ເພື່ອຂະຫຍາຍການນຳໃຊ້ໄປສູ່ 1,205 ໂຮງຮຽນ, 27 ເມືອງ, 14 ແຂວງ ເປົ້າໝາຍທີ່ມີອາຫານທ່ຽງໃນໂຮງຮຽນ ໃນສົກຮຽນ 2023–2024 ນີ້ ໂດຍ ໄດ້ຮັບການສະໜັບສະໜູນຈາກອົງການອາຫານໂລກ;
5) ສຳເລັດການຝຶກອົບຮົມຄູຝຶກຂັ້ນແຂວງ ແລະ ເມືອງ ກ່ຽວກັບ ການນຳໃຊ້ສື່ການຮຽນ ການສອນດ້ານໂພຊະນາການ, ການເຮັດສວນຄົວໃນໂຮງຮຽນ ແລະ ການປ່ຽນແປງດິນຟ້າອາກາດ (ກ່ອງສີຂຽວ) ຊັ້ນປະຖົມສຶກສາ ໃນຈຳນວນ 11 ແຂວງ, 18 ເມືອງເປົ້າໝາຍ ທີ່ມີອາຫານທ່ຽງໃນໂຮງຮຽນ ໂດຍໄດ້ຮັບການສະໜັບສະໜູນຈາກອົງການອາຫານໂລກ.

❖ **ມັດທະຍົມສຶກສາ:**

1) ສຳເລັດການປັບປຸງປຶ້ມຄູ່ມືຄູ ຊັ້ນມັດທະຍົມສຶກສາ ຂັ້ນ ມ.1, ມ.2, ມ.3, ມ.5 ແລະ ມ.6 ເຊິ່ງກວມມີເນື້ອໃນຄວາມຮູ້ ກ່ຽວກັບ ໂພຊະນາການຢູ່ນຳ ເປັນຕົ້ນ ວິຊາວິທະຍາສາດທຳມະຊາດ ແລະ ວິຊາຊີວະວິທະຍາ ພ້ອມທັງຝຶກອົບຮົມຄູ ໃຫ້ແກ່ໂຮງຮຽນເປົ້າໝາຍ ໂດຍໄດ້ຮັບການສະໜັບສະໜູນຈາກ ໂຄງການການສຶກສາເພື່ອການຈ້າງງານ (EESDP).

❖ **ການສຶກສານອກໂຮງຮຽນ:**

1) ໄດ້ເຊື່ອມການສອນວຽກງານໂພຊະນາການເຂົ້າໃນຫຼັກສູດການຮຽນ-ການສອນ ລຶບລ້າງຄວາມບໍ່ຮູ້ໜັງສືແລະ ປະຖົມບຳລຸງ ເຊັ່ນ ການປ້ອງກັນພະຍາດ, ອາຫານທີ່ສະອາດ, ສຸຂະອານາໄມ, ການສັກຢາປ້ອງກັນ, ການໃຊ້ຢາຂ້າແມ່ທ້ອງ ແລະ ອື່ນໆ.

**ກຸ່ມກິດຈະກຳທີ 10: ໃຫ້ຈຸລະສານອາຫານເສີມ, ຢາຂ້າແມ່ທ້ອງ, ໃຫ້ວັກຊີນກັນພະຍາດ ແລະ ການບໍລິການສາທາລະນະສຸກອື່ນໆ ພາຍໃນໂຮງຮຽນດ້ວຍການຈັດກິດຈະກຳຮ່ວມ ລະຫວ່າງ ຂະແໜງການສຶກສາທິການ ແລະ ກິລາ ແລະ ສາທາລະນະສຸກ:**

- **<u>ຕົວຊີ້ບອກທີ 21</u>**: ອັດຕາສ່ວນຮ້ອຍຂອງເດັກນັກຮຽນຍິງຊັ້ນມັດທະຍົມ ທີ່ໄດ້ກິນທາດເຫຼັກ-ອາຊິດໂຟລິກ (ສຶກສາທິການ ແລະ ກິລາ/ສາທາລະນະສຸກ ຮ່ວມກັນ), ແມ່ຍິງອາຍຸ 12 ຫາ 25 ປີ ທີ່ໄດ້ກິນທາດເຫຼັກ-ອາຊິດໂຟລິກອາທິດລະເມັດ ບໍ່ສຳເລັດ ຍ້ອນປັດຈຸບັນ ຢາທາດເຫຼັກ-ອາຊິດໂຟລິກ ສຳລັບກຸ່ມອາຍຸແມ່ຍິງອາຍຸ 12 ຫາ 25 ປີ ຍັງບໍ່ທັນມີງົບປະມານ ແລະ ຜູ້ສະໜັບສະໜັບ.
- **<u>ຕົວຊີ້ບອກທີ 22</u>:** ອັດຕາສ່ວນຮ້ອຍຂອງເດັກນັກຮຽນ ໃນໂຮງຮຽນປະຖົມທີ່ໄດ້ກິນຢາຂ້າແມ່ທ້ອງ ແຍກຕາມເພດ: ຍິງ-ຊາຍ ປະຕິບັດໄດ້ 77% (ຈາກບົດລາຍງານກົມຄວບຄຸມພະຍາດຕິດຕໍ່).
  1) ສຳເລັດກອງປະຊຸມປຶກສາຫາລື ກ່ຽວກັບ ວຽກການອະນາໄມເດັກຍິງເວລາເປັນປະຈຳເດືອນ ຢູ່ໃນໂຮງຮຽນ ຜູ້ເຂົ້າຮ່ວມຈຳນວນ 27 ຄົນ, ຍິງ 14 ຄົນ;
  2) ສຳເລັດຈັດຕັ້ງການກິນຢາຂ້າແມ່ທ້ອງ ໃນໂຮງຮຽນປະຖົມ ແລະ ມັດທະຍົມສຶກສາຕອນຕົ້ນ ໃນຂອບເຂດ ທົ່ວປະເທດ ໃນເດືອນຕຸລາ 2023 ສຳເລັດຢູ່ໃນ 120 ເມືອງ, ຍັງ 28 ເມືອງ;
  3) ສຳເລັດສ້າງຄວາມເຂັ້ມແຂງ ໃນການສອດແຊກຄວາມຮູ້ພະຍາດວໍ້ ແລະ ການກິນຢາຂ້າແມ່ທ້ອງ ໃນໂຮງຮຽນ ຢູ່ແຂວງຊຽງຂວາງ, ຫົວພັນ, ຜົ້ງສາລີ ແລະ ອຸດົມໄຊ ໂດຍມີຜູ້ເຂົ້າຮ່ວມ ຈຳນວນ 296 ຄົນ , ຍິງ 142 ຄົນ;
  4) ສຳເລັດລົງຕິດຕາມການສອດແຊກຄວາມຮູ້ພະຍາດວໍ້ ແລະ ການກິນຢາຂ້າແມ່ທ້ອງໃນໂຮງຮຽນ ຢູ່ແຂວງບໍ່ແກ້ວ, ຫົວພັນ ແລະ ຄຳມ່ວນ ຊຶ່ງໄດ້ຊຸກຍູ້ຊ່ວຍເຫຼືອຄູ 64 ທ່ານ ແລະ ສຳພາດນັກຮຽນ ຈຳນວນ 760 ຄົນ;
  5) ສຳເລັດຝຶກອົບຮົມ ແລະ ລົງຕິດຕາມການສອນສອດແຊກຄວາມຮູ້ ກ່ຽວກັບ ເພດສຶກສາ, ທັກສະຊີວິດ ໃນແຂວງ ຫຼວງພະບາງ, ສະຫວັນນະເຂດ ໂດຍມີຜູ້ເຂົ້າຮ່ວມຈຳນວນ 98 ຄົນ (ຍິງ 49 ຄົນ);
  6) ສຳເລັດຝຶກອົບຮົມການສອນສອດແຊກຄວາມຮູ້ ກ່ຽວກັບ ພະຍາດໃບໄມ້ໃນເລືອດ ໃຫ້ແກ່ຄູສອນໃນເມືອງ ມູນລະປະໂມກ ແລະ ເມືອງ, ແຂວງຈຳປາສັກ ຜູ້ເຂົ້າຮ່ວມຈຳນວນ 198 ຄົນ (ຍິງ 104 ຄົນ);
  7) ສຳເລັດແຈກຢາຍປຶ້ມຄູ່ມືກິນຢາຂ້າແມ່ທ້ອງໃນໂຮງຮຽນປະຖົມ ແລະ ມັດທະຍົມສຶກສາຕອນຕົ້ນ ໃຫ້ທຸກ ໂຮງຮຽນໃນທົ່ວປະເທດ ແລະ ແຈກຢາຍແຜ່ນພັບ, ປືດສະເຕີຄວາມຮູ້ພະຍາດວໍ້ ແລະ ເພດສຶກສາ ໃຫ້ໂຮງຮຽນໃນແຂວງເປົ້າໝາຍ.

**ກຸ່ມກິດຈະກຳທີ 11: ສົ່ງເສີມການສຸຂະອະນາໄມ, ນ້ຳສະອາດ, ສຸຂະພິບານ ແລະ ການລ້າງມື ໃນໂຮງຮຽນ:**

- **<u>ຕົວຊີ້ບອກທີ 10</u>:** 73% ໂຮງຮຽນອະນຸບານ ໄດ້ນຳໃຊ້ແຫຼ່ງນ້ຳດື່ມ ທີ່ມີການປັບປຸງແລ້ວ ເມື່ອທຽບໃສ່ແຜນການປີ ແມ່ນ 81% ແມ່ນບໍ່ບັນລຸ. ສ່ວນໂຮງຮຽນປະຖົມ ບໍ່ມີຂໍ້ມູນ ທຽບໃສ່ແຜນການປີ 2023 ແມ່ນ 77.5%.
- **<u>ຕົວຊີ້ບອກທີ 11</u>:** ອັດຕາສ່ວນຮ້ອຍຂອງໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມ ທີ່ໄດ້ນຳໃຊ້ ສິ່ງອຳນວຍຄວາມສະດວກດ້ານສຸຂາພິບານ ທີ່ໄດ້ຖືກປັບປຸງແລ້ວ (ວິດຖ່າຍ). ກ່ອນໄວຮຽນປະຕິບັດໄດ້ 72% ແລະ ສ່ວນປະຖົມ **<u>(ບໍ່ມີຂໍ້ມູນ)</u>**; ທຽບໃສ່ແຜນການປີ 2023 ແມ່ນ (77.5%), 72% ຂອງໂຮງຮຽນອະນຸບານ ໄດ້ນຳໃຊ້ສິ່ງອຳນວຍຄວາມສະດວກດ້ານສຸຂາພິບານ ທີ່ໄດ້ຖືກປັບປຸງແລ້ວ ທຽບໃສ່ແຜນການປີ ແມ່ນ 81% ແມ່ນບໍ່ບັນລຸ. ສ່ວນໂຮງຮຽນປະຖົມ ບໍ່ມີຂໍ້ມູນ ທຽບໃສ່ແຜນການປີ 2023 ແມ່ນ 77.5%.
- **<u>ຕົວຊີ້ບອກທີ 12</u>:** 65% ຂອງໂຮງຮຽນອະນຸບານ ໄດ້ນຳໃຊ້ສະຖານທີ່ລ້າງມືດ້ວຍສະບູ ເມື່ອທຽບໃສ່ແຜນການປີ ແມ່ນ 81% ແມ່ນບໍ່ສຳເລັດ. ສ່ວນໂຮງຮຽນປະຖົມ ບໍ່ມີຂໍ້ມູນ ທຽບໃສ່ແຜນການປີ ແມ່ນ 77.5% ແມ່ນບໍ່ສຳເລັດ.

1) ວຽກງານສຸຂະອະນາໄມ, ນ້ຳສະອາດ, ກິດຈະກຳລ້າງມືຖູແຂ້ວ ໄດ້ຈັດຕັ້ງປະຕິບັດເປັນປົກກະຕິ ໃນສະຖານການສຶກສາກ່ອນໄວຮຽນໃນທົ່ວປະເທດ;
2) ສຳເລັດກອງປະຊຸມສ້າງຖານຂໍ້ມູນວຽກງານນ້ຳ ແລະ ສຸຂະອະນາໄມ ໂດຍນຳໃຊ້ຮູບແບບ 03 ດາວ ສຳລັບສະຖານການສຶກສາກ່ອນໄວຮຽນ ແຕ່ວັນທີ 17–21 ກໍລະກົດ 2023 ທີ່ຫ້ອງປະຊຸມລີສອດນາປ່າກວາງ, ທ່າລາດ, ແຂວງວຽງຈັນ;
3) ສຳເລັດກອງປະຊຸມເຄື່ອງມືການປະເມີນວຽກງານນ້ຳ ແລະ ສຸຂະອະນາໄມ ໂດຍນຳໃຊ້ຮູບ 03 ດາວ ສຳລັບສະຖານການສຶກສາກ່ອນໄວຮຽນ ແຕ່ວັນທີ 16-18 ສິງຫາ 2023 ທີ່ ໂຮງແຮມ ເລີ ທາດຫຼວງ ດໍ ນະຄອນຫຼວງວຽງຈັນ;
4) ສຳເລັດການຝຶກອົບຮົມການສັງລວມ, ວິເຄາະຂໍ້ມູນຜົນຂອງການປະເມີນໂຮງຮຽນປະຖົມດ້ານນ້ຳ ແລະ ສຸຂະອະນາໄມ ຕາມຮູບແບບ 03 ດາວ ໃນ 04 ແຂວງ ຄື ແຂວງ ຜົ້ງສາລີ, ອຸດົມໄຊ, ຊຽງຂວາງ ແລະ ໄຊສົມບູນ.

**ກຸ່ມກິດຈະກຳທີ 12: ສະໜອງ ແລະ ສົ່ງເສີມອາຫານທ່ຽງທີ່ມີໂພຊະນາການໃນໂຮງຮຽນ:**

- **<u>ຕົວຊີ້ບອກທີ 23</u>:** ອັດຕາສ່ວນຮ້ອຍຂອງໂຮງຮຽນ ທີ່ໄດ້ຮັບການສະໜອງ ແລະ ສົ່ງເສີມອາຫານທ່ຽງທີ່ມີໂພຊະນາການໃນໂຮງຮຽນເປົ້າໝາຍ ໃນຊັ້ນປະຖົມສຶກສາ ໃນ 40 ເມືອງບູລິມະສິດຂອງ ກະຊວງສຶກສາທິການ ແລະ ກິລາ ປະຕິບັດໄດ້ 66.48%.

1) ການສົ່ງເສີມອາຫານທ່ຽງໃນໂຮງຮຽນ ໄດ້ຈັດຕັ້ງປະຕິບັດຢູ່ 16 ແຂວງ, 01 ນະຄອນຫຼວງ, 65 ເມືອງ 3,327 ໂຮງຮຽນ, ນັກຮຽນອະນຸບານ ແລະ ປະຖົມ ໄດ້ຮັບຜົນປະໂຫຍດທັງໝົດ ຈຳນວນ 222,183 ຄົນ (ຍິງ 108,317 ຄົນ), ໃນນັ້ນ ມີນັກຮຽນລ້ຽງເດັກ ແລະ ອະນຸບານ ຈຳນວນ 26,575 ຄົນ (ຍິງ 13,143 ຄົນ), ນັກຮຽນປະຖົມ ຈຳນວນ 195,608 ຄົນ (ຍິງ 95,174 ຄົນ);
2) ສຳເລັດກອງປະຊຸມຝຶກອົບຮົມການນຳໃຊ້ເຄື່ອງມືປະເມີນ ໃຫ້ແກ່ໜ່ວຍງານ ປະຕິບັດກິດຈະກຳໂຄງການຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ວາງແຜນລົງປະເມີນຄວາມຕ້ອງການ ການສົ່ງເສີມກຸ່ມຊາວກະສິກອນ ໃນບັນດາບ້ານເປົ້າໝາຍໂຄງການອາຫານທ່ຽງໃນໂຮງຮຽນ (2020–2025) ໃນວັນທີ 16 ມັງກອນ 2023 ທີ່ຫ້ອງປະຊຸມພະແນກສຶກສາທິການ ແລະ ກິລາແຂວງຈຳປາສັກ ແລະ ຫ້ອງປະຊຸມພະແນກສຶກສາທິການ ແລະ ກິລາແຂວງຄຳມ່ວນ ພາຍໃຕ້ການສະໜັບສະໜູນຂອງອົງການອາຫານໂລກ;
3) ກອງປະຊຸມຖອດຖອນບົດຮຽນປະຈຳປີ ກ່ຽວກັບ ການຄຸ້ມຄອງບໍລິຫານວຽກງານອາຫານທ່ຽງໃນໂຮງຮຽນ ຂັ້ນເມືອງ ແລະ ຂັ້ນແຂວງເປົ້າໝາຍ ຂອງແຂວງຫຼວງພະບາງ, ແຂວງບໍ່ແກ້ວ ແລະ ແຂວງຊຽງຂວາງ ພາຍໃຕ້ໂຄງການສົ່ງເສີມອາຫານທ່ຽງໃນໂຮງຮຽນ 05 ປີ (2021-2025);
4) ສຳເລັດກອງປະຊຸມວິຊາການວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ທີ່ເມືອງອາດສະພອນ ແລະ ພະລານໄຊ ກ່ຽວກັບ ການສະໜອງທຶນຂະໜາດນ້ອຍ ແລະ ປຶກສາຫາລື ກ່ຽວກັບ ແຜນມອບ-ໂອນວຽກງານອາຫານທ່ຽງໃຫ້ລັດຖະບານ ສືບຕໍ່ຈັດຕັ້ງປະຕິບັດ ແລະ ລົງຕິດຕາມ ຢ້ຽມຢາມກິດຈະກຳອາຫານທ່ຽງໃນໂຮງຮຽນ ທີ່ເມືອງອຸທຸມພອນ, ແຂວງສະຫວັນນະເຂດ ພາຍໃຕ້ໂຄງການສົ່ງເສີມເດັກນ້ອຍທຸກຄົນໄດ້ເຂົ້າຮຽນຊັ້ນປະຖົມສຶກສາ ໄລຍະທີ III ໃນລະຫວ່າງວັນທີ 21 ກຸມພາ ຫາ 01 ມີນາ 2023;
5) ສຳເລັດກອງປະຊຸມທົບທວນ ແລະ ປຶກສາຫາລື ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ພາຍຫຼັງຜູ້ໃຫ້ທຶນ ແລະ ຄູ່ຮ່ວມພັດທະນາໄດ້ມອບໂອນໃຫ້ລັດຖະບານ ແຕ່ວັນທີ 15-17 ມີນາ 2023;
6) ສຳເລັດກອງປະຊຸມຝຶກອົບຮົມການຜະລິດກະສິກຳຂອງໂຮງຮຽນ ແລະ ຄວາມຮູ້ພື້ນຖານດ້ານໂພຊະນາການໃຫ້ແກ່ຄະນະຮັບຜິດຊອບຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ພາຍໃຕ້ໂຄງການອາຫານທ່ຽງໃນໂຮງຮຽນ (2020-2025) ໃນວັນທີ 21 ມີນາ 2023 ທີ່ນະຄອນຫຼວງວຽງຈັນ, ແຕ່ວັນທີ 27-28

ມີນາ 2023 ທີ່ແຂວງຈຳປາສັກ ແລະ ແຕ່ວັນທີ 30-31 ມີນາ 2023 ທີ່ແຂວງເຊກອງ ແລະ ແຂວງວຽງຈັນ;

7) ສຳເລັດກອງປະຊຸມທົບທວນຂອດປະສານງານ ແລະ ການລາຍງານຂອງຄະນະປະສານງານໂຄງການອາຫານທ່ຽງໃນໂຮງຮຽນ ສຳລັບ 03 ເມືອງຂອງ 03 ແຂວງ ທີ່ກະຊວງສຶກສາທິການ ແລະ ກິລາ ຮັບຜິດຊອບ ແຕ່ວັນທີ 18-20 ກໍລະກົດ 2023 ທີ່ໂຮງແຮມແຖູນຫຼວງພະບາງ, ແຂວງຫຼວງພະບາງ;
8) ສຳເລັດກອງປະຊຸມເຜີຍແຜ່ດຳລັດວ່າດ້ວຍການສົ່ງເສີມອາຫານທ່ຽງໃນໂຮງຮຽນ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງຮຽນທີ່ມີການສົ່ງເສີມອາຫານທ່ຽງໃນໂຮງຮຽນ, ຂໍ້ຕົກລົງວ່າດ້ວຍການສ້າງໂຮງຮຽນຕົວແບບ ແລະ ຄູ່ມືແນະນຳການສ້າງ ແລະ ການປະເມີນໂຮງຮຽນຕົວແບບວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນຂັ້ນສູນກາງ, 17 ແຂວງ ແລະ 01 ນະຄອນຫຼວງ;
9) ສຳເລັດເຂົ້າຮ່ວມກອງປະຊຸມຖອດຖອນບົດຮຽນ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ປະຈຳໄຕມາດທີ 03 ຂອງໂຄງການສົ່ງເສີມເດັກນ້ອຍທຸກຄົນໄດ້ເຂົ້າຮຽນຊັ້ນປະຖົມໄລຍະ III ທີ່ແຂວງສະຫວັນນະເຂດ;
10) ສຳເລັດຈັດກອງປະຊຸມສ້າງຄວາມເຂັ້ມແຂງ ກ່ຽວກັບ ແຜນວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ແລະ ປຸກລະດົມຊຸມຊົນ ໃຫ້ແກ່ຂັ້ນແຂວງ ແລະ ຂັ້ນເມືອງ;
11) ສຳເລັດຈັດກອງປະຊຸມຜ່ານຜົນການປະເມີນລະບົບຄຸ້ມຄອງບໍລິຫານ ແລະ ຈັດຕັ້ງປະຕິບັດແຜນງານອາຫານທ່ຽງໃນໂຮງຮຽນ ໂດຍນຳໃຊ້ເຄື່ອງມື SABER ໃນສປປ ລາວ ປະຈຳປີ 2023;
12) ສຳເລັດນຳສະເໜີຂໍອະນຸຍາດນຳເຂົ້າ ແກ່ນຖົ່ວເຫຼືອງ ຈຳນວນ 3,800 ເປົ໋າ, ນໍ້າໜັກລວມ 190,000 ໂຕນ ລວມມູນຄ່າ 180,861,00 ໂດລາ ທີ່ໄດ້ຮັບການຊ່ວຍເຫຼືອລ້າຈາກອົງການອາຫານໂລກ ປະຈຳສປປ ລາວ;
13) ສຳເລັດກອງປະຊຸມເຜີຍແຜ່ປື້ມຄູ່ມືແນະນຳການບໍລິໂພກອາຫານ, ເຄື່ອງດື່ມທີ່ຖືກຫຼັກໂພຊະນາການ ແລະ ປອດໄພ ໃນສະຖານການສຶກສາກ່ອນໄວຮຽນໃຫ້ແກ່ຂັ້ນແຂວງ ແຕ່ວັນທີ 25-27 ຕຸລາ 2023 ທີ່ຫ້ອງປະຊຸມສະໂມສອນໄຟຟ້າ, ທ່າລາດ, ແຂວງວຽງຈັນ ລວມຜູ້ເຂົ້າຮ່ວມທັງໝົດ 20 ທ່ານ (ຍິງ 15 ທ່ານ);
14) ສຳເລັດຈັດກອງປະຊຸມປຶກສາຫາລື ກ່ຽວກັບ ຄຳແນະນຳສຳລັບຜູ້ປຸງແຕ່ງອາຫານທ່ຽງໃນສະຖານການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ;
15) ສຳເລັດເຂົ້າຮ່ວມການຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອ ການຈັດຕັ້ງປະຕິບັດໂຄງກາອາຫານທ່ຽງໃນໂຮງຮຽນ ທີ່ແຂວງຈຳປາສັກ, ສາລະວັນ, ເຊກອງ, ແຂວງຫຼວງນໍ້າທາ ແລະ ຫຼວງພະບາງ ແຕ່ວັນທີ 20-24 ກຸມພາ 2023.

## 4. ວຽກງານຫຼາຍຂະແໜງການ:

**ທັງໝົດ ມີ 7 ກຸ່ມກິດຈະກຳ ແລະ 11 ຕົວຊີ້ບອກ**

| ກຸ່ມ ກິດຈະກຳ | ລຳດັບຕົວຊີ້ບອກ | ຂໍ້ມູນພື້ນ ຖານ 2020 | ເປົ້າໝາຍ 2021 | ປະຕິບັດໄດ້ 2022 | ປະຕິບັດໄດ້ 2023 | ເປົ້າໝາຍ 2023 | ເປົ້າໝາຍ 2025 |
|---|---|---|---|---|---|---|---|
| 14 | **ຕົວຊີ້ບອກທີ 25:** ອັດຕາສ່ວນຮ້ອຍຂອງຄະນະກຳມະການໂພຊະນາການຂັ້ນແຂວງ ແລະ ຂັ້ນເມືອງ (PNCs/ DNCs) ໄດ້ຈັດກອງປະຊຸມຢ່າງໜ້ອຍ 02 ເທື່ອຕໍ່ປີ. | NA | | ສຳເລັດ | 72% | | 80% |
| | **ຕົວຊີ້ບອກທີ 26:** ຈຳນວນນະໂຍບາຍ, ດຳລັດ ແລະ ຂໍ້ແນະນຳໃໝ່ ກ່ຽວກັບ ການສົ່ງເສີມໂພຊະນາການທີ່ໄດ້ຖືກພັດທະນາ ແລະ ເຜີຍແຜ່. | NA | | ບໍ່ມີຂໍ້ມູນ | 3 | | 30 |
| 15 | **ຕົວຊີ້ບອກທີ 27:** ອັດຕາສ່ວນຮ້ອຍຂອງຜູ້ປະສານງານດ້ານໂພຊະນາການ (ຈຸດປະສານງານດ້ານໂພຊະນາການ) ຢູ່ຂັ້ນສູນກາງ, ແຂວງ ແລະ ເມືອງ ທີ່ໄດ້ຮັບການອົບຮົມດ້ານໂພຊະນາການ. (ແຍກຕາມເພດ: ຍິງ-ຊາຍ) | NA | | 63% (11 ແຂວງ+ສູນກາງ) | 39 % | | 70% |
| | **ຕົວຊີ້ບອກທີ 28:** ອັດຕາສ່ວນຮ້ອຍ ຂອງພະນັກງານ-ລັດຖະກອນທັງໝົດ ທີ່ເຮັດວຽກ ກ່ຽວກັບ ໂພຊະນາການຢູ່ຂັ້ນສູນກາງ, ແຂວງ ແລະ ເມືອງ ທີ່ໄດ້ຮັບການອົບຮົມດ້ານໂພຊະນາການ. (ແຍກຕາມເພດ: ຍິງ-ຊາຍ) | NA | | ບໍ່ມີຂໍ້ມູນ | ບໍ່ມີຕົວຫານ | | 50% |
| 17 | **ຕົວຊີ້ບອກທີ 30:** ອັດຕາສ່ວນຮ້ອຍຂອງໜ່ວຍງານໃນຂັ້ນສູນກາງ, ແຂວງ ແລະ ເມືອງ ທີ່ໄດ້ລາຍງານເປັນປົກກະຕິ ກ່ຽວກັບ ໂພຊະນາການໂດຍຂະແໜງການ (ສາທາລະນະສຸກ, ສຶກສາທິການ ແລະ ກິລາ, ກະສິກຳ ແລະ ປ່າໄມ້). | NA | | ສຳເລັດ | ບໍ່ມີຂໍ້ມູນ | | 100% |
| | **ຕົວຊີ້ບອກທີ 31:** ອັດຕາສ່ວນຮ້ອຍຂອງພະນັກງານ-ລັດຖະກອນທັງໝົດ ທີ່ເຮັດວຽກກ່ຽວກັບໂພຊະນາການ (ຂັ້ນສູນກາງ, ແຂວງ ແລະ ເມືອງ) ທີ່ໄດ້ຮັບການອົບຮົມ ໂດຍສະເພາະ ກ່ຽວກັບ ການຕິດຕາມ ແລະ ປະເມີນຜົນ, ການປະເມີນ ແລະ ການຮຽນຮູ້ (MEAL). (ແຍກຕາມເພດ: ຍິງ-ຊາຍ) | NA | | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | | 50% |
| 18 | **ຕົວຊີ້ບອກທີ 32:** ອັດຕາສ່ວນຮ້ອຍຂອງການຈັດຕັ້ງຂັ້ນສູນກາງ, ແຂວງ ແລະ ເມືອງ ທີ່ໄດ້ລາຍງານດ້ານການເງິນ ກ່ຽວກັບ ໂພຊະນາການແຕ່ລະຂະແໜງ (ສາທາລະນະສຸກ, ສຶກສາທິການ ແລະ ກິລາ, ກະສິກຳ ແລະ ປ່າໄມ້). | NA | | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | | 70% |
| 19 | **ຕົວຊີ້ບອກທີ 33:** ອັດຕາສ່ວນຮ້ອຍຂອງການໃຊ້ຈ່າຍດ້ານໂພຊະນາການທັງໝົດ ຈາກການລົງທຶນພາຍໃນປະເທດ ເມື່ອສົມທຽບໃສ່ການຊ່ວຍເຫຼືອທາງການດ້ານການພັດທະນາ (ODA). | 9% | | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | | 15% |
| 20 | **ຕົວຊີ້ບອກທີ 34:** ອັດຕາສ່ວນຮ້ອຍຂອງພະນັກງານ-ລັດຖະກອນທັງໝົດ ທີ່ເຮັດວຽກ ກ່ຽວກັບ ໂພຊະນາການຢູ່ຂັ້ນສູນກາງ, ແຂວງ ແລະ ເມືອງ ທີ່ໄດ້ຮັບການອົບຮົມສະເພາະ ກ່ຽວກັບ ໂພຊະນາການໃນໄພພິບັດ ແລະ ເຫດສຸກເສີນ. (ແຍກຕາມເພດ: ຍິງ-ຊາຍ) | NA | | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | | 80% |
| 21 | **ຕົວຊີ້ບອກທີ 35:** ອັດຕາສ່ວນຮ້ອຍຂອງແຂວງ ແລະ ເມືອງ ທີ່ໄດ້ຈັດຕັ້ງປະຕິບັດແຜນງານ ກ່ຽວກັບ ການສື່ສານເພື່ອປ່ຽນແປງພຶດຕິກຳ ແລະ ຄວາມເຄີຍຊິນຂອງສັງຄົມ ຂອງຫຼາຍຂະແໜງການເພື່ອສົ່ງເສີມພຶດຕິກຳ ແລະ ພາກປະຕິບັດທີ່ດີ ທາງດ້ານໂພຊະນາການ. | NA | | 9.6 % | ບໍ່ມີຂໍ້ມູນ | | 80% ແຂວງ ແລະ ເມືອງ |
| 22 | **ຕົວຊີ້ບອກທີ 36:** ອັດຕາສ່ວນຮ້ອຍຂອງບັນດາແຂວງ ແລະ ເມືອງ ທີ່ໄດ້ໃຫ້ຂໍ້ມູນ ກ່ຽວກັບ ບົດບາດຍິງ-ຊາຍ ແລະ ໂພຊະນາການ ໄດ້ສົ່ງເສີມຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ໃນກຸ່ມກິດຈະກຳດ້ານໂພຊະນາການ. | NA | | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | | 80% ແຂວງ ແລະ ເມືອງ |

**ກຸ່ມກິດຈະກຳທີ 14: ສ້າງຄວາມເຂັ້ມແຂງດ້ານຄວາມສາມາດຂອງສະຖາບັນ, ການປົກຄອງ, ການຄຸ້ມຄອງ, ການວາງແຜນ ແລະ ການປະສານງານ ລະຫວ່າງຂະແໜງການໃນທຸກລະດັບ:**

- **<u>ຕົວຊີ້ບອກທີ 25:</u>** ອັດຕາສ່ວນຮ້ອຍຂອງຄະນະກຳມະການໂພຊະນາການຂັ້ນແຂວງ ແລະ ເມືອງ (PNCs/DNCs) ໄດ້ຈັດກອງປະຊຸມຢ່າງໜ້ອຍ 02 ຄັ້ງຕໍ່ປີ ໄດ້ 72% ມີການປັບປຸງຄະນະກຳມະການໂພຊະນາການຂັ້ນແຂວງ ແລະ ເມືອງ ຢ່າງເປັນປົກກະຕິ.
  1) ສຳເລັດການຈັດກອງປະຊຸມແຫ່ງຊາດດ້ານໂພຊະນາການ ຄັ້ງທີ VIII ແລະ ກອງປະຊຸມຄະນະກຳມະການແຫ່ງຊາດດ້ານໂພຊະນາການ ປະຈຳປີ 2022;
  2) ສຳເລັດກອງປະຊຸມກອງເລຂາຄະນະກຳມະການແຫ່ງຊາດດ້ານໂພຊະນາການປະຈຳໄຕ 1, 2, 3 ຂອງປີ 2023;
  3) ໄດ້ຮັບບົດລາຍງານຂອງຄະນະກຳມະການໂພຊະນາການຂັ້ນແຂວງ ແລະ ຂະແໜງການກ່ຽວຂ້ອງ ຕາມກຳນົດເວລາ, ຄະນະກຳມະການໂພຊະນາການຂັ້ນແຂວງ ແລະ ຂັ້ນເມືອງ ໄດ້ຈັດກອງປະຊຸມມີ ແຂວງ 14 ແຂວງ ຄື: ແຂວງວຽງຈັນ, ບໍລິຄຳໄຊ, ຊຽງຂວາງ, ໄຊຍະບູລີ, ບໍ່ແກ້ວ, ຫົວພັນ, ຜົ້ງສາລີ, ອຸດົມໄຊ, ຫຼວງພະບາງ, ຄຳມ່ວນ, ສະຫວັນນະເຂດ, ເຊກອງ, ຈຳປາສັກ ແລະ ອັດຕະປື;
  4) ຕິດຕາມ ແລະ ປະເມີນວຽກງານຂອງຄະນະກຳມະການໂພຊະນາການຂັ້ນແຂວງ ແລະ ເມືອງ ຄື ເມືອງຄຳ, ນາໝໍ້, ບຸນໃຕ້ ແລະ ຊຳໃຕ້ ) ຈັດຕັ້ງປະຕິບັດໂດຍ ກະຊວງແຜນການ ແລະ ການລົງທຶນ;
  5) ມີການປັບປຸງຂໍ້ຕົກລົງຄະນະກຳມະການໂພຊະນາການ ຂັ້ນແຂວງ ໃນ 05 ແຂວງ ຄື ແຂວງອັດຕະປື, ແຂວງຫຼວງພະບາງ, ນະຄອນຫຼວງວຽງຈັນ, ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ;
  6) ສຳເລັດກອງປະຊຸມທົບທວນຈັດຕັ້ງປະຕິບັດແຜນງານໜຶ່ງດຽວ ສ່ວນຮ່ວມກັບຫຼາຍຂະແໜງ ການ ເພື່ອປັບປຸງວຽກງານໂພຊະນາການຢູ່ 04 ແຂວງ ພາກເໜືອ ຂອງ ສປປ ລາວ ປະຈຳປີ 2023 ທີ່ເມືອງແປກ, ແຂວງຊຽງຂວາງ;
  7) ເຂົ້າຮ່ວມກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານແບບຄອນເນັກ (CONNECT) ປະຈຳປີ 2022 ແລະ ແຜນການຈັດຕັ້ງປະຕິບັດ ປີ 2023 ລະຫວ່າງກະຊວງສາທາລະນະສຸກ ແລະ ກະຊວງພາຍໃນ ນະຄອນຫຼວງວຽງຈັນ;
  8) ສຳເລັດການລົງເກັບຂໍ້ມູນ ກ່ຽວກັບ ການສ້າງແຜນທີ່ປົກຄຸມການຈັດຕັ້ງປະຕິບັດວຽກງານໂພຊະນາການ (Mapping) ຢູ່ໃນ 03 ພາກ ໂດຍຈັດຕັ້ງປະຕິບັດ ຢູ່ແຂວງຫຼວງນໍ້າທາ;
  9) ສຳເລັດກອງປະຊຸມປຶກສາຫາລືວຽກງານໂພຊະນາການ ກັບ DPs ຕ່າງໆ ເຊັ່ນ UNICEF, WHO, Caritas, CRS, World Vision, JSI, Lao Freindship hospital;
  10) ສຳລັບຂະແໜງສຶກສາທິການ ແລະ ກິລາ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບວຽກງານໂພຊະນາການ ຢູ່ໃນຂະແໜງການຂອງຕົນ;
  11) ໄດ້ສຳເລັດການອອກແບບ ໂປດສະເຕີ ສຳລັບອະທິບາຍ ກ່ຽວກັບ ແຜນງານໜຶ່ງດຽວທີ່ມີສ່ວນຮ່ວມຫຼາຍຂະແໜງການ ເພື່ອແຈກຢາຍໃຫ້ກັບບ້ານເປົ້າໝາຍຂອງແຜນງານ;
  12) ໄດ້ສຳເລັດການຝຶກອົບຮົມບົດແນະນຳການປະສານງານດ້ານໂພຊະນາການ ໃຫ້ແກ່ຄະນະປະສານງານແຜນງານຂັ້ນບ້ານ ທີ່ເມືອງນາໝໍ້, ແຂວງ ອຸດົມໄຊ ແລະ ເມືອງ ຄຳ, ແຂວງ ຊຽງຂວາງ;
  13) ກອງປະຊຸມທົບທວນການຈັດຕັ້ງປະຕິບັດແຜນງານໜຶ່ງດຽວ ຂັ້ນແຂວງ ຢູ່ ໃນ 04 ແຂວງ ຄື ແຂວງຊຽງຂວາງ, ຫົວພັນ, ຫຼວງພະບາງ ແລະ ຜົ້ງສາລີ.
- **<u>ຕົວຊີ້ບອກທີ 26:</u>** ຈຳນວນນະໂຍບາຍ, ດຳລັດ ແລະ ຂໍ້ແນະນຳໃໝ່ ກ່ຽວກັບ ການສົ່ງເສີມໂພຊະນາການທີ່ໄດ້ຖືກພັດທະນາ ແລະ ເຜີຍແຜ່.
  1) ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດດຳລັດວ່າດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ;
  2) ເຜີຍແຜ່ດຳລັດວ່າດ້ວຍອາຫານທ່ຽງໃນໂຮງຮຽນ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງຮຽນທີ່ມີການສົ່ງເສີມອາຫານທ່ຽງໃນໂຮງຮຽນ, ຂໍ້ຕົກລົງວ່າດ້ວຍການສ້າງໂຮງຮຽນຕົວແບບ ແລະ ຄູ່ມືແນະນຳການສ້າງ ແລະ ການປະເມີນໂຮງຮຽນຕົວແບບວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;

3) ເຂົ້າຮ່ວມການປະເມີນຜົນໄລຍະກາງສະໄໝ ຂອງໂຄງການປະຕິບັດງານດ້ານໂພຊະນາການ ຮ່ວມກັບທີ່ປຶກສາໃນ 06 ບ້ານເປົ້າໝາຍຂອງໂຄງການ ຢູ່ເມືອງສະໜ້ອຍ, ແຂວງສາລະວັນ;
4) ສຳເລັດອົບຮົມຫຼັກສູດທີ່ໃຫ້ຄໍາປຶກສາການລ້ຽງລູກດ້ວຍນໍ້ານົມແມ່ໄລຍະ 03 ເດືອນ ຢ່າງໜ້ອຍ 02 ຊຸດ ບໍ່ຫຼຸດ 50 ທ່ານ.

**ກຸ່ມກິດຈະກຳທີ 15: ສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດຂອງແຫຼ່ງຊັບພະຍາກອນມະນຸດ ໃນທຸກຂະແໜງການ ແລະ ໃນທຸກຂັ້ນ**

- **ຕົວຊີ້ບອກທີ 27:** ອັດຕາສ່ວນຮ້ອຍຂອງຜູ້ປະສານງານດ້ານໂພຊະນາການ (ຈຸດປະສານງານດ້ານໂພຊະນາການ) ຢູ່ຂັ້ນສູນກາງ, ແຂວງ ແລະ ເມືອງ ທີ່ໄດ້ຮັບການຝຶກອົບຮົມດ້ານໂພຊະນາການ. (ແຍກຕາມເພດ: ຍິງ-ຊາຍ) ປະຕິບັດໄດ້ 39%.
- **ຕົວຊີ້ບອກທີ 28:** ອັດຕາສ່ວນຮ້ອຍຂອງພະນັກງານ-ລັດຖະກອນທັງໝົດ ທີ່ເຮັດວຽກ ກ່ຽວກັບ ໂພຊະນາການຢູ່ໃນຂັ້ນສູນ ກາງ, ແຂວງ, ເມືອງ ທີ່ໄດ້ຮັບການຝຶກອົບຮົມດ້ານໂພຊະນາການ. (ແຍກຕາມເພດ ຍິງ-ຊາຍ) ຍັງບໍ່ສາມາດປະເມີນໄດ້ ຈຳນວນພະນັກງານ-ລັດຖະກອນທັງໝົດ ທີ່ເຮັດວຽກ ກ່ຽວກັບ ໂພຊະນາການຢູ່ໃນຂັ້ນສູນກາງ, ແຂວງ ແລະ ເມືອງ.
  1) ທຸກວັນພຸດຂອງອາທິດທີ 01 ມີການສຳມະນາ ກ່ຽວກັບ ໂພຊະນາການ ທາງອອນລາຍ ໃນ 06 ເດືອນ ມີຜູ້ເຂົ້າຮ່ວມຫຼາຍກວ່າ 237 ເທື່ອຄົນ;
  2) ພະນັກງານສູນໂພຊະນາການ ແລະ ສະຖາບັນສາທາລະນະສຸກສາດ  ແລະ ການແພດເຂດຮ້ອນ ຈຳນວນ 09 ທ່ານ ໄດ້ຮັບການອົບຮົມ ກ່ຽວກັບ ການຄົ້ນຄວ້າວິທະຍາສາດດ້ານໂພຊະນາການ ທີ່ ມະຫາໄລ ອິນເດຍນາ ແລະ ມະຫາໄລ ເພີດູ ໂດຍທຶນສະໜັບສະໜູນໂດຍອົງການບັນເທົາທຸກກາໂຕລິກ (CRS);
  3) ຝຶກອົບຮົມ ການວັດແທກຮ່າງກາຍເດັກລຸ່ມ 05 ປີໃຫ້ ພະນັກງານຫ້ອງການສາທາລະນະສຸກເມືອງ ແລະ ພະນັກງານໂຮງໝໍນ້ອຍ ຢູ່ 04 ແຂວງ ຄື ແຂວງຊຽງຂວາງ, ແຂວງບໍລິຄຳໄຊ, ແຂວງວຽງຈັນ ແລະ ແຂວງສະຫວັນນະເຂດ ມີຜູ້ເຂົ້າຮ່ວມ 27 ທ່ານ ຮ່ວມກັບ ອົງການແຄລິຕັສ;
  4) ສຳເລັດກອງປະຊຸມຝຶກອົບຮົມການຜະລິດກະສິກຳຂອງໂຮງຮຽນ ແລະ ຄວາມຮູ້ພື້ນຖານດ້ານໂພຊະນາການໃຫ້ແກ່ຄະນະຮັບຜິດຊອບຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ຂອງເມືອງເຟືອງ, ແຂວງວຽງຈັນ ແລະ ເມືອງສັງທອງ ນະຄອນຫຼວງວຽງຈັນ ພາຍໃຕ້ໂຄງການອາຫານທ່ຽງໃນໂຮງຮຽນ 2020-2025 ທີ່ແຂວງວຽງຈັນ;
  5) ສຳເລັດ ຮ່າງຄຳສັບໂພຊະນາການ ຮ່ວມກັບ ຫຼາຍຂະແໜງການ ສະໜັບສະໜູນໂດຍໂຄງການ ANRCB;
  6) ສຳເລັດຝຶກອົບຮົມ ກ່ຽວກັບ ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ໃຫ້ຜູ້ປະສານງານຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ຈຳນວນ 25 ທ່ານ ທີ່ມະຫາວິທະຍາໄລ ມະຣິດົນ ປະເທດໄທ;
  7) ສຳເລັດເຂົ້າຮ່ວມຝຶກອົບຮົມວຽກງານການຕິດຕາມເຝົ້າລະວັງໂພຊະນາການເດັກລຸ່ມ 05 ປີ ແລະ ການປ້ອນຂໍ້ມູນໃນລະບົບ *M–Supply* ເຂົ້າໃນ *DHIS2* ໃຫ້ພະນັກງານສາທາລະນະສຸກ 18 ແຂວງທົ່ວປະເທດ;
  8) ຕາມການເກັບກຳຂໍ້ມູນແບບສອບຖາມ ຜູ້ປະສານງານຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ຈາກ 18 ແຂວງ ທັງໝົດ 230 ທ່ານ ໄດ້ຝຶກອົບຮົມ ກ່ຽວກັບ ວຽກງານໂພຊະນາການ 90 ທ່ານ (ຍິງ 60 ທ່ານ) ທັງພາຍໃນ ແລະ ຕ່າງປະເທດ ໃນຫົວຂໍ້ຝຶກອົບຮົມ: ວຽກງານການຄໍ້າປະກັນສະບຽງອາຫານ ແລະ ອົບຮົມມີຜູ້ປະສານງານຂັ້ນແຂວງ ກ່ຽວກັບ ການເກັບກຳຂໍ້ມູນ ກ່ຽວກັບ ໂພຊະນາການ;
  9) ໄດ້ສຳເລັດການຝຶກອົບຮົມປົດແນະນຳການປະສານງານດ້ານໂພຊະນາການໃຫ້ແກ່ຄະນະປະສານງານແຜນງານຂັ້ນບ້ານ ທີ່ເມືອງ ນາໝໍ້, ແຂວງ ອຸດົມໄຊ ແລະ ເມືອງ ຄຳ, ແຂວງ ຊຽງຂວາງ;

10) ສໍາເລັດກອງປະຊຸມປຶກສາຫາລືວຽກງານໂພຊະນາການ ກັບ *DPs* ຕ່າງໆ ເຊັ່ນ *UNICEF, WHO, Caritas, CRS, World Vision, JSI, Lao Freindship hospital*;
11) ສໍາເລັດຈັດອົບຮົມການວັດແທກຮ່າງກາຍ ໃຫ້ກັບ 09 ເມືອງ ໃນນະຄອນຫຼວງວຽງຈັນ ທີ່ຫ້ອງປະຊຸມສູນໂພຊະນາການ;
12) ຈັດກອງປະຊຸມປະຈໍາ 06 ເດືອນຕົ້ນປີ ແລະ ວາງແຜນ 06 ເດືອນທ້າຍປີ 2023 ຂອງໂຄງການປັບປຸງຄຸນນະພາບ ແລະ ສ້າງຂີດຄວາມສາມາດ ໃນການພັດທະນາຊຸມຊົນຂອງແຜນງານ ສໍາລັບສຸຂະພາບຈະເລີນພັນ, ແມ່ຍິງ ແລະ ເດັກນ້ອຍ ທີ່ ແຂວງຫຼວງນໍ້າທາ;
13) ຝຶກອົບຮົມຄູ, ພໍ່ແມ່ ແລະ ຜູ້ປົກຄອງ ນັກຮຽນ ເຮືອນລ້ຽງເດັກ-ອະນຸບານສາທິດ (ມະຫາວິທະຍາໄລແຫ່ງຊາດ) ໃນຫົວຂໍ້ ການສົ່ງເສີມໂພຊະນາການເດັກອາຍຸ 0-6 ປີ ໃຫ້ແກ່ພະນັກງານຄູ, ແມ່ລ້ຽງ ແລະ ຜູ້ປົກຄອງເດັກ ພາຍໃນເຮືອນລ້ຽງເດັກ-ໂຮງຮຽນອະນຸບານສາທິດ ເພື່ອໃຫ້ຮັບຮູ້ ແລະ ເຂົ້າໃຈໃນການເບິ່ງແຍງລ້ຽງດູເດັກ ໃຫ້ໄປທິດທາງດຽວກັນ;
14) ຈັດກອງປະຊຸມຊີ້ແຈງ ແລະ ວາງແຜນໂຄງການ ສ້າງຄວາມເຂັ້ມແຂງ ວຽກງານສຸຂະພາບແມ່ ແລະ ເດັກ ແລະ ໂພຊະນາການ ຢູ່ 02 ແຂວງ ຄື ແຂວງ ອຸດົມໄຊ ແລະ ແຂວງ ຜົ້ງສາລີ;
15) ແລກປ່ຽນບົດຮຽນດ້ານວິຊາການດ້ານວຽກງານສົ່ງເສີມສຸຂະພາບ ແລະ ອະນາໄມສິ່ງແວດລ້ອມ ລະຫວ່າງ ວິຊາການ ລາວ-ໄທ ທີ່ ແຂວງອຸດອນທານີ, ປະເທດໄທ;
16) ກອງປະຊຸມປຶກສາຫາລືຂັ້ນສູນກາງ ກ່ຽວກັບ ກອບປົກປ້ອງສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການຫຼຸດ ຜ່ອນຄວາມທຸກຍາກ ແລະ ຂາດໂພຊະນາການໃນເຂດຊົນນະບົດ ໄລຍະທີ 0*2* ທີ່ ກົມພັດທະນາຊົນນະ ບົດ;
17) ພະນັກງານສູນໂພຊະນາການ 04 ທ່ານ ໄດ້ຮັບການອົບຮົມທັກສະໃນການສື່ສານ *Communication Skill* ສະໜັບສະໜູນໂດຍໂຄງການ *ANRCB*;
18) ເຂົ້າຮ່ວມກອງປະຊຸມວິຊາການ ກ່ຽວກັບ ຄວາມຄືບໜ້າຂອງໂຄງການສົ່ງເສີມຂີດຄວາມສາມາດດ້ານໂພ ຊະນາການ ໃນຂະແໜງສາທາລະນະສຸກ ແລະ ຂະແໜງສຶກສາ (*SICAN)* ພາຍໃຕ້ແຜນງານຮ່ວມມື ຂອງອົງການອຸຍນິເຊບ ແລະ ສະຫະພາບເອີຣົບ;
19) ຕາງໜ້າຄະນະນໍາຈາກກະຊວງສາທາລະນະສຸກ, ກະຊວງກະສິກໍາ ແລະ ປ່າໄມ້, ກະຊວງສຶກສາທິການ ແລະ ກິລາ, ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ຈໍານວນ *11* ທ່ານ *ໄດ້*ຢ້ຽມຢາມ ແລະ ແລກປ່ຽນບົດຮຽນ ກ່ຽວກັບ ການຄຸ້ມຄອງການບໍລິຫານດ້ານການເງິນ ທີ່ກ່ຽວພັນກັບ ວຽກງານໂພຊະນາການ ທີ່ປະເທດອິນໂດເນເຊຍ;
20) ພະນັກງານ ຂັ້ນກົມ, ວິຊາການ ຕາງໜ້າກະຊວງສາທາລະນະສຸກ, ກະຊວງກະສິກໍາ ແລະ ປ່າໄມ້, ກະຊວງສຶກສາທິການ ແລະ ກິລາ, ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ຂັ້ນແຂວງ ແລະ ເມືອງ ຈາກ 05 ແຂວງ ຈໍານວນ 25 ທ່ານ ໄດ້ເຂົ້າຮ່ວມອົບຮົມການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ທີ່ ມະຫາວິທະຍາໄລ ມະຮິດົນ ປະເທດໄທ;
21) ພະນັກງານວິຊາການ ກະຊວງກະສິກໍາ ແລະ ປ່າໄມ້ 02 ທ່ານ ໄດ້ສໍາເລັດຫຼັກສູດປະລິນຍາໂທວິທະຍາສາດສາຂາການຄຸ້ມຄອງຊັບພະຍາກອນກະສິກໍາແບບຍືນຍົງ ຈາກມະຫາວິທະຍາໄລແຫ່ງຊາດກະເສດນາບົງ;
22) ພະນັກງານສາທາລະນະສຸກ 07 ທ່ານ ກໍາລັງອົບຮົມຫຼັກສູດ ປະລິນຍາໂທ ກ່ຽວກັບ ໂພຊະນາການ;
23) ສໍາເລັດອົບຮົມຫຼັກສູດໃຫ້ຄໍາປຶກສາການລ້ຽງລູກດ້ວຍນໍ້ານົມແມ່ໄລຍະ 03 ເດືອນ ຈໍານວນ 02 ຊຸດ ຈໍານວນ 25 ທ່ານ.

**ກຸ່ມກິດຈະກຳທີ 17: ປັບປຸງການຄຸ້ມຄອງ ແລະ ການນຳໃຊ້ກອບຜົນໄດ້ໃນການຕິດຕາມ ແລະ ປະເມີນຜົນ, ການລາຍງານໂພຊະນາການ ຢ່າງເປັນປົກກະຕິ, ການເຝົ້າລະວັງ, ການຄົ້ນຄວ້າ ແລະ ການສຳຫຼວດ ແລະ ການແລກປ່ຽນຂໍ້ມູນຂ່າວສານ ແລະ ພາກປະຕິບັດທີ່ດີ.**

- **<u>ຕົວຊີ້ບອກທີ 30:</u>** ອັດຕາສ່ວນຮ້ອຍຂອງອົງການຈັດຕັ້ງໃນຂັ້ນສູນກາງ, ແຂວງ ແລະ ເມືອງ ທີ່ໄດ້ສົ່ງບົດລາຍງານ ເປັນປົກກະຕິ ກ່ຽວກັບ ໂພຊະນາການໂດຍຂະແໜງການ (ສາທາລະນະສຸກ, ສຶກສາທິການ ແລະ ກິລາ, ກະສິກຳ ແລະ ປ່າໄມ້) ບໍ່ມີລະບົບການເກັບກຳຂໍ້ມູນ.
- **<u>ຕົວຊີ້ບອກທີ 31:</u>** ອັດຕາສ່ວນຮ້ອຍຂອງພະນັກງານ-ລັດຖະກອນທັງໝົດ ທີ່ເຮັດວຽກ ກ່ຽວກັບ ໂພຊະນາການ (ຂັ້ນສູນກາງ, ແຂວງ, ເມືອງ) ທີ່ໄດ້ຮັບການຝຶກອົບຮົມ ໂດຍສະເພາະ ກ່ຽວກັບ ການຕິດຕາມກວດກາ, ການປະເມີນຜົນ, ການປະເມີນຜົນ ແລະ ການຮຽນຮູ້ (MEAL). (ແຍກຕາມເພດ: ຍິງ-ຊາຍ) (ຫຼາຍຂະແໜງການ).
  1) ສຳເລັດການຝຶກອົບຮົມການຄຸ້ມຄອງຖານຂໍ້ມູນດ້ານໂພຊະນາການໃຫ້ແກ່ ແຂວງ ຜົ້ງສາລີ, ແຂວງບໍລິຄຳໄຊ ແລະ ແຂວງ ເຊກອງ;
  2) ສຳເລັດເຮັດການຄົ້ນຄວ້າເຝົ້າລະວັງດ້ານໂພຊະນາການ ຮອບທີ 01 ປີ 2023 ຢູ່ໃນ 36 ເມືອງ 18 ແຂວງທົ່ວປະເທດ ເຊິ່ງຈະໄດ້ລາຍງານ ໃນໄຕມາດ;
  3) ອົງການປະລະມະນູສາກົນ (IAEA) ໄດ້ຊ່ວຍເຫຼືອເຄື່ອງອຸປະກອນເຮັດການຄົ້ນຄວ້າ ແລະ ສົ່ງເສີມທາງດ້ານໂພຊະນາການ ເຊັ່ນ ເຄື່ອງປະມອນ ມວນສານກະດູກ ແລະ ອຸປະກອນເຄື່ອງເຮັດການວິໄຈໂພຊະນາການແມ່ ແລະ ເດັກ ໂດຍນຳໃຊ້ເຕັກນິກ ISOTOPE ຈຳນວນ 22 ລາຍການ ມູນຄ່າ 160,000 ເອີໂຣ;
  4) ສຳເລັດການອົບຮົມລະບົບການຄຸ້ມຄອງຂໍ້ມູນດ້ານໂພຊະນາການ, ການລາຍງານ ແລະ ການສະໜອງອຸປະກອນດ້ານໂພຊະນາການໃຫ້ແກ່ພະນັກງານ ສະມາຄົມ LCSO ຂອງໂຄງການ CARITAS ເຊິ່ງເຮັດວຽກຢູ່ຂັ້ນເມືອງ ແລະ ໂຮງໝໍນ້ອຍ ຈຳນວນທັງໝົດ 18 ທ່ານ;
  5) ຝຶກອົບຮົມລະບົບການຄຸ້ມຄອງການສະໜອງຂໍ້ມູນ ເລື່ອງໂພຊະນາການ (NIMSC) ໃຫ້ພະນັກງານຫ້ອງການສາທາລະນະສຸກເມືອງ ແລະ ພະນັກງານໂຮງໝໍນ້ອຍ ຢູ່ 04 ແຂວງ ຄື ແຂວງຊຽງຂວາງ, ແຂວງບໍລິຄຳໄຊ, ແຂວງວຽງຈັນ ແລະ ແຂວງສະຫວັນນະເຂດ) ມີຜູ້ເຂົ້າຮ່ວມ 27 ທ່ານ ຮ່ວມກັບອົງການ CARITAS;
  6) ສຳເລັດຮ່າງພາລະບົດບາດ ແລະ ວິທີວິທະຍາ ໃນການປະເມີນແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການກາງສະໄໝ (2021–2025) (MTR) ໂດຍໄດ້ຮັບການສະໜັບສະໜູນຈາກອົງການໂພຊະນາການສາກົນ (International Nutrition) ສຳນັກງານໃຫຍ່ ແມ່ນຕັ້ງຢູ່ປະເທດແຄນນາດາ;
  7) ວຽກງານໂຄງການສ້າງຖານຂໍ້ມູນແຫ່ງຊາດດ້ານໂພຊະນາການ (NIPN) ໄດ້ປະກອບສ່ວນໃນການຕິດຕາມ ແລະ ປະເມີນສະພາບການດ້ານໂພຊະນາການ ປັບປຸງລະບົບຖານຂໍ້ມູນ ແລະ ກະດານຂ່າວໃນເວັບໄຊ້ ເພື່ອການເຂົ້າເຖິງຂໍ້ມູນທາງດ້ານໂພຊະນາການທີ່ສະດວກສະບາຍຂຶ້ນ, ມີລະບົບຕິດຕາມຄວາມຄືບໜ້າຂອງບັນດາຕົວຊີ້ບອກຫຼັກຂອງແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ (NPAN), ມີແຜນທີ່ 3W ທີ່ຕິດຕາມບັນດາມາດຕະການ, ໜ່ວຍງານຈັດຕັ້ງປະຕິບັດ ແລະ ຜູ້ໃຫ້ທຶນໃນວຽກງານໂພຊະນາການຢູ່ແຕ່ລະແຂວງທົ່ວປະເທດ ລວບລວມ ບົດຄົ້ນຄວ້າ, ນະໂຍບາຍ, ຄູ່ມືແລະ ບັນດາເວັບໄຊ້ທີ່ກ່ຽວຂ້ອງກັບວຽກງານໂພຊະນາການ ທັງພາຍໃນ ແລະ ຕ່າງປະເທດ;
  8) ສຳເລັດຝຶກອົບຮົມການນຳໃຊ້ແບບຟອມແມ່ ແລະ ເດັກ ສະບັບປັບປຸງ 2.1 ໃຫ້ທີມງານຄູຝຶກຂັ້ນແຂວງ ແລະ 05 ເມືອງເປົ້າໝາຍຂອງໂຄງການ ທີ່ ແຂວງສະຫວັນນະເຂດ;
  9) ຈັດກອງປະຊຸມວິຊາການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບຂໍ້ມູນຂ່າວສານສາທາລະນະສຸກ ທີ່ຫ້ອງປະຊຸມສູນໂພຊະນາການ;
  10) ເຂົ້າຮ່ວມກອງປະຊຸມປັບປຸງຄຸນນະພາບຂອງຂໍ້ມູນແມ່ ແລະ ເດັກ ທີ່ ນະຄອນຫຼວງວຽງຈັນ;
  11) ການສຶກສາສະພາບໂພຊະນາການ ແລະ ພຶດຕິກຳການບໍລິໂພກອາຫານຂອງເດັກນ້ອຍໄວຮຽນ (ລະດັບປະຖົມສຶກສາ) ໃນນະຄອນຫຼວງວຽງຈັນ;

12) ຝຶກອົບຮົມ ໃນຫົວຂໍ້ ວິທີການສ້າງເອກະສານ ການຄົ້ນຄວ້າທີ່ມີຄຸນນະພາບ ໂຄງການສ້າງຖານຂໍ້ມູນຂ່າວສານແຫ່ງຊາດດ້ານໂພຊະນາການ ທີ່ ແຂວງວຽງຈັນ;
13) ຝຶກອົບຮົມຂອງໜ່ວຍງານວິເຄາະຂໍ້ມູນ ຄັ້ງທີ 01 ປະຈໍາປີ 2023 ພາຍໃຕ້ໂຄງການສ້າງຖານຂໍ້ມູນຂ່າວສານແຫ່ງຊາດດ້ານໂພຊະນາການ ທີ່ແຂວງວຽງຈັນ;
14) ລົງສໍາຫຼວດເຝົ້າລະວັງດ້ານໂພຊະນາການຮອບທີ 01 ແລະ ຮອບທີ 02 ປະຈໍາປີ 2023 ໂດຍໄດ້ຈໍານວນຕົວຢ່າງ 900 ແລະ 1,500 ຄູ່ (ແມ່ ແລະ ເດັກ) ໂດຍງົບປະມານຈາກອົງການອຸຍນິເຊບ;
15) ຮ່າງຜົນຂອງການຄົ້ນຄວ້າການລ້ຽງລູກດ້ວຍນົມແມ່ ໃນຊ່ວງການລະບາດຂອງພະຍາດໂຄວິດ-19 ທີ່ Indianapolis USA;
16) ກອງປະຊຸມລາຍງານຜົນການສໍາຫຼວດການເກັບກໍາຂໍ້ມູນໄລຍະກາງ ແລະ ຜົນການສໍາຫຼວດ ຜູ້ໄດ້ຮັບຜົນປະໂຫຍດ ຮອບທີ 01 (IBM) ທີ່ແຂວງວຽງຈັນ;
17) ລົງເກັບຂໍ້ມູນປະເມີນຄວາມຄືບໜ້າທ້າຍໂຄງການ ສົ່ງເສີມສຸຂະພາບ ແລະ ໂພຊະນາການ ເຂດເນີນສູງເມືອງພູກູດ (ENHUP) ໄລຍະ 02 ທີ່ ແຂວງຊຽງຂວາງ;
18) ອົບຮົມການຄົ້ນຄວ້າດ້ານໂພຊະນາການ ທີ່ຫ້ອງປະຊຸມຂອງໂຄງການ ANRCB;
19) ອົບຮົມການນໍາໃຊ້ເຄື່ອງ Calories Meters (Q-NRG);
20) ອົບຮົມການປະເມີນການບໍລິໂພກອາຫານໂດຍໃຊ້ໂປຣແກຣມ INMUCALVersion 4.0 ທີ່ ແຂວງວຽງຈັນ;
21) ກອງປະຊຸມປຶກສາຫາລືຕົວຊີ້ບອກ ແລະ ການລາຍງານລະບົບຂໍ້ມູນຂ່າວສານສາທາລະນະສຸກ (DHIS2) ກ່ຽວກັບ ວຽກງານເຊື່ອມສານການຄຸ້ມຄອງກໍລະນີວຽກງານສຸຂະພາບແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ໃນລະດັບຊຸມຊົນ ທີ່ ກົມອະນາໄມ ແລະ ສົ່ງເສີມສຸຂະພາບ;
22) ກອງປະຊຸມປຶກສາຫາລື ແລະ ຜ່ານຮ່າງເນື້ອໃນຄູ່ມືການເກັບກໍາ ແລະ ນໍາໃຊ້ຂໍ້ມູນແມ່ ແລະ ເດັກ ແລະ ໂພຊະນາການໂດຍຜ່ານລະບົບ DHIS2 ທີ່ ນະຄອນຫຼວງວຽງຈັນ;
23) ສໍາເລັດກອງປະຊຸມວິຊາການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບຂໍ້ມູນຂ່າວສານດ້ານໂພຊະນາການປະຈໍາໄຕມາດທີ 01 ທີ່ ຫ້ອງປະຊຸມສູນໂພຊະນາການ.

**ກຸ່ມກິດຈະກໍາທີ 18: ປັບປຸງການຄຸ້ມຄອງທາງດ້ານການເງິນ, ການວາງແຜນ, ການຕິດຕາມ ແລະ ການລາຍງານດ້ານການເງິນ ທັງພາກລັດ ແລະ ການຊ່ວຍເຫຼືອທາງການດ້ານພັດທະນາ (ODA)ໃນທຸກຂະແໜງການ ແລະ ທຸກຂັ້ນ**

- **ຕົວຊີ້ບອກທີ 32:** ອັດຕາສ່ວນຮ້ອຍຂອງ ອົງການຈັດຕັ້ງຂັ້ນສູນກາງ, ແຂວງ ແລະ ເມືອງ ທີ່ໄດ້ສົ່ງບົດລາຍງານ ກ່ຽວກັບ ການເງິນ ໂພຊະນາການຕາມຂະແໜງການ (ສາທາລະນະສຸກ, ສຶກສາທິການ ແລະ ກິລາ, ກະສິກໍາ ແລະ ປ່າໄມ້), ມີການລາຍງານການເງິນທີ່ກ່ຽວກັບໂພຊະນາການ ຈາກຂະແໜງການກະສິກໍາ ແລະ ປ່າໄມ້ ແລະ ສຶກສາທິການ ແລະ ກິລາ.

1) ພະນັກງານຜູ້ປະສານງານວຽກງານໂພຊະນາການຂອງແຕ່ລະຂະແໜງການ, ຂັ້ນສູນກາງ ໄດ້ຮັບການຝຶກອົບຮົມຄວາມຮູ້ພື້ນຖານ ກ່ຽວກັບ ການບໍລິຫານການເງິນພາກລັດ;
2) ການອົບຮົມຄືນວຽກງານການເງິນຂອງຫຼາຍຂະແໜງການ ໂຄງການອຸຍນິເຊບ ທີ່ ແຂວງວຽງຈັນ;
3) ຈັດກອງປະຊຸມວຽກງານການຄຸ້ມຄອງການເງິນ-ພາກລັດ ການພັດທະນາໂພຊະນາການ ແລະ ການເງິນ ທີ່ ຫ້ອງປະຊຸມສູນໂພຊະນາການ;
4) ຈັດກອງປະຊຸມຜ່ານຮ່າງບົດລາຍງານສະຖິຕິສາທາລະນະສຸກ ປະຈໍາປີ 2022 ທີ່ຫ້ອງປະຊຸມກົມແຜນການ ແລະ ການເງິນ;
5) ໄດ້ມີການປຶກສາຫາລືກັບກະຊວງການເງິນ ແລະ ຄົ້ນຄວ້າເພື່ອຊອກຫາວິທີການ ໃນການຕິດຕາມການລົງທຶນໃສ່ວຽກໂພຊະນາການ.

**ກຸ່ມກິດຈະກຳທີ 19: ເພີ່ມການລົງທຶນ ທາງພາກລັດ ແລະ ເອກະຊົນ ພາຍໃນປະເທດ ສຳລັບວຽກງານໂພຊະນາການ ແນໃສ່ ໃຫ້ມີຄວາມຍືນຍົງ:**

- <u>**ຕົວຊີ້ບອກທີ 33:**</u> ອັດຕາສ່ວນຮ້ອຍຂອງການໃຊ້ຈ່າຍດ້ານໂພຊະນາການທັງໝົດຈາກການລົງທຶນພາຍໃນປະເທດ ເມື່ອທຽບໃສ່ກັບການຊ່ວຍເຫຼືອດ້ານການພັດທະນາຢ່າງເປັນທາງການ (ODA). (ຫຼາຍຂະແໜງ) ຍັງບໍ່ທັນມີລະບົບຕິດຕາມ.
  1) ພາກລັດແຕ່ລະຂະແໜງການ ໄດ້ສົ່ງເສີມໃຫ້ມີການເຊື່ອມສານວຽກງານໂພຊະນາການເຂົ້າໃນວຽກຂອງຕົນ ຢ່າງເປັນປົກກະຕິ, ກໍ່ແມ່ນວິທີການໜຶ່ງ ທີ່ວຽກງານໂພຊະນາການ ມີການລົງທຶນໃສ່;
  2) ພາກເອກະຊົນມີ ສ່ວນຮ່ວມໃນການຜະລິດອາຫານເລີ່ມຈາກການປູກ, ການລ້ຽງ, ການແປຮູບ ແລະ ການຈໍລະຈອນຈຳໜ່າຍໃຫ້ຜູ້ບໍລິໂພກ (ເບິ່ງໃນພາກບົດລາຍງານຂອງຂະແໜງກະສິກຳ ແລະ ປ່າໄມ້);
  3) ອົງກອນສະມາຊິກ SUN CSA ປະຈຳ ສປປ ລາວ ໄດ້ຈັດຕັ້ງປະຕິບັດໂຄງການໂພຊະນາການຢູ່ 59% ຂອງຈຳນວນເມືອງທັງໝົດໃນທົ່ວປະເທດ (88 ເມືອງຈາກ 148 ເມືອງ), ມີໂຄງການໃນ 13 ເມືອງຂອງແຂວງຫຼວງພະບາງ ແລະ 12 ເມືອງຂອງແຂວງສະຫວັນນະເຂດ, ມີໂຄງການໂພຊະນາການຢູ່ທຸກເມືອງຢູ່ໃນແຂວງຊຽງຂວາງ (7), ອຸດົມໄຊ (7) ແລະ ເຊກອງ (5);
  4) ການອົບຮົມຄືນວຽກງານການເງິນຂອງຫຼາຍຂະແໜງ ໂຄງການອຸຍນິເຊບ ຢູ່ ແຂວງວຽງຈັນ.

**ກຸ່ມກິດຈະກຳທີ 20: ພັດທະນາ ແລະ ຈັດຕັ້ງປະຕິບັດແຜນງານແບບປະສົມປະສານຂອງຫຼາຍຂະແໜງການເພື່ອໃຫ້ການບໍລິການທັນເວລາ, ມີປະສິດທິພາບ ແລະ ປະສິດທິຜົນຂອງກຸ່ມກິດຈະກຳໂພຊະນາການ ເພື່ອຕອບໂຕ້ພາວະສຸກເສີນ ຢ່າງມີປະສິດທິຜົນ ແລະ ສຸມໃສ່ເຫດການໄພພິບັດໃນບ່ອນທີ່ມັກເກີດຂຶ້ນ, ສະໜອງຄວາມຕ້ອງການຂອງກຸ່ມປະຊາກອນທີ່ສ່ຽງ:**

- <u>**ຕົວຊີ້ບອກທີ 34:**</u> ອັດຕາສ່ວນຮ້ອຍຂອງພະນັກງານ-ລັດຖະກອນທັງໝົດ ທີ່ເຮັດວຽກດ້ານໂພຊະນາການຢູ່ໃນຂັ້ນສູນກາງ, ແຂວງ ແລະ ເມືອງ ທີ່ໄດ້ຮັບການຝຶກອົບຮົມສະເພາະດ້ານໂພຊະນາການໃນໄພພິບັດ ແລະ ເຫດການສຸກເສີນ. **(ແຍກຕາມເພດ: ຍິງ-ຊາຍ)**
  1) ສຳເລັດການສ້າງບົດສອນ ໃນຫົວຂໍ້: ຄວາມຮູ້ພື້ນຖານຂອງການປັບຕົວຈາກການປ່ຽນແປງດິນຟ້າອາກາດ ໃນຂະແໜງການສາທາລະນະສຸກ ໂດຍມີການສົມທົບກັບມະຫາວິທະຍາໄລວິທະຍາສາດສຸຂະພາບ ແລະ ອົງການອະນາໄມໂລກ;
  2) ກະກຽມສ້າງລະບົບການແຈ້ງເຕືອນລ່ວງໜ້າ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ໃນຂະແໜງການສາທາລະນະສຸກ ໂດຍການເຊື່ອມສານຂໍ້ມູນຈາກກົມອຸຕຸນິຍົມ ແລະ ອຸທົກກະສາດ ແລະ ຂໍ້ມູນດ້ານສາທາລະນະສຸກ;
  3) ຈັດກອງປະຊຸມກັບອົງການ SCI ກ່ຽວກັບ ແຜນການດຳເນີນງານໂຄງການສ້າງຄວາມເຂັ້ມແຂງ ໃນການປັບຕົວຂອງຂະແໜງການສາທາລະນະສຸກຕໍ່ການປ່ຽນແປງດິນຟ້າອາກາດ;
  4) ກະຊວງກະສິກຳ ແລະ ປ່າໄມ້ ໄດ້ນຳພາຂັ້ນບ້ານສ້າງແຜນ ກ່ຽວກັບ ການການຕອບໂຕ້ເຫດການໄພພິບັດ ແລະ ພາວະສຸກເສີນ (ຕ້ານແລ້ງ-ຕ້ານຖ້ວມ) ໃນ 30 ບ້ານຂອງແຂວງອັດຕະປື;
  5) ການຮັບມືຕໍ່ການປ່ຽນແປງດິນຟ້າອາກາດ ເພື່ອຮັບປະກັນບໍ່ໃຫ້ມີການລະບາດຂອງພະຍາດສັດ ກໍໄດ້ເອົາໃຈໃສ່ປັບປຸງ ແລະ ຂະຫຍາຍຕາໜ່າງການບໍລິການຢາສັດຕະວະແພດລົງສູ່ເມືອງ, ຮ້ານຂາຍຢາບຸກຄົນມີທັງໝົດ 148 ແຫ່ງ ແລະ ເອົາໃຈໃສ່ຄຸ້ມຄອງຄຼີນິກປິ່ນປົວສັດ ໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍທີ່ໄດ້ກຳນົດໄວ້. ໄດ້ສັກຢາປ້ອງກັນພະຍາດໃຫ້ແກ່ສັດລ້ຽງ ໄດ້ທັງໝົດຈຳນວນ 819,404 ໂຕ (ຄວາຍ 36,275 ໂຕ, ງົວ 61,045 ໂຕ, ໝູ 21,933, ແບ້ 6,373 ໂຕ, ໝາ 5,105 ໂຕ ແລະ ສັດປີກ 688,673 ໂຕ) ແລະ ສາມາດປິ່ນປົວສັດ ໄດ້ທັງໝົດຈຳນວນ 15,335 ໂຕ (ຄວາຍ 2,156 ໂຕ, ງົວ 4,270 ໂຕ, ໝູ 1,067 ໂຕ, ແບ້ 2,024 ໂຕ, ສັດປີກ 145 ໂຕ, ໝາ 5,487 ໂຕ ແລະ ແມວ 186 ໂຕ) ແລະ ພ້ອມກັນນັ້ນ ສາມາດຜະລິດຢາປ້ອງກັນພະຍາດສັດ ໄດ້ທັງໝົດຈຳນວນ 788,875 ເຂັມ, ໃນນີ້, ມີຢາກັນພະຍາດເຕົ້າໂຮມເລືອດ ງົວ-ຄວາຍ, ອະຫິວາສັດປີກ, ອະຫິວາໝູ, ນິວຄັດເຊີນອ່ອນ-ແກ່, ນິວຄັດເຊີນໄອທູ, ອະຫິວາເປັດ,ໝາກສຸກ ສັດປີກ, ຫຼອດສົມອັກເສບ ເຊິ່ງທຽບໃສ່

ແຜນປີ ຜະລິດໄດ້ 8.44% ແລະ ສາມາດຈຳໜ່າຍ ໃຫ້ແກ່ບັນດາແຂວງ ແລະ ຜູ້ປະກອບການ ໄດ້ທັງໝົດ ຈຳນວນ 980,585 ເຂັມ ທຽບໃສ່ແຜນປີເທົ່າກັບ 11.67%;

6) ລົງຊ່ວຍເຫຼືອປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໄພພິບັດນ້ຳຖ້ວມ, ຕິດຕາມ, ກັ່ນຕອງເດັກ ແລະ ແມ່ຍິງຖືພາ ທີ່ຂາດສານອາຫານ ຢູ່ 02 ແຂວງ ຄື ແຂວງ ບໍລິຄຳໄຊ ແລະ ແຂວງ ຄຳມ່ວນ;
7) ລົງປະເມີນວຽກງານສຸຂະພາບຈະເລີນພັນ ແລະ ບໍລິການເຄື່ອນທີ່ເຊື່ອມສານ ພາຍຫຼັງເກີດໄພພິບັດຢູ່ 02 ເມືອງ ຄື ເມືອງ ຫີນບູນ ແລະ ເມືອງ ຄູນຄຳ, ແຂວງຄຳມ່ວນ;
8) ພິທີເປີດຫ້ອງໃຫ້ຄຳປຶກສາດ້ານການແພດແກ່ແມ່ຍິງ ແລະ ເດັກ (OSSC) ສຳລັບຜູ້ລອດຊີວິດຈາກການໃຊ້ຄວາມຮຸນແຮງ ພ້ອມທັງເປີດນຳໃຊ້ສາຍດ່ວນ #1527 ສຳລັບໃຫ້ບໍລິການຊ່ວຍເຫຼືອດ້ານສຸຂະພາບແກ່ຜູ້ ທີ່ຖືກເຄາະຮ້າຍຈາກຄວາມຮຸນແຮງ ທີ່ ໂຮງໝໍມະໂຫສົດ;
9) ກອງປະຊຸມປຶກສາຫາລື ເພື່ອສ້າງແຜນການຈັດຕັ້ງປະຕິບັດວຽກງານຕໍ່ການປ່ຽນແປງດິນຟ້າອາກາດຮ່ວມກັບ ອົງການອະນາໄມໂລກ ທີ່ ແຂວງ ວຽງຈັນ;
10) ປະຊຸມກະກຽມວາງແຜນຄວາມພ້ອມ ແລະ ຕອບໂຕ້ໄພພິບັດ ແລະ ສະຫຼຸບການຈັດຕັ້ງປະຕິບັດວຽກງານນ້ຳ, ສຸຂະພິບານ ແລະ ອະນາໄມຂັ້ນເມືອງ ທີ່ ແຂວງ ສາລະວັນ.

**ກຸ່ມກິດຈະກຳທີ 21: ສ້າງ ແລະ ຈັດຕັ້ງປະຕິບັດ ແຜນການຂອງຫຼາຍພາກສ່ວນ ສຳລັບເພີ່ມທະວີວຽກງານ ກ່ຽວກັບ ການສື່ສານເພື່ອປ່ຽນແປງພຶດຕິກຳຂອງ ສັງຄົມ (SBCC):**

- __ຕົວຊີ້ບອກທີ 35:__ ອັດຕາສ່ວນຮ້ອຍຂອງແຂວງ ແລະ ເມືອງ ທີ່ໄດ້ຈັດຕັ້ງປະຕິບັດແຜນງານການສື່ສານເພື່ອປ່ຽນແປງພຶດຕິກຳ ແລະ ສັງຄົມ (SBCC) ໃນຫຼາຍໆ ໂຄງການເພື່ອສົ່ງເສີມພຶດຕິກຳ ແລະ ການປະຕິບັດດ້ານໂພຊະນາການ.

1) ຜະລິດລາຍການໂທລະພາບ ແລະ ອອກອາກາດທາງໂທລະພາບແຫ່ງຊາດ (ຊ່ອງ 1) ກ່ຽວກັບ ການປ້ອງກັນ, ຄວບຄຸມ, ແກ້ໄຂ ແລະ ສົ່ງເສີມການສັກວັກຊີນພະຍາດໂຄວິດ 19 ຢູ່ສູນກາງ ແລະ ແຂວງ, ການສົ່ງເສີມການແພດພື້ນເມືອງ, ການບໍລິການຢູ່ໂຮງໝໍຂັ້ນສູນກາງ, ວຽກງານແມ່ ແລະ ເດັກ, ວຽກງານໂພຊະນາການ ແລະ ອື່ນໆ ໄດ້ທັງໝົດ 65 ລາຍການ;
2) ຜະລິດລາຍການວິທະຍຸ ແລະ ອອກອາກາດ ທາງວິທະຍຸແຫ່ງຊາດ ຄື້ນ FM 103,7 Mhz ແລະ ຄື້ນ AM 567 Khz ແລະ 6,130 Khz ກ່ຽວກັບ ການປ້ອງກັນ, ຄວບຄຸມ, ແກ້ໄຂ ແລະ ສົ່ງເສີມການສັກວັກຊີນພະຍາດໂຄວິດ-19, ໝາກແດງ, ໄຂ້ຍຸງລາຍ, ໄຂ້ມາລາເລຍ, ໄຂ້ຫວັດ, ຖອກທ້ອງ, ພະຍາດວໍ້, ສຸຂະພາບຈະເລີນພັນ, ສຸຂະພາບແມ່ ແລະ ເດັກ, ນ້ຳນົມແມ່, ໂພຊະນາການ, ພະຍາດຕາ, ເອດສ໌ໄອວີ/ເອດ, ຢາສູບ, ວັກຊີນ, ປະກັນສຸຂະພາບ, ອາຫານ ແລະ ຢາ, ແຈ້ງການຕ່າງໆຂອງລັດຖະບານ ແລະ ກະຊວງສາທາລະນະສຸກ ແລະ ປະຊາສຳພັນວັນສຳຄັນຕ່າງໆ ທາງວຽກງານສາທາລະນະສຸກ ໄດ້ທັງໝົດ 75 ລາຍການ;
3) ຜະລິດສື່ໂທລະພາບ ຈຳນວນ 05 ເລື່ອງ, ຜະລິດສື່ວິທະຍຸ ຈຳນວນ 50 ເລື່ອງ, ຜະລິດເປັນພາສາເຜົ່າໄດ້ 03 ເຜົ່າ ຄື ມົ້ງ, ກຶມມຸ, ມູເຊີ, ອາຄາ ແລະ ພູນ້ອຍ;
4) ຝຶກອົບຮົມທົດລອງຫຼັກສູດ ການສື່ສານເພື່ອປ່ຽນແປງພຶດຕິກຳທາງສັງຄົມ ໃນການສ້າງຄວາມເຂັ້ມແຂງວຽກງານການສື່ສານເພື່ອປ່ຽນແປງພຶດຕິກຳທາງສັງຄົມ ໃນການຮັກສາສຸຂະພາບ ທີ່ ນະຄອນຫຼວງວຽງຈັນ.

**ກຸ່ມກິດຈະກຳທີ 22: ພັດທະນາ ແລະ ຈັດຕັ້ງປະຕິບັດແຜນງານ ຂອງຫຼາຍພາກສ່ວນ ເພື່ອສົ່ງເສີມຄວາມສະເໝີພາບຂອງ ບົດບາດຍິງ-ຊາຍ ເຂົ້າໃນກຸ່ມກິດຈະກຳໂພຊະນາການໃນທຸກຂະແໜງການ ແລະ ໃນທຸກຂັ້ນ:**

- __ຕົວຊີ້ບອກທີ 36:__ ອັດຕາສ່ວນຮ້ອຍຂອງ ແຂວງ ແລະ ເມືອງ ທີ່ໃຫ້ຂໍ້ມູນ ກ່ຽວກັບ ບົດບາດຍິງ-ຊາຍ ແລະ ໂພຊະນາການ ແລະ ສົ່ງເສີມຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ພາຍໃນກຸ່ມກິດຈະກຳດ້ານໂພຊະນາການ;

1) ຂະແໜງກະສິກຳ ແລະ ປ່າໄມ້ ໄດ້ສ້າງກຸ່ມການຜະລິດຂອງແມ່ຍິງເພື່ອສົ່ງເສີມແມ່ຍິງໃຫ້ມີລາຍໄດ້.

2) ກອງປະຊຸມສ້າງຄວາມເຂັ້ມແຂງດ້ານຄວາມສະເໝີພາບ ບົດບາດຍິງ-ຊາຍ ໃຫ້ແກ່ຜູ້ປະສານງານວຽກງານ ບົດບາດ ຍິງ-ຊາຍ ໃຫ້ເມືອງ 12 ເມືອງ ໃນ 04 ແຂວງ ( ແຂວງ ຊຽງຂວາງ, ຫົວພັນ, ອຸດົມໄຊ, ຜົ້ງສາລີ).
3) ກອງປະຊຸມປຶກສາຫາລື ເພື່ອເຊື່ອມສານວຽກງານບົດບາດຍິງ-ຊາຍ ເຂົ້າໃນການຈັດຕັ້ງປະຕິບັດ ການປະເມີນຄຸນນະພາບການບໍລິການ *QPS* ຮ່ວມກັບ ກົມວິຊາການຂັ້ນສູນກາງ, ກະຊວງສາທາ ລະນະສຸກ.
4) ກອງປະຊຸມປຶກສາຫາລື ເພື່ອຜະລິດສື່ສໍາລັບການໃຫ້ສຸຂະສຶກສາ ຂອງ ຜອບ ໃນວຽກງານສຸຂະພາບຈະ ເລີນພັນ, ແມ່ ແລະ ເດັກ ແລະ ວຽກງານບົດບາດຍິງ-ຊາຍ ຮ່ວມກັບກົມ, ສູນ ແລະ ຂະແໜງການທີ່ ກ່ຽວຂ້ອງຂັ້ນສູນກາງ ທີ່ ແຂວງວຽງຈັນ ແລະ ທີ່ຫ້ອງປະຊຸມກະຊວງສາທາລະນະສຸກ.
5) ກອງປະຊຸມຄົ້ນຄວ້າວິທະຍາສາດ ພາຍໃຕ້ຫົວຂໍ້ ການນໍາໃຊ້ດິຈິຕອນສໍາລັບທຸກຄົນ, ການໃຊ້ນະວັດຕະກໍາ ແລະ ເຕັກໂນໂລຊີ ເພື່ອຄວາມສະເໝີພາບຍິງ-ຊາຍ ເນື່ອງໃນໂອກາດພິທີ ສະເຫຼີມສະຫຼອງວັນສ້າງຕັ້ງ ອົງການຈັດຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 68 ປີ (20 ກໍລະກົດ 1955 – 2023) ທີ່ໂຮງໝໍມິດ ຕະພາບ;

## III. ດ້ານງົບປະມານ:

### 1) ໂຄງການສົ່ງເສີມວິຊາການ (ພາກ 63):

### 2) ໂຄງການລົງທຶນຕ່າງປະເທດ:

| ຂະແໜງການ | ພາກ 60 | ພາກ 61 | ພາກ 62 | ພາກ 63 | ພາກ 67 | ລວມທັງໝົດ |
|---|---|---|---|---|---|---|
| ຂະແໜງສາທາ ລະນະສຸກ | 614,377,000 | 5,015,000 | 266,391,000 | 714,493,000 | | 1,600,276,000 |
| ຂະແໜງກະສິກໍາ ແລະ ປ່າໄມ້ | | | | 1,000,000,000 | 1,332,800,000 | 2,332,800,000 |
| ຂະແໜງສຶກສາທິການ ແລະ ກິລາ | | 29,926,400,000 | | 862,054,000 | | 30,788,454,000 |
| **ລວມ** | **614,377,000** | **29,931,415,000** | **266,391,000** | **2,576,547,000** | **1,332,800,000** | **34,721,530,000** |

| **ຂະແໜງການ** | **ODA** | **ລວມທັງໝົດ** |
|---|---|---|
| ຂະແໜງສາທາລະນະສຸກ | 8,170,136,000 | 9,770,412,000 |
| ຂະແໜງກະສິກໍາ ແລະ ປ່າໄມ້ | 28,099,989.85 ໂດລາສະຫະລັດ | 2,332.8 ລ້ານກີບ<br>28,099,989.85 ໂດລາສະຫະລັດ |
| ຂະແໜງສຶກສາທິການ ແລະ ກິລາ | 862,054,000 ກີບ<br>24.181 ໂດລາສະຫະລັດ | 31,650,508,000 ກີບ<br>24.181 ໂດລາສະຫະລັດ |
| **ລວມທັງໝົດ** | **593,874,322,825 ກີບ** | **628,595,852,825 ກີບ** |

***ໝາຍເຫດ:*** *ການລາຍງານນີ້ ແມ່ນການລາຍງານ ງົບປະມານ ຂອງໂຄງການ ຍັງບໍ່ທັນສາມາດ ລາຍງານລາຍຈ່າຍໄດ້.*

## IV. ດ້ານດີ, ບັນຫາ ແລະ ສິ່ງທ້າທາຍ ແລະ ຖອດຖອນບົດຮຽນ:

### 1. ດ້ານດີ:

- ມີການຊີ້ນຳຈາກຄະນະກຳມະການໂພຊະນາການແຕ່ຂັ້ນສູນກາງ-ຂັ້ນເມືອງ ຢ່າງເປັນປົກກະຕິ ໃຫ້ການສະໜັບສະໜູນບັນດາກະຊວງ (ສາທາລະນະສຸກ, ສຶກສາທິການ ແລະ ກິລາ, ກະສິກຳ ແລະ ປ່າໄມ້, ແຜນການ ແລະ ການລົງທຶນ);
- ມີແຜນພັດທະນາເສດຖະກິດສັງຄົມແຫ່ງຊາດຄັ້ງທີ 09;
- ມີຍຸດທະສາດແຫ່ງຊາດຂອງແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ 05 ປີ (2021-2025) ທີ່ເປັນເອກະພາບກັນ;
- ມີເຄື່ອງມື-ຄູ່ ການສ້າງຄວາມອາດສາມາດໃຫ້ແກ່ບຸກຄະລາກອນ ໄລຍະສັ້ນ ແລະ ເຊື່ອມສານ ເຂົ້າໃນຫຼັກສູດການຮຽນ-ການສອນຂອງລະບົບຂອງກະຊວງສຶກສາທິການ ແລະ ກິລາ;
- ມີບົດແນະນຳເຕັກນິກການວາງແຜນຄຸ້ມຄອງປ່າໄມ້ບ້ານ;
- ການຈັດຕັ້ງປະຕິບັດ ນະໂຍບາຍ ການຜະລິດກະສິກຳເພື່ອໂພຊະນາການຂອງ ພັກ ແລະ ລັດຖະບານ ໄດ້ມີຫຼາຍໜໍ່ແໜງໃໝ່ເກີດຂຶ້ນ ເຊັ່ນ ການສ້າງເຂດແຫຼ່ງວັດຖຸດິບ ໄດ້ເກີດຂຶ້ນ ເປັນຮູບເປັນຮ່າງ ຢູ່ຫຼາຍເຂດແຄ້ນທົ່ວປະເທດ, ການຜະລິດ ແລະ ສະໜອງສະບຽງອາຫານ ຈາກຟາມ ເປັນຕົ້ນ ແມ່ນຊີ້ນ, ໄຂ່, ປາ ແລະ ຜັກອິນຊີ ໄດ້ເພີ່ມຂຶ້ນ;
- ການແກ້ໄຂຂໍ້ຫຍຸ້ງຍາກໃຫ້ປະຊາຊົນ ໃນການຜະລິດ, ຄຽງຄູ່ກັບການສົ່ງເສີມການຜະລິດແບບເປັນຟາມ, ການສົ່ງເສີມການຜະລິດ ເສດຖະກິດ ຂະໜາດນ້ອຍ, ຂະໜາດກາງ ມີການຂະຫຍາຍຕົວເປັນກ້າວໆ;
- ການຜະລິດເຂົ້າ, ການລ້ຽງສັດ ແລະ ການຜະລິດພືດອື່ນໆ ໄດ້ມີການຂະຫຍາຍຕົວ, ການປູກພືດສະບຽງອາຫານ ແລະ ສິນຄ້າ ໄດ້ເພີ່ມຂຶ້ນກວ່າແຕ່ກ່ອນ, ພ້ອມດຽວກັນນັ້ນ ກໍ່ໄດ້ມີໜໍ່ແໜງດ້ານການປຸງແຕ່ງຜົນຜະລິດ ກະສິກຳ ເກີດຂຶ້ນຫຼາຍພໍສົມຄວນ ແລະ ກໍ່ມີການເປີດຕະຫຼາດອັດຕາສ່ວນໂກຕ້າການສົ່ງອອກ ກັບປະເທດຄູ່ຄ້າຫຼາຍຂຶ້ນ ເຊັ່ນ ສປ ຈີນ, ສສ ຫວຽດນາມ, ໄທ ແລະ ສະຫະພາບເອີຣົບ EU ໂດຍມີທ່າແຮງຈາກການນຳໃຊ້ການຂົນສົ່ງເສັ້ນທາງລົດໄຟ ເພື່ອເປັນການຂົນສົ່ງສິນຄ້າສົ່ງອອກ;
- ຊາວກະສິກອນຢູ່ຊົນນະບົດ ໄດ້ຮຽນຮູ້ ແລະ ນຳໃຊ້ ເຕັກນິກ ວິທະຍາສາດ ແລະ ກົນຈັກ ເຂົ້າໃນການຜະລິດຫຼາຍຂຶ້ນ ເຊິ່ງເປັນການປະຢັດຕົ້ນທຶນ, ມີສະມັດຕະພາບສູງ, ມີຜົນຕອບແທນເພີ່ມສາມເທົ່າຕົວເປັນຢ່າງຕໍ່າ ທຽບໃສ່ການຜະລິດແບບທັດຖະກຳ ເຊິ່ງສອດຄ່ອງກັບແນວທາງຫັນເປັນອຸດສາຫະກຳ ແລະ ທັນສະໄໝ;
- ໄດ້ຮັບການຊີ້ນຳຢ່າງໃກ້ຊິດ ຈາກຄະນະພັກ, ຄະນະລັດຖະມົນຕີ ແລະ ຄະນະນຳຂອງກະຊວງສາທາລະນະສຸກ ແລະ ໄດ້ມີລະບົບສ່ອງແສງລາຍງານເປັນປະຈຳອາທິດ, ປະຈຳເດືອນ ແລະ ປະຈຳໄຕມາດ;
- ພະນັກງານພາຍໃນກົມອະນາໄມ ແລະ ສົ່ງເສີມສຸຂະພາບ ລວມໝົດທຸກຄົນ ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ, ມີສະຕິຕໍ່ການຈັດຕັ້ງ, ປະຕິບັດກົດລະບຽບທີ່ລັດວາງອອກ, ຕັ້ງໜ້າຮັບໃຊ້ໜ້າທີ່ວິຊາສະເພາະຂອງຕົນດ້ວຍຄວາມຫ້າວຫັນ ແລະ ຮັບຜິດຊອບສູງ;
- ຄະນະກວດກາ ແລະ ພະນັກງານກວດກາ ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄວາມຮັບຜິດຊອບບຸກບືນຜ່ານຜ່າຄວາມຫຍຸ້ງຍາກ ແລະ ໄດ້ຮັບຄວາມຮ່ວມມື ຈາກການຈັດຕັ້ງທຸກພາກສ່ວນທີ່ກ່ຽວຂ້ອງເປັນຢ່າງດີ;
- ມີນິຕິກຳ ເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານຕິດຕາມ-ກວດກາ, ໄດ້ຮັບການຊີ້ນຳ-ນຳພາ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ຄະນະກວດກາຂັ້ນຂອງຕົນ ໄດ້ເຄື່ອນໄຫວປະຕິບັດຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ທີ່ໄດ້ກຳນົດໄວ້;
- ພະນັກງານຂອງກົມອະນາໄມ ແລະ ສົ່ງເສີມສຸຂະພາບ ແຕ່ລະຂັ້ນ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຕາມການຊີ້ນຳຂອງຄະນະກົມຢ່າງເຂັ້ມງວດ;
- ຄະນະນຳກະຊວງສຶກສາທິການ ແລະ ກິລາ ໄດ້ໃຫ້ຄວາມສຳຄັນ ແລະ ຕິດຕາມຢ່າງໃກ້ສິດດ້ວຍຄວາມຮັບຜິດຊອບສູງ ລວມທັງຄະນະນຳຂອງແຕ່ລະກົມ ຫຼື ພາກສ່ວນທີ່ກ່ຽວຂ້ອງຂອງຂະແໜງການສຶກສາທິການ ແລະ ກິລາ ທີ່ມີສ່ວນກ່ຽວຂ້ອງກັບ ການຈັດຕັ້ງປະຕິບັດ 04 ກຸ່ມກິດຈະກຳ ທີ່ກະຊວງສຶກສາທິການ

ແລະ ກິລາ ຮັບຜິດຊອບໃນແຜນຍຸດທະສາດແຫ່ງຊາດດ້ານໂພຊະນາການ ກໍ່ຄືແຜນປະຕິບັດງານ 2020-2025;

- ຄະນະຮັບຜິດຊອບວຽກງານໂພຊະນາການຂອງຂະແໜງການສຶກສາທິການ ແລະ ກິລາ ໄດ້ຮັບການສ້າງຕັ້ງຂຶ້ນ ໂດຍອີງໃສ່ຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 5740/ສສກ, ວັນທີ 12 ຕຸລາ 2023;
- ຫຼາຍກິດຈະກໍາທີ່ກ່ຽວຂ້ອງ ໄດ້ຮັບການຈັດຕັ້ງປະຕິບັດ ພາຍໃຕ້ການສະໜັບສະໜູນຂອງລັດຖະບານ ແລະ ບັນດາຄູ່ຮ່ວມງານທັງພາຍໃນ ແລະ ພາຍນອກ;
- ພາກສ່ວນທີ່ກ່ຽວຂ້ອງ ໃນຂະແໜງການການສຶກສາ ໄດ້ມີການສ້າງ ແລະ ເຜີຍແຜ່ ບັນດານິຕິກໍາ ທີ່ເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດ 04 ກຸ່ມກິດຈະກໍາ ເປັນຕົ້ນ ດໍາລັດວ່າດ້ວຍການສົ່ງເສີມອາຫານທ່ຽງໃນໂຮງຮຽນ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງຮຽນທີ່ມີການສົ່ງເສີມອາຫານທ່ຽງໃນໂຮງຮຽນ, ການນໍາເອົາເນື້ອໃນຄວາມຮູ້ກ່ຽວກັບສຸຂະສຶກສາ ແລະ ໂພຊະນາການ ເຊື່ອມສານເຂົ້າໃນການພັດທະນາ ປຶ້ມແຜນການຈັດປະສົບການ 08 ໜ່ວຍການສອນຂອງຫ້ອງກຽມປະຖົມ ຄື ໜ່ວຍຕົວຂອງຂ້ອຍ, ຄອບຄົວຂອງຂ້ອຍ, ໂຮງຮຽນຂອງຂ້ອຍ, ບ້ານຂອງຂ້ອຍ, ທໍາມະຊາດອ້ອມຕົວເຮົາ, ສິ່ງແວດລ້ອມອ້ອມຕົວ, ການຄົມມະນາຄົມ ແລະ ການສື່ສານ ແລະ ໜ່ວຍສິ່ງຕ່າງໆອ້ອມຕົວເຮົາ ແລະ ປຶ້ມຄູ່ມືຄູ ຊັ້ນມັດທະຍົມສຶກສາ ຂັ້ນ ມ.1, ມ.2, ມ.3, ມ.5 ແລະ ມ.6 ເຊິ່ງກວມມີເນື້ອໃນຄວາມຮູ້ກ່ຽວກັບໂພຊະນາການຢູ່ນໍາ ເປັນຕົ້ນ ວິຊາວິທະຍາສາດທໍາມະຊາດ ແລະ ວິຊາຊີວະວິທະຍາ;
- ຂະແໜງການສຶກສາທິການ ແລະ ກິລາ ແລະ ຂະແໜງການສາທາລະນະສຸກ ແຕ່ລະຂັ້ນ ໄດ້ມີການປະສານງານກັນຢ່າງໃກ້ຊິດ ໃນການປະຕິບັດວຽກງານໂພຊະນາການ ເປັນຕົ້ນ ການສ້າງຂີດຄວາມສາມາດ ກ່ຽວກັບຄວາມຮູ້ດ້ານໂພຊະນາການ, ການແຈກຢາຍຢາຂ້າແມ່ທ້ອງ ໃນສະຖານການສຶກສາ.

**2. ບັນຫາ ແລະ ສິ່ງທ້າທາຍ:**

- ການຈັດຕັ້ງປະຕິບັດເຫັນວ່າ ຕົວຊີ້ບອກຂອງແຕ່ລະຂະແໜງການ ບໍ່ບັນລຸ ຄຽງຄູ່ກັນນັ້ນ ມີບາງຕົວຊີ້ບອກສາມາດບັນລຸບາງສ່ວນ ທັງນີ້ ກໍ່ຍ້ອນວ່າ ຜົນກະທົບໄລຍະຟື້ນຕົວຈາກພະຍາດໂຄວິດ-19 ແລະ ສະພາບວິກິດທາງດ້ານເສດຖະກິດ ຖ້າຄະນະກໍາມະການບໍ່ມີຄວາມເຂັ້ມແຂງ ຍິ່ງຈະເຮັດໃຫ້ຕົວເລກຂອງການຂາດສານອາຫານ ແລະ ນໍ້າໜັກຫຼຸດເກນມາດຕະຖານຍິ່ງເພີ່ມຂຶ້ນຫຼາຍກວ່ານີ້ ແລະ ບາງຕົວຊີ້ບອກບໍ່ມີຂໍ້ມູນ;
- ການຈັດຕັ້ງປະຕິບັດເຫັນວ່າ ຕົວຊີ້ບອກຂອງແຕ່ລະຂະແໜງການ ສາມາດຈັດຕັ້ງປະຕິບັດໄດ້ແຕ່ບາງຕົວຊີ້ບອກ ແມ່ນບັນລຸບາງສ່ວນ ແລະ ບາງຕົວຊີ້ບອກ ແມ່ນບໍ່ມີຂໍ້ມູນ;
- ຍັງຂາດການປະສານງານພາຍໃນຂະແໜງການດຽວກັນຈໍາເປັນຕ້ອງໄດ້ຮັບການປັບປຸງ;
- ບົດບາດຂອງຜູ້ປະສານງານດ້ານໂພຊະນາການແຕ່ລະຂັ້ນ (ສູນກາງ, ແຂວງ ແລະ ເມືອງ) ຍັງຄົງມີຄວາມສັບສົນ ທີ່ຈະເຄື່ອນໄຫວບໍ່ໄດ້ສຸມໃສ່ແຕ່ວຽກງານໂພຊະນາການ, ມັກມີການປ່ຽນພະນັກງານ ທີ່ຮັບຜິດຊອບ;
- ການຈັດຕັ້ງປະຕິບັດວຽກງານໂພຊະນາການ ໃຫ້ໄດ້ຮັບຜົນສໍາເລັດສູງຄວນປະຕິບັດໄປຕາມທິດ 01 ດຽວຂອງຫຼາຍຂະແໜງການ ໂດຍສະເພາະ ຄວນມີຂະແໜງການທີ່ກ່ຽວຂ້ອງເຂົ້າມາເພີ່ມເຕີມ ເຊັ່ນ ກະຊວງພາຍໃນ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວງອຸດສາຫະກໍາ ແລະ ການຄ້າ;
- ການດໍາເນີນງານຂອງ PNC ແລະ ກອງເລຂາ DNC ຂຶ້ນກັບງົບປະມານຈາກຄູ່ຮ່ວມພັດທະນາ;
- ການເຊື່ອມສານກິດຈະກໍາກັບຂະແໜງການອື່ນແມ່ນມີຄວາມຫຍຸ້ງຍາກຫຼາຍ;
- ການຜະລິດສະບຽງອາຫານເຫັນວ່າມີທ່າແຮງຂະຫຍາຍຕົວຢ່າງຕໍ່ເນື່ອງ ໂດຍສະເພາະ ເຂົ້າແມ່ນສາມາດຄໍ້າປະກັນສະບຽງໄດ້ ໂດຍພື້ນຖານ ແລະ ມີບາງສ່ວນແຮໄວ້, ແຕ່ກໍ່ເຫັນວ່າຍັງມີຄວາມບອບບາງ ແລະ ໃນຍາມ ເກີດມີໄພພິບັດຍັງຕ້ອງອາໄສການຊ່ວຍເຫຼືອຈາກຕ່າງປະເທດ;
- ການຜະລິດກະສິກໍາທີ່ຫຼາກຫຼາຍ ຍັງບໍ່ທັນຂະຫຍາຍຕົວແຂງແຮງ, ບໍ່ທັນສົມຄູ່ກັບທ່າແຮງໄດ້ປຽບ ແລະ ເງື່ອນໄຂຈຸດພິເສດຂອງປະເທດເຮົາ ເຮັດໃຫ້ມີການນໍາເຂົ້າ ບາງປະເພດສິນຄ້າ ທັງໆ ທີ່ພວກເຮົາສາມາດຜະລິດຢູ່ພາຍໃນໄດ້;

- ການຜະລິດສິນຄ້າກະສິກຳຢູ່ປະເທດເຮົາ ຍັງມີຕົ້ນທຶນສູງ ປັດໃຈການຜະລິດ ເປັນຕົ້ນ ຝຸ່ນ, ປຸ໋ຍ, ອາຫານສັດ ລວມທັງ ຢາປາບສັດຕູພືດອື່ນໆ ຍັງອາໄສການນຳເຂົ້າເປັນຕົ້ນຕໍ;
- ໂຄງລ່າງພື້ນຖານຮັບໃຊ້ໃຫ້ແກ່ການຜະລິດ ແລະ ການດຳລົງຊີວິດ ໃນເຂດຫ່າງໄກສອກຫຼີກ ຍັງບໍ່ທັນຮັບປະກັນໃນດ້ານປະລິມານ ແລະ ຄຸນນະພາບ;
- ຍັງບໍ່ສາມາດ ເພີ່ມຜົນຜະລິດທີ່ມີຄຸນນະພາບ ແລະ ລາຄາ ເພື່ອແຂ່ງຂັ້ນກັບປະເທດອ້ອມຂ້າງ ແລະ ສາກົນ ໂດຍການຈັດສັນເຂດການຜະລິດ ແລະ ການປຸງແຕ່ງ ຍັງບໍ່ທັນມີຈຸດສຸມ;
- ການພັດທະນາພື້ນຖານ ໂຄງລ່າງຊົນລະປະທານ ເພື່ອໃຊ້ເຂົ້າໃນການຄໍ້າປະກັນຄວາມໝັ້ນຄົງ ທາງດ້ານສະບຽງອາຫານ ແລະ ຜະລິດເປັນສິນຄ້າ ຍັງບໍ່ໄດ້ມາດຕະຖານ, ເນື້ອທີ່ທົດນໍ້າຊົນລະປະທານ ຍັງບໍ່ທັນກວ້າງຂວາງ ແລະ ທົ່ວເຖິງ, ເນື້ອທີ່ກະສິກຳ ສ່ວນໃຫຍ່ຍັງອາໄສນໍ້າຝົນ ເປັນຕົ້ນຕໍ ເຊິ່ງມີຄວາມສ່ຽງສູງຕໍ່ການຄໍ້າປະກັນສະບຽງອາຫານ ໃນເງື່ອນໄຂທີ່ມີການປ່ຽນແປງດິນຟ້າອາກາດ;
- ຄອບຄົວ, ຊຸມຊົນ ແລະ ອົງການປົກຄອງບ້ານ ຍັງບໍ່ທັນເຂົ້າໃຈຢ່າງເລິກເຊິ່ງ ຕໍ່ກັບແຜນງານ ຫຼື ໂຄງການສົ່ງເສີມອາຫານທ່ຽງໃນໂຮງຮຽນ ແລະ ຄວາມທຸກຍາກຂອງຄອບຄົວ ຈຶ່ງເຮັດໃຫ້ການປະກອບສ່ວນ ແລະ ການເປັນເຈົ້າການ ໃນການຈັດຕັ້ງປະຕິບັດຍັງເຮັດບໍ່ໄດ້ເທົ່າທີ່ຄວນ;
- ໂຮງຮຽນຫຼາຍແຫ່ງຍັງຂາດນໍ້າໃຊ້ ແລະ ນໍ້າໃຊ້ຍັງບໍ່ພຽງພໍ ເຮັດໃຫ້ການປຸງແຕ່ງອາຫານ, ການຈັດຕັ້ງປະຕິບັດວຽກງານສຸຂານາໄມ, ວິດຖ່າຍ ແລະ ສອນຄົວ ມີຄວາມຫຍຸ້ງຍາກ;
- ງົບປະມານນຳໃຊ້ເຂົ້າໃນວຽກງານໂພຊະນາການຂອງຂະແໜງການສຶກສາທິການ ແລະ ກິລາ ຍັງມີຈຳກັດ;
- ສຳລັບວຽກງານການກິນຢາຂ້າແມ່ທ້ອງ ໃນການຈັດສົ່ງຢາ ແລະ ຢາຍຢາ ແມ່ນບໍ່ມີງົບປະມານໃນການຈັດສົ່ງ. ສະນັ້ນ, ຕ້ອງໄດ້ສົ່ງນຳຢາດັ່ງກ່າວ ຕິດແປະໄປກັບຢາຂອງຂະແໜງການອື່ນ ຂອງສູນສະໜອງຢາ ແລະ ອຸປະກອນການແພດ;
- ວຽກງານການແຈກຢາຍຢາທາດເຫຼັກບໍ່ໄດ້ຈັດຕັ້ງປະຕິບັດ;
- ການຜະລິດກະສິກຳຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຍັງບໍ່ທັນເຂັ້ມແຂງ, ການສົ່ງເສີມການນຳໃຊ້ກົນຈັກກະສິກຳຍັງບໍ່ທັນຄົບຊຸດ, ບໍ່ທັນມີໜ່ວຍບໍລິການກົນຈັກກະສິກຳ ທີ່ຮັບຮອງຢັ້ງຢືນເປັນທາງການ ແລະ ການກຽມຄວາມພ້ອມໃນການນຳໃຊ້ກົນຈັກທີ່ທັນສະໄໝ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ, ພ້ອມດຽວກັນນັ້ນ ການເປັນເຈົ້າການສົ່ງເສີມພັດທະນາຂະຫຍາຍຕົວແບບທີ່ດີ ກ່ຽວກັບ ການປູກ-ການລ້ຽງ, ການບໍລິຫານຈັດການເສດຖະກິດຄອບຄົວ, ຟາມ ຍັງບໍ່ທັນກວ້າງຂວາງ;
- ກົນໄກປະສານງານ ລະຫວ່າງ ຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການຂັ້ນສູນກາງ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ ບໍ່ທັນໄດ້ຮັບການປັບປຸງໃຫ້ເປັນລະບົບຕໍ່ເນື່ອງ ແລະ ບໍ່ມີຄວາມຄ່ອງຕົວເທື່ອ, ເຮັດໃຫ້ຂອດການປະສານງານໃນການສ້າງແຜນການ ແລະ ແຜນງົບປະມານ, ຕິດຕາມ, ຊຸກຍູ້, ກວດກາ ການປະຕິບັດແຜນການວຽກງານກະສິກຳເພື່ອໂພຊະນາການ ກໍ່ຄືການພັດທະນາຈຸດສຸມ ບໍ່ມີປະສິດທິພາບສູງເທົ່າທີ່ຄວນ;
- ການຕິດຕາມຊຸກຍູ້, ການກວດກາ ແລະ ປະເມີນຜົນ ການຜັນຂະຫຍາຍຍຸດທະສາດປະຕິຮູບສາທາລະນະສຸກ ກໍ່ຄືການຜັນຂະຫຍາຍວຽກງານສາມສ້າງ ໃນແຕ່ລະໄລຍະ ຍັງບໍ່ທັນແຂງແຮງ ແລະ ເປັນຂະບວນການຟົດຟື້ນດີເທົ່າທີ່ຄວນ;
- ການເຜີຍແຜ່ເຊື່ອມຊຶມແນວທາງນະໂຍບາຍຂອງພັກ-ລັດ ບັນດາກົດໝາຍ ແລະ ນິຕິກຳຕ່າງໆຂອງບາງກົມກອງ ຍັງບໍ່ທັນເລິກເຊິ່ງ;
- ຄວາມເປັນເຈົ້າການຮັບຜິດຊອບຕໍ່ວຽກງານກວດກາຂອງບັນດາກົມກອງ ແລະ ທ້ອງຖິ່ນຈຳນວນໜຶ່ງຍັງບໍ່ທັນໄດ້ດີເທົ່າທີ່ຄວນ, ການຕິດຕາມກວດກາປົກກະຕິບໍ່ທັນເຂັ້ມແຂງຕໍ່ເນື່ອງ, ທາງດ້ານຮູບການ ແລະ ວິທີການບໍ່ທັນລະອຽດເລິກເຊິ່ງ, ການສະຫຼຸບຜົນ, ການສະເໜີວິທີການແກ້ໄຂ ແລະ ການແກ້ໄຂຜົນຂອງການກວດກາ ຍັງຊັກຊ້າແກ່ຍາວ;
- ການຫັນຫ້ອງການໃຫ້ທັນສະໄໝ ໂດຍການນຳໃຊ້ ລະບົບ ໄອ-ທີ ເຂົ້າຊ່ວຍໃນການເປັນເສນາທິການ ແລະ ຜູ້ສານງານທີ່ດີຍັງບໍ່ທັນໄດ້ຕາມແຜນການ;

- ການຄຸ້ມຄອງ ການໄຫຼວຽນເອກະສານ ບໍ່ທັນຄ່ອງຕົວ, ບາງຄັ້ງມີຄວາມຊັກຊ້າ ຫຼື ເສຍຫາຍເປັນການສ້າງຄວາມຊັກຊ້າ ແລະ ຫຍຸ້ງຍາກ ແກ່ການເຄື່ອນໄຫວວຽກງານຂອງພາກສ່ວນຕ່າງໆ;
- ການເປັນເສນາທິການໃຫ້ແກ່ການນຳ ໃນການ ຄົ້ນຄວ້າ, ການວິເຄາະບັນຫາ, ການຕິດຕາມ, ກວດກາ, ປະເມີນຄວາມຄືບໜ້າ ການຈັດຕັ້ງປະຕິບັດວຽກງານຕ່າງໆເຮັດບໍ່ທັນໄດ້ດີເທົ່າທີ່ຄວນ, ມີຄວາມຊັກຊ້າ ແລະ ບໍ່ທັນສະພາບການ;
- ການພົວພັນ ແລະ ຮ່ວມມືກັບຕ່າງປະເທດຍັງບໍ່ທັນແຂງແຮງ, ຍັງບໍ່ທັນສາມາດຕິດຕາມ, ກວດກາປະສິດທິຜົນຂອງການຮ່ວມມືກັບບັນດາປະເທດເພື່ອນມິດ ແລະ ບັນດາຄູ່ຮ່ວມພັດທະນາ, ການສ້າງບົດບັນທຶກຄວາມເຂົ້າໃຈການຮ່ວມມືກັບຄູ່ຮ່ວມພັດທະນາ ບາງຄັ້ງມີຄວາມຊັກຊ້າ ແລະ ແກ່ຍາວເວລາ;
- ກິດຈະກຳ ສຸຂະອະນາໄມ, ການລ້າງມື-ຖູແຂ້ວ ເຖິງວ່າຈະຈັດຕັ້ງປະຕິບັດໃນທົ່ວປະເທດແລ້ວກໍ່ຕາມ ແຕ່ຍັງມີບາງໂຮງຮຽນທີ່ຍັງບໍ່ສາມາດປະຕິບັດກິດຈະກຳດັ່ງກ່າວໄດ້ ເນື່ອງຈາກວ່າ ຂາດນໍ້າ ແລະ ວິດຖ່າຍ ບາງແຫ່ງ ແລະ ຂັ້ນສູນກາງຈົນຮອດທ້ອງຖິ່ນ ບໍ່ມີງົບປະມານໃນການຕິດຕາມ ບັນດາກິດຈະກຳດັ່ງກ່າວ;
- ຄວາມເຂົ້າໃຈຂອງບາງເມືອງຍັງບໍ່ຈະແຈ້ງ ກ່ຽວກັບ ການປ້ອນຂໍ້ມູນວຽກໂຮງຮຽນ 03 ດາວໃສ່ໃນຖານຂໍ້ມູນຍັງບໍ່ໄດ້ດີເທົ່າທີ່ຄວນ ເຮັດໃຫ້ມີຄວາມຫຍຸ້ງຍາກ ແລະ ຊັກຊ້າໃນການເກັບກຳຂໍ້ມູນ;
- ຍັງມີຜູ້ບໍລິຫານການສຶກສາຂັ້ນຕ່າງໆຈຳນວນໜຶ່ງ ຍັງບໍ່ທັນເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບ ວຽກງານນໍ້າ ແລະ ສຸຂານາໄມໃນໂຮງຮຽນ ແລະ ຂາດງົບປະມານໃນການລົງຕິດຕາມຊຸກຍູ້ໂຮງຮຽນທີ່ຕັ້ງຢູ່ ເຂດຫ່າງໄກສອກຫຼີກ ໂດຍສະເພາະ ໂຮງຮຽນທີ່ຍັງບໍ່ທັນເຂົ້າໃຈວິທີການເກັບກຳຂໍ້ມູນ, ປ້ອນຂໍ້ມູນ ແລະ ປະເມີນ;
- ໂຮງຮຽນຫຼາຍແຫ່ງຍັງຂາດນໍ້າໃຊ້ ແລະ ນໍ້າໃຊ້ຍັງບໍ່ພຽງພໍ ເຮັດໃຫ້ການປຸງແຕ່ງອາຫານ, ການຈັດຕັ້ງປະຕິບັດວຽກງານສຸຂານາໄມ, ວິດຖ່າຍ ແລະ ສອນຄົວ ມີຄວາມຫຍຸ້ງຍາກ;
- ຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງຊຸມຊົນບາງບ້ານ ຍັງມີບໍ່ທັນເລິກເຊິ່ງ ແລະ ບວກກັບຄວາມທຸກຍາກເຮັດໃຫ້ການປະກອບສ່ວນຕໍ່ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນຍັງຈຳກັດ;
- ບາງຕົວຊີ້ບອກຍັງບໍ່ທັນສາມາດລາຍງານຄວາມຄືບໜ້າໄດ້ ເນື່ອງຈາກໂຮງຮຽນປ້ອນຂໍ້ມູນຍັງບໍ່ແລ້ວໝົດຈຶ່ງບໍ່ສາມາດວິເຄາະຂໍ້ມູນອອກມາລາຍງານໄດ້ ໂດຍສະເພາະ ຕົວຊີ້ບອກທີ່ກ່ຽວຂ້ອງກັບໂຮງຮຽນ/ນັກຮຽນປະຖົມ ແລະ ມັດທະຍົມ ແລະ ບາງຕົວຊີ້ບອກ ແມ່ນຕ້ອງໄດ້ຂະຫຍາຍເປັນໄລຍະ;
- ງົບປະມານຮັບໃຊ້ເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳວຽກງານໂພຊະນາການ ຂອງຂະແໜງການສຶກສາ ແລະ ກິລາ ຍັງມີຈຳກັດ.

**3. ຖອດຖອນບົດຮຽນ:**

- ການຄຸ້ມຄອງບໍລິຫານ ແລະ ຊີ້ນຳພາ ຂອງຄະນະກຳມະການ ແຕ່ລະຂັ້ນທີ່ມີຄຸນນະພາບ ແລະ ຄວາມຮັບຜິດຊອບສູງພາຍໃຕ້ຮູບແບບການແລກປ່ຽນຄຳຄິດຄຳເຫັນ ແລະ ເປັນເອກະພາບ ການຈັດກອງປະຊຸມຢ່າງເປັນປົກກະຕິ ຈຶ່ງສາມາດຮັບປະກັນໄດ້ ການຈັດຕັ້ງປະຕິບັດວຽກງານໂພຊະນາການ ໃຫ້ດຳເນີນໄປຢ່າງຕໍ່ເນື່ອງເປັນປົກກະຕິ ແລະ ວາງທິດແກ້ໄຂບັນຫາໂພຊະນາການໃຫ້ທັນການ ແລະ ຖືກຕ້ອງ;
- ການປະສານສົມທົບທີ່ແໜ້ນແຟ້ນ ໂລ່ງຫຼຽນ ແລະ ຄວາມຊຳນິຊຳນານງານ ຄວາມຮັບຜິດຊອບສູງ ຂອງບັນດາຜູ້ປະສານງານ ຫຼື ຜູ້ອຳນວຍຄວາມສະດວກທີ່ມີບົດບາດສຳຄັນ ນັ້ນແມ່ນ ເປັນປັດໃຈທີ່ສຳຄັນ ອັນໜຶ່ງທີ່ຕັດສິນໝາກຜົນຂອງວຽກງານ. ສະນັ້ນ, ຕ້ອງໄດ້ເອົາໃຈໃສ່ການປະສານງານທີ່ແໜ້ນແຟ້ນ ລະຫວ່າງຂັ້ນເທິງ ແລະ ຂັ້ນລຸ່ມ ແລະ ສ້າງບຸກຄະລາກອນທີ່ເຮັດວຽກເປັນຜູ້ປະສານງານທີ່ມີບົດບາດນີ້ ໃຫ້ມີຄວາມຊຳນິຊຳນານງານ ແລະ ມີຄວາມຮັບຜິດຊອບສູງ ມີຄວາມຕັ້ງໃຈເຮັດແທ້ທຳຈິງ;
- ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານໂພຊະນາການໃຫ້ໄດ້ຮັບຜົນສຳເລັດສູງນັ້ນ ຈຳເປັນຕ້ອງໄດ້ເຮັດໃຫ້ການປະຕິບັດໄປຕາມທິດໜຶ່ງດຽວຂອງຫຼາຍຂະແໜງການ ແລະ ມີຄວາມຮັບຜິດຊອບສູງ ສະນັ້ນຮຽກຮ້ອງໃຫ້ມີການຮ່ວມມືຈາກຫຼາຍພາກສ່ວນໂດຍ ມີກົນໄກ, ມີມາດຕະການ ທີ່ຊັດເຈນ;
- ວຽກງານໂພຊະນາການເປັນວຽກທີ່ມີສ່ວນຮ່ວມຈາກຫຼາຍພາກສ່ວນ ເພື່ອເຮັດໃຫ້ວຽກງານໂພຊະນາການມີຄວາມຍືນຍົງ ຈຶ່ງຈຳເປັນຕ້ອງໄດ້ເຊື່ອມເຂົ້າໃນແຜນ ແຕ່ລະຂະແໜງການ ໂດຍຮຽກຮ້ອງໃຫ້ມີການປຸກລະດົມໃຫ້ທຸກພາກສ່ວນມີການປະກອບສ່ວນ ດຶງດູດການຊ່ວຍເຫຼືອທຸກດ້ານຂອງບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດໃຫ້ຫຼາຍຂຶ້ນ;

- ການຊີ້ນຳ-ນຳພາ ກໍ່ຄືການເຮັດວຽກແບບລວມສູນ ແມ່ນປັດໃຈຕັດສິນ ແລະ ເປັນວຽກບຸລິມະສິດໃນການຈັດຕັ້ງປະຕິບັດ;
- ການມີທີມງານທີ່ດີ ແລະ ວິຊາການທີ່ເຂັ້ມແຂງ, ມີລະບຽບວິໄນເຂັ້ມງວດ, ມີຄວາມສາມັກຄີ ແລະ ມີການປະສານງານດີ ແມ່ນປັດໃຈພື້ນຖານຂອງຄວາມສຳເລັດ ແລະ ຍືນຍົງ;
- ເອົາໃຈໃສ່ວຽກງານ ຮັກສາສຸຂະພາບຂັ້ນຕົ້ນ (ຮສຂ) ເພື່ອແກ້ໄຂຢູ່ຂັ້ນຮາກຖານ ສືບຕໍ່ສ້າງບ້ານສາທາລະນະສຸກແບບຢ່າງ ເຊິ່ງເປັນວຽກບູລິມະສິດ ເພື່ອເຮັດໃຫ້ປະຊາຊົນໄດ້ເຂົ້າເຖິງການບໍລິການສຸຂະພາບ ແລະ ສຸຂະພາບທົ່ວປວງຊົນ (UHC).

**V. ທິດທາງແຜນການປີ 2024:**

- **ຂະແໜງສາທາລະນະສຸກ:**

  **ກຸ່ມກິດຈະກຳທີ 01: ສົ່ງເສີມໂພຊະນາການໃນແມ່ຍິງ, ແມ່, ເດັກອ່ອນ ແລະ ເດັກນ້ອຍ (MIYCN)**

  **<u>ສູ້ຊົນປະຕິບັດຄາດໝາຍຕົວຊີ້ບອກ:</u>**
- **<u>ຕົວຊີ້ບອກ 1:</u>** ອັດຕາສ່ວນຮ້ອຍຂອງແມ່ຍິງຖືພາທີ່ໄດ້ຮັບຄຳປຶກສາໃນການລ້ຽງລູກດ້ວຍນົມແມ່, ການໃຫ້ອາຫານເສີມ ແລະ ພັດທະນາການເດັກ ໃຫ້ໄດ້ 70%.
- **<u>ຕົວຊີ້ບອກ 2:</u>** ອັດຕາສ່ວນຮ້ອຍຂອງເດັກນ້ອຍເກີດໃໝ່ທີ່ໄດ້ເລີ່ມກິນນົມແມ່ພາຍໃນໜຶ່ງຊົ່ວໂມງທຳອິດຫຼັງເກີດ ໃຫ້ໄດ້ 55%.
- **<u>ຕົວຊີ້ບອກ 3:</u>** ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸລຸ່ມ 06 ເດືອນທີ່ໄດ້ກິນນ້ຳນົມແມ່ພຽງຢ່າງດຽວ ໃຫ້ໄດ້ 59%.

  1) ສືບຕໍ່ທົບທວນ, ປັບປຸງ ແລະ ຍຸດທະສາດ, ນະໂຍບາຍ, ຂໍ້ແນະນຳ, ຄູ່ມື ແລະ ແຜນການ ກ່ຽວກັບການສົ່ງເສີມໂພຊະນາການ ສຳຫຼັບແມ່, ເດັກອ່ອນ ແລະ ເດັກນ້ອຍ (MIYCN/RMNCAH) ຮ່ວມກັບ ສູນສຸຂະພາບແມ່ ແລະ ເດັກ;
  2) ສືບຕໍ່ເຜີຍແຜ່ ຍຸດທະສາດ, ນະໂຍບາຍ, ຂໍ້ແນະນຳ, ຄູ່ມື ແລະ ແຜນການ ກ່ຽວກັບ ໂພຊະນາການ ສຳຫຼັບແມ່, ເດັກອ່ອນ ແລະ ເດັກນ້ອຍ ໃຫ້ແຕ່ລະພາກສ່ວນ ໃນແຕ່ລະຂັ້ນ;
  3) ສືບຕໍ່ອົບຮົມກ່ຽວກັບຍຸດທະສາດ, ນະໂຍບາຍ, ຂໍ້ແນະນຳ, ຄູ່ມືວິຊາການ ແລະ ແຜນການກ່ຽວກັບໂພຊະນາການສຳລັບແມ່, ເດັກອ່ອນ ແລະ ເດັກນ້ອຍ ໃນແຕ່ລະຂັ້ນ ເພື່ອເຊື່ອມສານການລ້ຽງດູເດັກອ່ອນ ແລະ ເດັກນ້ອຍເຂົ້າໃນການບໍລິການສຸຂະພາບແມ່ ແລະ ເດັກ;
  4) ສືບຕໍ່ຈັດຕັ້ງປະຕິບັດຕິດຕາມກວດກາ, ເຜີຍແຜ່, ກຳນົດສະຫຼາກ ດຳລັດວ່າດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ ໃນຮ້ານຄ້າ ແລະ ສະຖານທີ່ບໍລິການ;
  5) ສືບຕໍ່ສົ່ງເສີມຈັດງານສະເຫຼີມສະຫຼອງວັນໂພຊະນາການແຫ່ງຊາດ (31 ກໍລະກົດ) ແລະ ສັບປະດາສາກົນ ການລ້ຽງລູກດ້ວຍນ້ຳນົມແມ່ (1-7 ສິງຫາ);
  6) ຂະຫຍາຍຕາໜ່າງໂຮງໝໍຕົວແບບ-ສົ່ງເສີມການລ້ຽງລູກດ້ວຍນົມແມ່ຄາດໝາຍບໍ່ໃຫ້ຫຼຸດ 03 ແຫ່ງ ແລະ ສືບຕໍ່ ໄລຍະສອງ 01 ແຫ່ງ;
  7) ສືບຕໍ່ຈັດອົບຮົມຫຼັກສູດທີ່ໃຫ້ຄຳປຶກສາການລ້ຽງລູກດ້ວຍນ້ຳນົມແມ່ໄລຍະ 03 ເດືອນ ຢ່າງໜ້ອຍ 01 ຊຸດ ບໍ່ໃຫ້ຫຼຸດ 20 ທ່ານ/ຊຸດເປົ້າໝາຍບູລິມະສິດ ໃນການຂະຫຍາຍຕາງໜ່າງການລ້ຽງລູກດ້ວຍນ້ຳນົມແມ່;
  8) ສືບຕໍ່ຈັດຕັ້ງປະຕິບັດໂຄງການຮ່ວມມືກັນລະຫວ່າງລາວ-ໄທ ໂຄງການທົດລອງຢູ່ສອງແຂວງ ແລະ ສອງເມືອງ, ສອງບ້ານ ໃນການສົ່ງເສີມການລ້ຽງລູກດ້ວຍນ້ຳນົມແມ່ ແລະ ການລ້ຽງດູເດັກອ່ອນ ແລະ ເດັກນ້ອຍ;
  9) ສືບຕໍ່ຊຸກຍູ້ໃຫ້ມີການສ້າງຕັ້ງທະນາຄານນົມແມ່ຕົວແບບ ໃນໂຮງໝໍເປົ້າໝາຍ ຂັ້ນສູນກາງ ແລະ ແຂວງ;

10) ສົ່ງເສີມ ແລະ ຕິດຕາມຊຸກຍູ້ ການລ້ຽງລູກດ້ວຍນົມແມ່ທັນທີຫຼັງເກີດ ແລະ ກິນນົມແມ່ພຽງຢ່າງດຽວ ຈົນຮອດເດັກອາຍຸໄດ້ 06 ເດືອນ ໃນໂຮງໝໍທຸກຂັ້ນ ແລະ ຂະຫຍາຍຕາໜ່າງໂຮງໝໍສາຍພູກພັນແມ່ລູກ ເພື່ອປົກປ້ອງ ແລະ ສົ່ງເສີມການລ້ຽງລູກດ້ວຍນໍ້ານົມແມ່ ຢ່າງໜ້ອຍ 02 ແຫ່ງ;
11) ສືບຕໍ່ຝຶກອົບຮົມ ກ່ຽວກັບ ໂພຊະນາການຂອງ ແມ່ ແລະ ເດັກ ໃຫ້ແກ່ອາສາສະໝັກສາທາລະນະສຸກປະຈຳບ້ານ (VHVs) ແລະ ສະຫະພັນແມ່ຍິງບ້ານ (LWU) ເຊື່ອມສານໃນວຽກງານຄວບຄຸມພະຍາດບໍ່ຕິດຕໍ່;
12) ສືບຕໍ່ຕິດຕາມຊຸກຍູ້ ສົ່ງເສີມການຕິດຕາມການຈະເລີນເຕີບໂຕ ແລະ ພັດທະນາສົມໄອຂອງເດັກ ແລະ ໃຫ້ຄຳປຶກສາກ່ຽວກັບການລ້ຽງດູເດັກອ່ອນ ແລະ ເດັກນ້ອຍຢູ່ໂຮງໝໍທຸກຂັ້ນ ແລະ ການບໍລິການເຄື່ອນທີ່ສຸຂະພາບແມ່ ແລະ ເດັກ ລວມທັງ ສູນໂພຊະນາການ;
13) ເປີດການໃຫ້ຄຳປຶກສາການລ້ຽງລູກດ້ວຍນໍ້ານົມແມ່ ທາງໂທລະສັບ.

**ກຸ່ມກິດຈະກຳທີ 2: ສະໜອງຈຸລະສານອາຫານໃຫ້ແກ່ ແມ່ຍິງ ແລະ ເດັກນ້ອຍ ໃນກຸ່ມເປົ້າໝາຍ ສູ້ຊົນປະຕິບັດຄາດໝາຍຕົວຊີ້ບອກທີ່ ວາງໄວໃນແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ ປີ 2024**

- **ຕົວຊີ້ບອກ 4:** ອັດຕາສ່ວນຮ້ອຍຂອງແມ່ຍິງຖືພາທີ່ໄດ້ຮັບທາດເຫຼັກ-ອາຊິດໂຟລິກນໍ້ລະເມັດຢ່າງໜ້ອຍ 90 ເມັດ.
- **ຕົວຊີ້ບອກ 5**: ອັດຕາສ່ວນຮ້ອຍຂອງແມ່ຍິງອາຍຸ 12 ຫາ 25 ປີ ທີ່ໄດ້ກິນທາດເຫຼັກ-ອາຊິດໂຟລິກອາທິດລະເມັດ.
- **ຕົວຊີ້ບອກ 6**: ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸ 06 ຫາ 59 ເດືອນ ທີ່ໄດ້ກິນວິຕາມິນອາ ໃນ 06 ເດືອນຜ່ານມາ.

1) ສືບຕໍ່ທົບທວນ, ປັບປຸງ, ຂໍ້ແນະນຳ ແລະ ເຜີຍແຜ່ຄູ່ມືແຫ່ງຊາດກ່ຽວກັບການເສີມຈຸລະສານ ອາຫານ ແລະ ຢາຂ້າແມ່ທ້ອງ;
2) ອົບຮົມຄືນ ກ່ຽວກັບ ຂໍ້ແນະນຳ, ຄູ່ມືແຫ່ງຊາດກ່ຽວກັບການເສີມຈຸລະສານອາຫານ ແລະ ຢາຂ້າແມ່ທ້ອງ;
3) ສືບຕໍ່ປຶກສາຫາລືກັບກະຊວງອຸດສະຫະກຳ ແລະ ການຄ້າ, ກະຊວງການເງິນ ເພື່ອຊອກຫາວິທີແກ້ບັນຫາການຂາດສານໄອໂອດີນໃນເກືອທີ່ບໍລິໂພກເພື່ອເຮັດໃຫ້ໂຮງງານຜະລິດເກືອໃນ ສປປ ລາວ ສາມາດສືບຕໍ່ຜະລິດເກືອທີ່ປະສົມທາດໄອໂອດີນ ທົບທວນ ແລະ ປັບປຸງຄືນ ດຳລັດ ແລະ ນະໂຍບາຍກ່ຽວກັບການເພີ່ມໄອໂອດີນເຂົ້າໃນເກືອບໍລິໂພກ, ສືບຕໍ່ຕິດຕາມຊຸກຍູ້ ແລະ ກວດກາຄຸນນະພາບຂອງເກືອຢູ່ໂຮງງານຜະລິດ ແລະ ບ່ອນຈຳໜ່າຍເກືອ ເພື່ອຮັບປະກັນທາງດ້ານຄຸນນະພາບ ແລະ ມີສານໄອໂອດີນທີ່ຢູ່ໃນເກນມາດຕະຖານຂອງເກືອທີ່ບໍລິໂພກ ແນໃສ່ ປະກາດລົບລ້າງພະຍາດຂາດທາດ ໄອໂອດີນພາຍໃນປີ 2025;
4) ສ້າງ ແລະ ເຜີຍແຜ່ ຂໍ້ແນະນຳ, ຄູ່ມື ແນະນຳກ່ຽວກັບການເສີມວິຕາມິນ ແລະ ແຮ່ທາດໃສ່ ໃນອາຫານພ້ອມທັງຕິດຕາມຊຸກຍູ້ ແລະ ປະເມີນຜົນໃນການຈັດຕັ້ງປະຕິບັດ;
5) ສ້າງຄູ່ມືແນະນຳໃນການສະໜອງຈຸລະສານອາຫານໃນໂຮງຮຽນລະຫວ່າງສາທາລະນະສຸກ ແລະ ສຶກສາທິການ ແລະ ກິລາ ເພື່ອໃຫ້ເດັກໄດ້ຮັບສານອາຫານທີ່ຄົບຖ້ວນ ແລະ ຖືກຕາມຫຼັກໂພຊະນາການ;
6) ອົບຮົມການນຳໃຊ້ປຶ້ມຄູ່ມືແຫ່ງຊາດໃນການໃຫ້ຈຸລະສານອາຫານພ້ອມທັງ ອົບຮົມການສ້າງແຜນຄວາມຕ້ອງການແຕ່ລະປີໃຫ້ແຕ່ລະຂັ້ນ;
7) ອົບຮົມກ່ຽວກັບຄູ່ມືແນະນຳກ່ຽວກັບການເສີມວິຕາມິນ ແລະ ແຮ່ທາດໃສ່ໃນອາຫານໃຫ້ແຕ່ລະຂັ້ນ;
8) ຈັດຊື້ ແລະ ຈັດສົ່ງຈຸລະສານອາຫານ ຢາຂ້າແມ່ທ້ອງ, ວິຕາມິນ A, ວິຕາມິນ B1, ທາດເຫຼັກ-ອາຊິດໂຟລິກ ໃຫ້ 18 ແຂວງ;
9) ຈັດຊື້ອຸປະກອນທົດສອບທີ່ຈຳເປັນເພື່ອຕິດຕາມກວດກາຄຸນນະພາບເກືອທີ່ຈໍລະຈອນຈຳໜ່າຍໃນທ້ອງຕະຫຼາດ;
10) ສຶກສາການຂາດຈຸລະສານອາຫານໃນເດັກນ້ອຍ ແລະ ແມ່ຍິງຖືພາ (ກວດນໍ້າລາຍ, ກວດເລືອດ, ກວດຍ່ຽວເພື່ອຊອກຫາໄອໂອດີນ);

11) ດຳເນີນການສຳຫຼວດ ກ່ຽວກັບ ພາວະເລືອດຈາງ ຍ້ອນການຂາດທາດເຫຼັກ-ອາຊິດໂຟລິກ ໃນເດັກນ້ອຍ, ໄວຈະເລີນພັນ (12-25 ປີ) ແລະ ແມ່ຍິງຖືພາ (ປີທຳອິດເພື່ອເປັນຖານຂໍ້ມູນ ແລະ ປະເມີນການຂາດໃນ ສປປ ລາວ);
12) ປຶກສາຫາລືກັບ ກະຊວງການເງິນ ແລະ ກະຊວງອຸດສະຫະກຳ ແລະ ການຄ້າ ເພື່ອແກ້ໄຂບັນຫາການຂາດທາດໂປຕາດຊຽມ ໄອໂອເດດໃນເກືອບໍລິໂພກ ເພື່ອໃຫ້ທົ່ວສັງຄົມໄດ້ບໍລິໂພກເກືອທີ່ມີຄຸນນະພາບ;
13) ສືບຕໍ່ຕິດຕາມ ແລະ ກວດກາ ຄຸນນະພາບເກືອ ຂອງໂຮງງານຜະລິດເກືອ ໃຫ້ມີທາດໂປຕາດຊຽມ ໄອໂອເດດ ຕາມມາດຕະຖານ 60 PPm;
14) ໃນປີ 2025 ນີ້ ສປປ ລາວ ກະກຽມລົບລ້າງພະຍາດທີ່ຂາດທາດ ໂປຕາດຊຽມ ໄອໂອເດດ.

**ກຸ່ມກິດຈະກຳທີ 3: ປັບປຸງ ແລະ ເຊື່ອມສານ ລະບົບການອະນາໄມ, ນ້ຳສະອາດ ແລະ ສຸຂາພິບານ ດ້ວຍການເພີ່ມ ການເຂົ້າເຖິງ ແລະ ສົ່ງເສີມ ທາງດ້ານພຶດຕິກຳ ແລະ ພາກປະຕິບັດ ທາງດ້ານອະນາໄມ ສູ້ຊົນປະຕິບັດຄາດໝາຍຕົວຊີ້ບອກທີ່ ວາງໄວໃນແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ ປີ 2024**

- **ຕົວຊີ້ບອກ 7:** ອັດຕາສ່ວນຮ້ອຍຂອງຄົວເຮືອນທີ່ໄດ້ນຳໃຊ້ແຫຼ່ງນ້ຳກິນທີ່ໄດ້ຖືກປັບປຸງແລ້ວ (ສະອາດ ແລະ ປອດໄພ). (ສາທາລະນະສຸກ/WASH)
- **ຕົວຊີ້ບອກ 8:** ອັດຕາສ່ວນຮ້ອຍຂອງຄົວເຮືອນທີ່ໄດ້ນຳໃຊ້ສິ່ງອຳນວຍຄວາມສະດວກດ້ານສຸຂາພິບານ ທີ່ໄດ້ຖືກປັບປຸງແລ້ວ (ສາທາລະນະສຸກ/WASH)
- **ຕົວຊີ້ບອກ 9:** ອັດຕາສ່ວນຮ້ອຍຂອງຄົວເຮືອນທີ່ໄດ້ນຳໃຊ້ບ່ອນລ້າງມືດ້ວຍສະບູ. (ສາທາລະນະສຸກ /WASH)
- **ຕົວຊີ້ບອກ 10:** ອັດຕາສ່ວນຮ້ອຍຂອງໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມທີ່ໄດ້ນຳໃຊ້ແຫຼ່ງນ້ຳດື່ມທີ່ໄດ້ຖືກປັບປຸງແລ້ວ (ສະອາດ ແລະ ປອດໄພ). (ສາທາລະນະສຸກ /WASH)
- **ຕົວຊີ້ບອກ 11:** ອັດຕາສ່ວນຮ້ອຍຂອງໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມທີ່ໄດ້ນຳໃຊ້ສິ່ງອຳນວຍຄວາມສະດວກດ້ານສຸຂາພິບານ (ວິດຖ່າຍ) ທີ່ມີການປັບປຸງແລ້ວ. (ສາທາລະນະສຸກ/WASH)
- **ຕົວຊີ້ບອກ 12:** ອັດຕາສ່ວນຮ້ອຍຂອງໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມທີ່ໄດ້ນຳໃຊ້ສະຖານທີ່ລ້າງມືດ້ວຍສະບູ. (ສາທາລະນະສຸກ/WASH)

1) ທົບທວນ, ປັບປຸງ, ສ້າງ ຍຸດທະສາດ, ນະໂຍບາຍ, ຄູ່ມື ແລະ ແຜນການກ່ຽວກັບການເຊື່ອມສານລະບົບການອະນາໄມ, ນ້ຳສະອາດ, ສຸຂະພິບານ ແລະ ໂພຊະນາການ;
2) ເຜີຍແຜ່ຍຸດທະສາດ, ນະໂຍບາຍ, ຄູ່ມື ແລະ ແຜນການ ກ່ຽວກັບ ການເຊື່ອມສານລະບົບການອະນາໄມ, ນ້ຳສະອາດ, ສຸຂະພິບານ ແລະ ໂພຊະນາການໃຫ້ແຕ່ລະຂັ້ນ;
3) ຂະຫຍາຍຕາໜ່າງການປະສານງານລະຫວ່າງບັນດາຂະແໜງການ, ອົງການຈັດຕັ້ງ ໃນການຈັດຕັ້ງປະຕິບັດກ່ຽວກັບການເຊື່ອມສານລະບົບການອະນາໄມ, ນ້ຳສະອາດ, ສຸຂະພິບານ ແລະ ໂພຊະນາການ;
4) ສ້າງລະບົບຂໍ້ມູນຂ່າວສານ ແລະ ຖານຂໍ້ມູນກ່ຽວກັບເຊື່ອມສານລະບົບການອະນາໄມ, ນ້ຳສະອາດ, ສຸຂະພິບານ ແລະ ໂພຊະນາການ;
5) ສົ່ງເສີມການໃຊ້ນ້ຳດື່ມທີ່ສະອາດ ແລະ ປອດໄພ ລວມທັງ ການບຳບັດນ້ຳໃນຄົວເຮືອນ ເພື່ອສົ່ງເສີມການສຸຂະອະນາໄມ, ການນຳໃຊ້ວິດຖ່າຍ, ລ້າງມືດ້ວຍສະບູ ແລະ ຫຼຸດຜ່ອນ, ລົບລ້າງການຖ່າຍຊະຊາຍ;
6) ປັບປຸງແຫຼ່ງນ້ຳ ແລະ ລະບົບສະໜອງນ້ຳ ແລະ ສະໜອງວິດຖ່າຍໃຫ້ແກ່ບ້ານທຸກຍາກໃນຊົນນະບົດໂດຍສະເພາະຢູ່ເຂດຈຸດສຸມບູລິມະສິດ;
7) ກໍ່ສ້າງສະຖານທີ່ສຳລັບນ້ຳດື່ມທີ່ສະອາດ ແລະ ປອດໄພ, ບ່ອນລ້າງມື ແລະ ວິດຖ່າຍ ໃນ ໂຮງໝໍນ້ອຍ ແລະ ໂຮງໝໍຊຸມຊົນ ເພື່ອກຽມພ້ອມຕອບໂຕ້ຕໍ່ການປ່ຽນແປງດິນຟ້າອາກາດ, ໄພພິບັດ ແລະ ກໍລະນີສຸກເສີນ;
8) ສ້າງສະຖານທີ່ ສຳລັບນ້ຳດື່ມທີ່ສະອາດ ແລະ ປອດໄພ, ບ່ອນລ້າງມື, ແລະ ວິດຖ່າຍໃນໂຮງຮຽນ;

**ກຸ່ມກິດຈະກຳທີ 4: ກັນ ແລະ ຄວບຄຸມພະຍາດ ແລະ ໃຫ້ຢາຂ້າແມ່ທ້ອງ ສຳລັບເດັກນ້ອຍອາຍຸລຸ່ມ 05 ປີ**

**ສູ້ຊົນປະຕິບັດຄາດໝາຍຕົວຊີ້ບອກທີ່ວາງໄວ້ໃນແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ ປີ 2024**

- **ຕົວຊີ້ບອກ 13:** ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸ 12 ຫາ 59 ເດືອນ ທີ່ໄດ້ກິນຢາຂ້າແມ່ທ້ອງໃຫ້ໄດ້.
- **ຕົວຊີ້ບອກ 14:** ອັດຕາສ່ວນຮ້ອຍຂອງເດັກນ້ອຍອາຍຸລຸ່ມ 05 ປີ ທີ່ເປັນພະຍາດຖອກທ້ອງຜູ້ທີ່ໄດ້ຮັບການປິ່ນປົວ ຢູ່ສະຖານທີ່ບໍລິການສຸຂະພາບ. (ແຍກຕາມເພດ: ຍິງ-ຊາຍ) ໃຫ້ໄດ້.
- **ຕົວຊີ້ບອກ 15:** ອັດຕາສ່ວນຂອງເດັກນ້ອຍອາຍຸລຸ່ມ 02 ປີ ທີ່ໄດ້ຮັບວັກຊີນກັນພະຍາດຄົບທຸກຊະນິດ.

1) ສືບຕໍ່ຍົກລະດັບຄວາມຮູ້ຄວາມສາມາດ ໃນການບໍລິຫານວຽກງານສັກຢາກັນພະຍາດໃຫ້ຂັ້ນແຂວງ-ເມືອງ ຂອງ 08 ແຂວງທີ່ຍັງເຫຼືອ;
2) ອົບຮົມຄູ່ມືການສັກຢາກັນພະຍາດ ໃນພາກປະຕິບັດຕົວຈິງ ແລະ ການສ້າງແຜນຈຸລະພາກ ໃຫ້ຂັ້ນສຸກສາລາໃນທົ່ວປະເທດ;
3) ທົບທວນ, ປັບປຸງນະໂຍບາຍ, ຄຳແນະນຳ ແລະ ຄູ່ມື ກ່ຽວກັບການສະໜອງຢາຂ້າແມ່ທ້ອງ ສຳລັບແມ່ຍິງຖືພາ ຫຼັງຈາກໄຕມາດທີ 01;
4) ເພີ່ມທະວີການໃຫ້ບໍລິການວັກຊີນກັນພະຍາດ ໃຫ້ແກ່ເດັກນ້ອຍອາຍຸລຸ່ມ 05 ປີ ແລະ ຂະຫຍາຍຕາໜ່າງການຢຸດຕິການຖ່າຍຊະຊາຍໃນຊຸມຊົນ.

**ກຸ່ມກິດຈະກຳ 10ໃຫ້ຈຸລະສານອາຫານເສີມ, ຢາຂ້າແມ່ທ້ອງ, ໃຫ້ວັກຊີນກັນພະຍາດ ແລະ ການບໍລິການສາທາລະນະສຸກອື່ນໆ ພາຍໃນໂຮງຮຽນ ດ້ວຍການ ຈັດກິດຈະກຳ ຮ່ວມ ລະຫວ່າງ ຂະແໜງການສຶກສາທິການ ແລະ ສາທາລະນະສຸກ.**

**ສູ້ຊົນປະຕິບັດຄາດໝາຍຕົວຊີ້ບອກທີ່ວາງໄວ້ໃນແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ ປີ 2024**

- **ຕົວຊີ້ບອກ 21:** ອັດຕາສ່ວນຮ້ອຍຂອງນັກຮຽນຍິງໃນໂຮງຮຽນມັດທະຍົມທີ່ກິນທາດເຫຼັກ-ອາຊິດໂຟລິກ (IFA). (ສຶກສາທິການ ແລະ ກິລາ/ສາທາລະນະສຸກ ຮ່ວມກັນ)
- **ຕົວຊີ້ບອກ 22:** ອັດຕາສ່ວນຮ້ອຍຂອງນັກຮຽນໃນໂຮງຮຽນປະຖົມທີ່ໄດ້ກິນຢາຂ້າແມ່ທ້ອງ (ແຍກຕາມເພດ: ຍິງ-ຊາຍ) (ສຶກສາທິການ ແລະ ກິລາ/ສາທາລະນະສຸກ ຮ່ວມກັນ)

1) ປັບປຸງລະບົບຂໍ້ມູນຂ່າວສານ, ລະບົບລາຍງານ ແລະ ການແລກປ່ຽນຂໍ້ມູນ ລະຫວ່າງ ຂະແໜງການສຶກສາທິການ ແລະ ກິລາ, ສາທາລະນະສຸກ ແລະ ຂະແໜງການທີ່ກ່ຽວຂ້ອງ;
2) ສົ່ງເສີມ ແລະ ຈັດກິດຈະກຳກ່ຽວກັບໂພຊະນາການ ແລະ ສຸຂະພາບຮ່ວມກັນໃນໂຮງຮຽນ;
3) ອົບຮົມໃຫ້ຄູອະນຸບານກ່ຽວກັບການລ້ຽງດູເດັກອ່ອນ ແລະ ເດັກນ້ອຍ ແລະ ຕິດຕາມການຈະເລີນເຕີບໂຕ ແລະ ພັດທະນາການຂອງເດັກນ້ອຍຢູ່ໂຮງຮຽນອະນຸບານ ລວມທັງຊຸກຍູ້ໃຫ້ໂຮງຮຽນຈັດຊື້ອຸປະກອນໃນການຕິດຕາມດ້ວຍຕົນເອງ;
4) ຂົນຂວາຍແຫຼ່ງທຶນເພື່ອຈັດຊື້ຢາທາດເຫຼັກ-ອາຊິດຟໍລິກໃຫ້ແກ່ນັກຮຽນຍິງຊັ້ນມັດທະຍົມ ພ້ອມດ້ວຍການໃຫ້ສຸຂະສຶກສາ ແລະ ຂໍ້ມູນຂ່າວສານກ່ຽວກັບໂພຊະນາການ;
5) ຂົນຂວາຍແຫຼ່ງທຶນເພື່ອຈັດຊື້ຢາຂ້າແມ່ທ້ອງໃຫ້ແກ່ນັກຮຽນ ພ້ອມດ້ວຍການໃຫ້ສຸຂະສຶກສາ ແລະ ຂໍ້ມູນຂ່າວສານກ່ຽວກັບໂພຊະນາການ;
6) ຕິດຕາມ ແລະ ລາຍງານເປັນປົກກະຕິກ່ຽວກັບການໃຫ້ຈຸລະສານອາຫານເສີມ ແລະ ຢາຂ້າແມ່ທ້ອງໃນໂຮງຮຽນ.

**ກຸ່ມກິດຈະກຳ 13: ສົ່ງເສີມໃຫ້ມີໜ່ວຍບໍລິການ ໃນການຄຸ້ມຄອງ ການຂາດສານອາຫານກະທັນຫັນ ແບບເຊື່ອມສານ ແລະ ການບໍລິການໂພຊະນາບຳບັດ ຢູ່ໃນໂຮງໝໍ**

**ສູ້ຊົນປະຕິບັດຄາດໝາຍຕົວຊີ້ບອກທີ່ວາງໄວ້ໃນແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ ປີ 2024**

- **ຕົວຊີ້ບອກທີ 24:** ອັດຕາສ່ວນຮ້ອຍ ຂອງ ສະຖານທີ່ບໍລິການສຸຂະພາບ ທີ່ໄດ້ມີການຄຸ້ມຄອງ ການຂາດສານ ອາຫານກະທັນຫັນແບບເຊື່ອມສານ (IMAM). (ສາທາລະນະສຸກ)

1) ອົບຮົມ ກ່ຽວກັບ ການຄຸ້ມຄອງການຂາດສານອາຫານກະທັນຫັນແບບເຊື່ອມສານ (IMAM) ໃນແຕ່ລະຂັ້ນ ໃຫ້ທົ່ວເຖິງຮອດຂັ້ນບ້ານ ໃຫ້ 05 ແຂວງເປົ້າໝາຍ;

2) ສ້າງລະບົບລາຍງານ ກ່ຽວກັບ ການຄຸ້ມຄອງການຂາດສານອາຫານກະທັນຫັນ ແບບເຊື່ອມສານ (IMAM) ໃນແຕ່ລະຂັ້ນ ໃຫ້ທົ່ວເຖິງຮອດຂັ້ນບ້ານ;
3) ລົງຕິດຕາມຊຸກຍູ້ ແລະ ປະເມີນຜົນ (IMAM) ຢ່າງເປັນປົກກະຕິ;
4) ເຮັດການປຸກລະດົມຊຸມຊົນ ໃນຂັ້ນບ້ານ ເພື່ອໃຫ້ຮູ້ ກ່ຽວກັບການຄຸ້ມຄອງການຂາດສານອາຫານກະທັນຫັນແບບເຊື່ອມສານ (IMAM) ພ້ອມທັງ ເຮັດການກັ່ນຕອງ ຊອກຫາເດັກຂາດສານອາຫານກະທັນຫັນຮ້າຍແຮງ ແລະ ສົ່ງຕໍ່ເດັກຂາດສານອາຫານໄປຮັບການປິ່ນປົວຢູ່ໂຮງໝໍແຕ່ຫົວທີ;
5) ສ້າງສື່ໂຄສະນາເພື່ອກັນ ແລະ ຄວບຄຸມພະຍາດບໍ່ຕິດຕໍ່ບໍ່ຊໍາເຮື້ອ NCDs;
6) ສືບຕໍ່ຂົນຂວາຍທຶນສະໜັບສະໜູນ ຈັດຊື້ ແລະ ແຈກຢາຍ RUTF (F-75, F-100, Resomal) ເພື່ອປິ່ນປົວເດັກນ້ອຍຂາດສານອາຫານກະທັນຫັນແບບເຊື່ອມສານ.

**ກຸ່ມກິດຈະກໍາ 16: ສົ່ງເສີມການເຊື່ອມສານວຽກງານໂພຊະນາການເຂົ້າວຽກງານຮັກສາສຸຂະພາບຂັ້ນຕົ້ນ ສູ້ຊົນປະຕິບັດຄາດໝາຍຕົວຊີ້ບອກທີ່ອາງໄວໃນແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ ປີ 2024**

- **<u>ຕົວຊີ້ບອກ 29:</u>** ອັດຕາສ່ວນຮ້ອຍ ຂອງ ບ້ານທີ່ໄດ້ຖືກປະກາດເປັນ ບ້ານໂພຊະນາການຕົວແບບ ແລະ ມີກິດຈະກໍາໂພຊະນາການແບບປະສົມປະສານ ທີ່ມີຫຼາຍກວ່າໜຶ່ງຂະແໜງການເຂົ້າຮ່ວມ.

1) ສ້າງບ້ານໂພຊະນາການໂຕແບບໂດຍເລັ່ງໃສ່ ທຸກບ້ານໃນເຂດຈຸດສຸມບູລິມະສິດ ທີ່ຖືກຕ້ອງຕາມເງື່ອນໄຂໃນຄູ່ມືແນະນໍາ (ຄາດໝາຍ ໃຫ້ໄດ້ຢ່າງໜ້ອຍ 1 ບ້ານ ຂອງທຸກແຂວງ ປີ 2023 – 2024);
2) ຈັດກອງປະຊຸມເຜີຍແຜ່ ກ່ຽວກັບ ຄູ່ມືແນະນໍາການສ້າງບ້ານໂພຊະນາການຕົວແບບໃຫ້ຂັ້ນແຂວງ, ເມືອງ ແລະ ບ້ານ;
3) ສົ່ງເສີມວຽກງານໂພຊະນາການໃນຂັ້ນຊຸມຊົນໂດຍການເຊື່ອມສານ ເຂົ້າໃນການບໍລິການສຸຂະພາບແມ່ ແລະ ເດັກ ໂດຍສະເພາະ ການຝາກທ້ອງ ແລະ ການເກີດທີ່ມີແພດຊໍານານຊ່ວຍເກີດ;
4) ສ້າງຄູ່ມືແນະນໍາກ່ຽວກັບການມີສ່ວນຮ່ວມຂອງຊຸມຊົນ, ອົງການຈັດຕັ້ງມະຫາຊົນ, ໂດຍສະເພາະແມ່ນຕາໜ່າງຂອງສະຫະພັນແມ່ຍິງລາວໃນຂັ້ນບ້ານເພື່ອປະກອບສ່ວນເຂົ້າໃນວຽກງານໂພຊະນາການ;
5) ອົບຮົມກ່ຽວກັບວຽກງານໂພຊະນາການໃຫ້ແກ່ ອາສາສະໝັກບ້ານ ແລະ ອາສາສະໝັກແມ່ຍິງບ້ານ ລວມທັງການສ້າງກຸ່ມແມ່ຍິງໃນບ້ານເພື່ອເຮັດວຽກກ່ຽວກັບໂພຊະນາການ;
6) ປັບປຸງ ຄູ່ມືແນະນໍາ ກ່ຽວກັບການບໍລິການເຄື່ອນທີ່ ສຸຂະພາບ ແມ່ ແລະ ເດັກ ແລະ ໂພຊະນາການ ໃນບ້ານເຂດ 2 ແລະ ເຂດ 3;
7) ອົບຮົມກ່ຽວກັບຄູ່ມືແນະນໍາ ການບໍລິການເຄື່ອນທີ່ສຸຂະພາບ ແມ່ ແລະ ເດັກ ແລະ ໂພຊະນາການ ໃນບ້ານເຂດ 2 ແລະ ເຂດ 3;
8) ຈັດຕັ້ງປະຕິບັດການບໍລິການເຊື່ອມສານໂພຊະນາການຂັ້ນຊຸມຊົນ ຢ່າງໜ້ອຍ 2 ຄັ້ງຕໍ່ປີ ໃນບ້ານເຂດ 2 ແລະ ເຂດ 3;
9) ຕິດຕາມຊຸກຍູ້ວຽກງານການບໍລິການເຄື່ອນທີ່ສຸຂະພາບແມ່ແລະເດັກແລະໂພຊະນາການ ໃນບ້ານເຂດ 2 ແລະ ເຂດ 3.

- **ຂະແໜງກະສິກໍາ ແລະ ປ່າໄມ້:**

**ກິດຈະກໍາທີ 5: ສົ່ງເສີມການຜະລິດອາຫານປະເພດພືດຜັກ ແລະ ໝາກໄມ້ທີ່ມີຄຸນຄ່າທາງໂພຊະນາການ**

**ທີ່**

**ຫຼາກຫຼາຍທີ່ຕິດພັນກັບລະບົບກະສິກໍາທີ່ສະອາດ**

**ສູ້ຊົນປະຕິບັດຄາດໝາຍຕົວຊີ້ບອກ ໃຫ້ໄດ້ 35,000 ຄອບຄົວພື້ນທຸກ**

1) ການຜະລິດເຂົ້າລວມ: ສູ້ຊົນຜະລິດເຂົ້າເປືອກລວມ ໃຫ້ໄດ້ ເນື້ອທີ່ 936.101 ເຮັກຕາ, ຜົນຜະລິດ ໃຫ້ໄດ້ 3,86 ລ້ານໂຕນ, ໃນນັ້ນ ສູ້ຊົນເກັບກ່ຽວເຂົ້ານາປີ ໃຫ້ໄດ້ 3.234.500 ໂຕນ, ເຂົ້ານາແຊງ 448.700 ໂຕນ ແລະ ເຂົ້າໄຮ່ 180.600 ໂຕນ, ໂດຍສຸມໃສ່ 10 ແຂວງ ເປົ້າໝາຍ ຂອງໂຄງການຄໍ້າປະກັນສະບຽງອາຫານ, ໂດຍສະເພາະ ແຂວງຄໍາມ່ວນ, ສະຫວັນນະເຂດ, ສາລະວັນ ແລະ ແຂວງຈໍາປາສັກ ແມ່ນເລັ່ງໃສ່ຜະລິດ ເພື່ອສະໜອງ ໃຫ້ແກ່ບັນດາແຂວງພາກກາງ ແລະ ພາກໃຕ້ ແລະ ເປັນສິນຄ້າສົ່ງອອກ; ສໍາລັບ ແຂວງໄຊຍະບູລີ, ຫຼວງນໍ້າທາ ແລະ ແຂວງບໍ່ແກ້ວ ແມ່ນເລັ່ງໃສ່ຜະລິດເຂົ້າເພື່ອ

ສະໜອງໃຫ້ແກ່ບັນດາແຂວງພາກເໜືອ; ສຳລັບນະຄອນຫຼວງວຽງຈັນ, ແຂວງວຽງຈັນ ແລະ ແຂວງບໍລິຄຳໄຊ ແມ່ນເລັ່ງໃສ່ຜະລິດເພື່ອສະໜອງໃຫ້ແກ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງພາກເໜືອຈຳນວນໜຶ່ງ ລວມທັງເພື່ອເປັນສິນຄ້າສົ່ງອອກ;

2) ການຜະລິດພືດສະບຽງ: ສູ້ຊົນ ຜະລິດພືດສະບຽງອາຫານ ໃຫ້ໄດ້ທັງໝົດ 279.680 ເຮັກຕາ, ຜົນຜະລິດ 2.466.750 ໂຕນ, ໃນນັ້ນ ສາລີຫວານ ໃຫ້ໄດ້ 182.400 ໂຕນ; ເຜືອກມັນ 253.300 ໂຕນ; ພືດຜັກ ໃຫ້ໄດ້ 1,54 ລ້ານໂຕນ ແລະ ໝາກໄມ້ 482.950 ໂຕນ ໂດຍສຸມໃສ່ ບັນດາແຂວງ ທີ່ມີທ່າແຮງທາງດ້ານການຜະລິດ ແລະ ການເຂົ້າເຖິງຕະຫຼາດ ໃນການຈຳໜ່າຍຜົນຜະລິດ.

**ກິດຈະກຳທີ 6: ສົ່ງເສີມການຜະລິດອາຫານທາດໂປຣຕີນ (ຊີ້ນ-ປາ) ແລະ ອາຫານທີ່ບັນຈຸທາດແຄນຊຽມຈາກການລ້ຽງສັດນ້ອຍ ແລະ ການປະມົງ**

**ສູ້ຊົນປະຕິບັດຄາດໝາຍຕົວຊີ້ບອກ ໃຫ້ໄດ້ 35,000 ຄອບຄົວພົ້ນທຸກ**

1) ສືບຕໍ່ເອົາໃຈໃສ່ ຊຸກຍູ້ສົ່ງເສີມ ການລ້ຽງສັດ ແລະ ການປະມົງ ເພື່ອແນໃສ່ການສະໜອງຊີ້ນ, ໄຂ່ ແລະ ປາ ໃຫ້ພຽງ ພໍຢ່າງໜັກແໜ້ນ ໃນຂອບເຂດທົ່ວປະເທດ, ໃນນັ້ນ ຈະຕ້ອງສົ່ງເສີມເຮັດໃຫ້ລະດັບການຂະຫຍາຍພັນຂອງຝູງສັດ ຢູ່ໃນລະດັບ 3,5% ຕໍ່ປີ (ຄວາຍ 1%, ງົວ 3%, ໝູ 4%, ແກະ/ແບ້ 5% ແລະ ສັດປີກ 5%) ແລະ ການປະມົງ ຂະຫຍາຍ ຕົວ 4,3%;

2) ເພື່ອຮັບປະກັນການສະໜອງອາຫານ ແລະ ໂພຊະນາການ ໃຫ້ພຽງພໍກັບຄວາມຕ້ອງການບໍລິໂພກພາຍໃນຢ່າງໜັກ ແໜ້ນ ຈະຕ້ອງສູ້ຊົນຊຸກຍູ້ການຜະລິດຊີ້ນ, ໄຂ່ ແລະ ປາ ໃຫ້ໄດ້ 554.000 ໂຕນ, ໃນນັ້ນ ການຜະລິດຊີ້ນໃຫ້ໄດ້ໃນລະດັບ 271.500 ໂຕນ, ໄຂ່ 52.500 ໂຕນ ແລະ ປາ 230.000 ໂຕນ ເພື່ອຄ້ຳປະກັນເຮັດໃຫ້ອັດຕາການບໍລິໂພກຊີ້ນ, ໄຂ່ ແລະ ປາ ໂດຍສະເລ່ຍ ໃຫ້ໄດ້ 71,4 ກິໂລກຣາມ/ຄົນ/ປີ;

3) ສືບຕໍ່ທ້ອນໂຮມແນວພັນປາພື້ນເມືອງທີ່ມີທ່າແຮງ ໃຫ້ໄດ້ 06 ຊະນິດ ເຊັ່ນ: ປາສະອີ, ປາພຶງ, ປາຫວ່າໜ້ານໍ, ປາ ຕອງດາວ, ປາຫູໝາດ ແລະ ປາແດງ ໃນແຫຼ່ງນ້ຳທຳມະຊາດ ເຂົ້າມາໄວ້ໃນສະຖານີເຄືອຂ່າຍປະສານງານ ແລະ ສູນຄົ້ນຄວ້າການປະມົງ ເພື່ອໃຫ້ສາມາດຜະລິດແນວພັນໃຫ້ໄດ້ໃນໄລຍະ 5 ປີ; ສືບຕໍ່ຄົ້ນຄວ້າແນວພັນປາພື້ນ ເມືອງ ແລະ ປາຕ່າງປະເທດ ທີ່ມີຄວາມສຳຄັນທາງດ້ານເສດຖະກິດ, ຜະລິດ ແລະ ສະໜອງແນວພັນໃນທົ່ວປະເທດ ໃຫ້ໄດ້ທັງໝົດ 350 ໂຕ/ປີ, ຊຶ່ງໃນນີ້ ປາພື້ນເມືອງໃຫ້ໄດ້ 105 ໂຕ (ກວມ 30%); ສູ້ຊົນສືບຜະລິດແນວພັນປາ-ສັດນ້ຳ ອອກຮັບໃຊ້ສັງຄົມໃຫ້ໄດ້ 14.549.000 ໂຕ, ໃນນີ້ມີສາຍພັນປາພື້ນເມືອງ 30% ແລະ ສາຍພັນຕ່າງປະເທດ 70%, ບັນດາສະຖານີເຄືອຂ່າຍປະສານງານຂອງສູນຜະລິດແນວພັນປາໄດ້ 32.400.000 ໂຕ, ພ້ອມກັນນັ້ນອອກແຮງຊຸກບັນດາຟາມເອກະຊົນ ແລະ ຜູ້ປະກອບການໃນຂອບເຂດທົ່ວປະເທດຜະລິດແນວພັນປາໄດ້ທັງໝົດ 757.400.000 ໂຕ.

**ກິດຈະກຳທີ 7: ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນໃນການວາງແຜນ, ການຄຸ້ມຄອງ ແລະ ນຳໃຊ້ແຫຼ່ງຊັບພະຍາກອນທຳມະຊາດ ແລະ ເຄື່ອງປ່າຂອງດົງແບບຍືນຍົງ**

**ສູ້ຊົນປະຕິບັດຄາດໝາຍຕົວຊີ້ບອກ ໃຫ້ໄດ້ 240 ບ້ານ ໃນຂອບເຂດທົ່ວປະເທດ**

1) ສືບຕໍ່ດຳເນີນການປັກຫຼັກໝາຍ ແລະ ຕິດປ້າຍ ປ່າສະຫງວນ ແລະ ອຸທິຍານ ແຫ່ງຊາດ ໂດຍສະເພາະຕາມຈຸດທີ່ມີຄວາມຫຼໍ່ແຫຼມ ໃຫ້ໄດ້ 15 ແຫ່ງ (ຫຼັກໃຫຍ່ 100 ຫຼັກ, ຫຼັກນ້ອຍ 200 ຫຼັກ, ຕິດປ້າຍໃຫຍ່ 15 ປ້າຍ ແລະ ປ້າຍນ້ອຍ 150 ປ້າຍ);

2) ສືບຕໍ່ ວຽກງານຄຸ້ມຄອງພູມິທັດປ່າໄມ້ ເຊັ່ນ ການກຳນົດເຂດແດນປ່າໄມ້ ໃຫ້ໄດ້ 110 ບ້ານ; ວຽກງານພັດທະນາຊີວິດການເປັນຢູ່ ກຳນົດແຜນພັດທະນາຊຸມຊົນ ໃຫ້ໄດ້ 161 ບ້ານ; ສ້າງສັນຍາຄຸ້ມຄອງປ່າຜະລິດ ແບບມີສ່ວນຮ່ວມ ໃຫ້ໄດ້ 150 ບ້ານ; ພັດທະນາລະບົບຄອງຊົນລະປະທານ ໃຫ້ໄດ້ 05 ແຫ່ງ; ລະບົບເສັ້ນທາງຊອຍ ໃຫ້ໄດ້ 04 ແຫ່ງ; ສ້າງລະບົບປ້ອງກັນການເຊາະເຈື່ອນ ໃຫ້ໄດ້ 02 ແຫ່ງ;

3) ເປັນໃຈກາງ ຄົ້ນຄວ້າ ແລະ ຊຸກຍູ້ ການລົງທຶນປູກໄມ້, ເຄື່ອງປ່າຂອງດົງ ແລະ ສ້າງສິນເຊື່ອກາກບອນຢູ່ໃນປ່າຜະລິດ ໃຫ້ໄດ້ 15 ແຫ່ງ.

**ກິດຈະກຳທີ 8: ສົ່ງເສີມລະບົບຕ່ອງໂສ້ມູນຄ່າເພີ່ມການຜະລິດກະສິກຳເພື່ອໂພຊະນາການ (ຂະຫຍາຍເຕັກນິກກ່ຽວກັບຂະບວນການດ້ານກະສິກຳ)**

**ສູ້ຊົນປະຕິບັດຄາດໝາຍຕົວຊີ້ບອກ ໃນການຊຸກຍູ້, ຕິດຕາມ ການຈັດຕັ້ງປະຕິບັດຂອງກຸ່ມ ສາມາດເຄື່ອນໄຫວໄດ້ຕາມພາລະບົດບາດ ໃຫ້ໄດ້ 50% ຂອງ 1.528 ກຸ່ມ.**

1) ສຸມໃສ່ການສ້າງເປັນຄັງຄວາມຮູ້, ຂໍ້ມູນຂ່າວສານພ້ອມທັງສ້າງເປັນຕາ ໜ່າງການສົ່ງເສີມ ແລະ ການກະຈາຍບົດຮຽນອອກສູ່ວົງກວ້າງ ກ່ຽວກັບການຜະລິດ, ການດຳເນີນທຸລະກິດກະສິກຳ ຂອງຜູ້ປະກອບການ, ຟາມ, ຄອບຄົວ, ກຸ່ມ ແລະ ສະຫະກອນ ຕົວແບບ;
2) ປັບປຸງຂໍ້ມູນຂ່າວສານການສົ່ງເສີມໃນຮູບແບບຄູ່ມື, ວາລະສານ, ແຜ່ນພັບ, ໂພສເຕີ ແລະ ສື່ດີຈິຕອນເພື່ອໂຄສະນາເຜີຍແຜ່ ໃຫ້ທົ່ວເຖິງ ແລະ ກວ້າງຂວາງ;
3) ພັດທະນາຫຼັກສູດ ແລະ ສ້າງຄູຝຶກດ້ານການສົ່ງເສີມບໍລິການເຕັກນິກ ທີ່ຕິດພັນວຽກງານໂພຊະນາການໃຫ້ແກ່ພະນັກງານຂອງ ກົມ, ສູນ, ສະຖານນີບໍລິການເຕັກນິກ ແລະ ວິຊາການບ້ານ;
4) ຊຸກຍູ້ການປະຕິບັດ ຮູບແບບ, ວິທີການ, ເຄື່ອງມື ແລະ ການແນະນຳ ໃນການຄຸ້ມຄອງ, ການລົງບັນຊີ, ການກວດສອບ ແລະ ການສະຫຼຸບລາຍງານຂອງກຸ່ມ, ສະຫະກອນ, ກອງທຶນ ແລະ ຟາມ;
5) ຄຸ້ມຄອງ, ຊຸກຍູ້ ສົ່ງເສີມ ແລະ ພັດທະນາໂຮງງານປຸງແຕ່ງ ຜົນຜະລິດກະສິກຳຂະໜາດນ້ອຍລະດັບຄອບຄົວ ແລະ ສະຫະກອນ ແລະ ພ້ອມທັງສົ່ງ ສົ່ງເສີມການນຳ ເຕັກນິກໃນການແປຮູບ ເຊັ່ນ: ການອົບ, ການຕາກ, ການຫຸ້ມຫໍ່, ການຄັດເກດ, ການແປຮູບ, ການສ້າງມູນຄ່າເພີ່ມ ໃຫ້ໄດ້ ມາດຖານ ແລະ ຄວາມຕ້ອງການຂອງຕະຫຼາດ;
6) ຊຸກຍູ້, ສົ່ງເສີມ ການລົງທຶນ ໃນການຜະລິດກະສິກຳສະອາດ ແລະ ການປຸງແຕ່ງສ້າງມູນຄ່າເພີ່ມ ທີ່ມີໂພຊະນາການ ຈາກບັນດາໂຄງການຜູ້ປະກອບການທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ກວ້າງຂວາງ;
7) ສ້າງກົນໄກພົບປະແລກປ່ຽນບົດຮຽນ ລະຫວ່າງ ຜູ້ຜະລິດ, ຜູ້ປະກອບການ ແລະ ນັກວິຊາການດ້ວຍການຈັດງານວາງສະແດງສິນຄ້າ ການປະກວດຜະລິດຕະພັນ ແລະ ການສຳມະນາວິຊາການ ໃຫ້ກວ້າງຂວາງ.

- **ຂະແໜງການສຶກສາ ແລະ ກິລາ:**

**ກຸ່ມກິດຈະກຳ 9: ສົ່ງເສີມ ອາຫານ ທີ່ມີໂພຊະນາການ ແລະ ສຸຂະພາບດີ ດ້ວຍການ ນຳໃຊ້ ເຂົ້າໃນຫຼັກສູດການສຶກສາລວມທັງກະສິກຳຂະໜາດນ້ອຍໃນໂຮງຮຽນ ແລະ ກິດຈະກຳອື່ນໆ.**

- **ການສຶກສາກ່ອນໄວຮຽນ:**

1) ປັບປຸງຫຼັກສູດຊັ້ນອະນະບານສຶກສາ ເຊິ່ງປະກອບມີເນື້ອໃນຄວາມຮູ້ກ່ຽວກັບສຸຂະສຶກສາ ແລະ ໂພຊະນາການ ເຊື່ອມສານເຂົ້າໃນການພັດທະນາເຂົ້າໃນຫຼັກສູດດັ່ງກ່າວ.

- **ວຽກງານປະຖົມສຶກສາ:**

1) ສືບຕໍ່ຝຶກອົບຮົມຄູຝຶກຂັ້ນແຂວງ, ເມືອງ ແລະ ຄູປະຈຳການກ່ຽວກັບການນຳໃຊ້ສື່ການຮຽນການສອນດ້ານໂພຊະນາການ, ການເຮັດສວນຄົວໃນໂຮງຮຽນ ແລະ ການປ່ຽນແປງດິນຟ້າອາກາດ (ກ່ອງສີຂຽວ) ຊັ້ນປະຖົມສຶກສາ ໃນຈຳນວນ 03 ແຂວງ, 08 ເມືອງເປົ້າໝາຍທີ່ມີອາຫານທ່ຽງໃນໂຮງຮຽນ ພ້ອມລົງຕິດຕາມ ແລະ ຊຸກຍູ້ການນຳໃຊ້ສື່ການຮຽນການສອນດັ່ງກ່າວ ພາກຮຽນລະ 01 ຄັ້ງ ໂດຍໄດ້ຮັບການສະໜັບສະໜູນຈາກອົງການອາຫານໂລກ.

- **ວຽກງານມັດທະຍົມສຶກສາ:**

1) ສືບຕໍ່ປັບປຸງປື້ມຄູ່ມືຄູ ຊັ້ນມັດທະຍົມສຶກສາ ຂັ້ນ ມ.4 ແລະ ມ.7 ເຊິ່ງກວມມີເນື້ອໃນຄວາມຮູ້ກ່ຽວກັບໂພຊະນາການຢູ່ນຳ ເປັນຕົ້ນແມ່ນວິຊາວິທະຍາສາດທຳມະຊາດ ແລະ ວິຊາຊີວະວິທະຍາ ພ້ອມທັງຝຶກອົບຮົມຄູໃຫ້ແກ່ໂຮງຮຽນເປົ້າໝາຍ ໂດຍໄດ້ຮັບການສະໜັບສະໜູນຈາກໂຄງການການສຶກສາເພື່ອການຈ້າງງານ (EESDP);

2) ສືບຕໍ່ປັບປຸງປຶ້ມແບບຮຽນ ຊັ້ນມັດທະຍົມສຶກສາ ຂັ້ນ ມ.1, ມ.2 ແລະ ມ.5 ເຊິ່ງກອມມີເນື້ອໃນຄວາມຮູ້ກ່ຽວກັບໂພຊະນາການຢູ່ນຳ ເປັນຕົ້ນແມ່ນວິຊາວິທະຍາສາດທຳມະຊາດ ແລະ ວິຊາຊີວະວິທະຍາ ໂດຍໄດ້ຮັບການສະໜັບສະໜູນຈາກໂຄງການການສຶກສາເພື່ອການຈ້າງງານ (EESDP).

**ກຸ່ມກິດຈະກຳທີ 10: ສະໜັບສະໜູນການໃຫ້ຈຸລະສານອາຫານເພີ່ມ, ຢາຂ້າແມ່ທ້ອງ, ການໃຫ້ວັກຊີນກັນພະຍາດ ແລະ ການບໍລິການສຸຂະພາບ ອື່ນໆ ຢູ່ໃນໂຮງຮຽນ**

1) ສືບຕໍ່ຮ່ວມມືກັບຂະແໜງສາທາລະນະສຸກ ແຈກຢາຍຢາຍຂ້າແມ່ທ້ອງໃຫ້ນັກຮຽນກຸ່ມເປົ້າໝາຍ.

**ກຸ່ມກິດຈະກຳ 11: ສົ່ງເສີມການສຸຂະອະນາໄມ, ນ້ຳສະອາດ, ສຸຂະພິບານ ແລະ ການລ້າງມື ໃນໂຮງຮຽນ**

1) ກອງປະຊຸມກຳນົດລາຍລະອຽດຕົວຊີ້ບອກ ແລະ ວາງແຜນປະຕິບັດການເຊື່ອມໂຍງຂໍ້ມູນການປະເມີນ 03 ດາວຂຶ້ນໃນລະບົບ LESMIS;
2) ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນການສຶກສາແຕ່ລະຂັ້ນ (ຝຶກອົບຮົມ ກ່ຽວກັບ ການຄຸ້ມຄອງຖານຂໍ້ມູນ ໃຫ້ແກ່ວິຊາການຂັ້ນແຂວງ (ທຸກແຂວງ);
3) ສ້າງນິຕິກຳກ່ຽວກັບການຍ້ອງຍໍໂຮງຮຽນທີ່ໄດ້ດາວ ສາຍສາມັນສຶກສາ;
4) ສ້າງຄວາມເຂັ້ມແຂງໃຫ້ແກ່ ວຽກງານສົ່ງເສີມສຸຂະພາບ ແລະ ໂພຊະນາການໃນໂຮງຮຽນ;
5) ສືບຕໍ່ສັງລວມຂໍ້ມູນວຽກການປະເມີນນ້ຳສຸຂະອະນາໄມໂດຍນຳໃຊ້ຮູບແບບ 03 ດາວ.

**ກຸ່ມກິດຈະກຳທີ 12: ສະໜອງ ແລະ ສົ່ງເສີມອາຫານທ່ຽງທີ່ມີໂພຊະນາການໃນໂຮງຮຽນ**

1) ສືບຕໍ່ສະໜອງ ແລະ ສົ່ງເສີມອາຫານທ່ຽງໃນໂຮງຮຽນໃຫ້ແກ່ໂຮງຮຽນເປົ້າໝາຍ;
2) ຈັດກອງປະຊຸມຄະນະວິຊາການຮັບຜິດຊອບວຽກອາຫານທ່ຽງໃນໂຮງຮຽນ;
3) ກອງປະຊຸມຊີ້ແຈງໂຄງການໃຫ້ຄະນະຮັບຜິດຊອບໂຄງການ ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ/ໂຮງຮຽນ ທີ່ໄດ້ຮັບການສະໜັບສະໜູນຈາກໂຄງການ GPE III;
4) ຈັດກອງປະຊຸມສ້າງຄວາມເຂັ້ມແຂງການສ້າງແຜນ ວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ແລະ ວຽກງານການປູກລະດົມຊຸມຊົນ ໃຫ້ແກ່ຄະນະຮັບຜິດຊອບວຽກງານອາຫານທ່ຽງໃນໂຮງຮຽນ ຂັ້ນບ້ານ/ໂຮງຮຽນ ທີ່ເມືອງປາກອູ ແຂວງຫຼວງພະບາງ, ເມືອງເມິງ ແຂວງບໍ່ແກ້ວ ແລະ ເມືອງໜອງແຮດ ແຂວງຊຽງຂວາງ;
5) ຈັດກິດຈະກຳທັດສະນະສຶກສາວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ ພາຍໃນ ແລະ ຕ່າງປະເທດ;
6) ສືບຕໍ່ຊອກຫາແຫຼ່ງທຶນໃນການຈັດກອງປະຊຸມເຜີຍແຜ່ປຶ້ມຄູ່ມືແນະນຳກ່ຽວກັບການບໍລິໂພກອາຫານ, ເຄື່ອງດື່ມທີ່ຖືກຫຼັກໂພຊະນາການ ແລະ ປອດໄພໃນສະຖານການສຶກສາກ່ອນໄວຮຽນ ໃຫ້ແກ່ຂັ້ນແຂວງ ໃນ 08 ແຂວງ ທີ່ຍັງບໍ່ທັນໄດ້ສຳເລັດ;
7) ຕິດຕາມ, ຊຸກຍູ້ ແລະ ຊ່ວຍເຫຼືອການຈັດຕັ້ງປະຕິບັດວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ;
8) ຈັດກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດວຽກງານສົ່ງເສີມອາຫານທ່ຽງໃນໂຮງຮຽນ.

- **ວຽກງານຫຼາຍຂະແໜງການ:**

**ກຸ່ມກິດຈະກຳ 14: ສ້າງຄວາມເຂັ້ມແຂງດ້ານຄວາມສາມາດຂອງສະຖາບັນ, ການປົກຄອງ, ການຄຸ້ມຄອງ, ການວາງແຜນ ແລະ ການປະສານງານ ລະຫວ່າງຂະແໜງການໃນທຸກລະດັບ. (ຫຼາຍຂະແໜງການ)**

**ສູ້ຊົນປະຕິບັດຄາດໝາຍຕົວຊີ້ບອກທີ່ວາງໄວ້ໃນແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ ປີ 2024**

- **<u>ຕົວຊີ້ບອກ 25:</u>** ອັດຕາສ່ວນຮ້ອຍຂອງຄະນະກຳມະການໂພຊະນາການຂັ້ນແຂວງແລະ ຂັ້ນເມືອງ (PNCs/DNCs) ໄດ້ຈັດກອງປະຊຸມຢ່າງໜ້ອຍ 02 ເທື່ອຕໍ່ປີ.
- **<u>ຕົວຊີ້ບອກ 26:</u>** ຈຳນວນນະໂຍບາຍ, ດຳລັດ ແລະ ຂໍ້ແນະນຳໃໝ່ ກ່ຽວກັບການສົ່ງເສີມໂພຊະນາການທີ່ໄດ້ຖືກພັດທະນາ ແລະ ເຜີຍແຜ່. (ຫຼາຍຂະແໜງການ).

1) ສືບຕໍ່ທົບທວນ ແລະ ປັບປຸງນະໂຍບາຍ, ເອກະສານນິຕິກຳຕ່າງໆ ແລະ ແຜນຍຸດທະສາດ ແລະ ເຊື່ອມສານການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ 05 ປີ ຄັ້ງທີ X;
2) ຊຸກຍູ້ໃຫ້ມີການຈັດກອງປະຊຸມຂອງຄະນະກຳມະການໂພຊະນາການແຫ່ງຊາດ, ຂັ້ນແຂວງ ແລະ ຂັ້ນເມືອງ ຢ່າງເປັນປົກກະຕິ;

3) ຊຸກຍູ້ເຜີຍແຜ່ ພາລະບົດບາດ ແລະ ຄວາມຮັບຜິດຊອບ ແລະ ຂໍ້ແນະນຳ ກ່ຽວກັບ ການເຄື່ອນໄຫວ ຂອງຄະນະກຳມະການດ້ານໂພຊະນາການໃນແຕ່ລະຂັ້ນ ທາງອອນລາຍ ແລະ ຮ່ວມກັບຄູ່ຮ່ວມພັດທະນາ ທີ່ຈັດຕັ້ງປະຕິບັດກິດຈະກຳຢູ່ໃນພື້ນທີ່ຕົວຈິງ;
4) ປະຊຸມໂຕະມົນຮ່ວມກັບມະຫາວິທະຍາໄລມະຫິດົນ ໃນການສ້າງຄອສ ສາກົນ ແລະ ເຜີຍແຜ່ ຮູບແບບການຮຽນ ໃນວຽກໂພຊະນາການ, ການລາຍງານ ແລະ ຕິດຕາມກວດກາ ໃນແຕ່ລະຂະແໜງການ ກ່ຽວກັບ ອາຫານປອດໄພ;
5) ເຂົ້າຮ່ວມກອງປະຊຸມພາກພື້ນອາຊີ ແລະ ລະດັບໂລກຂອງເຄືອຂ່າຍ SUN CSA;
6) ຕິດຕາມ ແລະ ປະເມີນຜົນການເຮັດວຽກ ຂອງ ຄະນະກຳມະການດ້ານໂພຊະນາການ, ຂັ້ນແຂວງ ແລະ ຂັ້ນເມືອງ ຢ່າງເປັນປົກກະຕິ ທາງອອນລາຍ ແລະ ຮ່ວມກັບຄູ່ຮ່ວມພັດທະນາ ທີ່ຈັດຕັ້ງປະຕິບັດກິດຈະກຳຢູ່ໃນພື້ນທີ່ຕົວຈິງ.

**ກຸ່ມກິດຈະກຳ 15: ສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດ ຂອງແຫຼ່ງຊັບພະຍາກອນມະນຸດ ຢູ່ໃນທຸກຂະແໜງການ ແລະ ໃນທຸກຂັ້ນ. (ຫຼາຍຂະແໜງການ)**

**ສູ້ຊົນປະຕິບັດຄາດໝາຍຕົວຊີ້ບອກທີ່ວາງໄວ້ໃນແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ ປີ 2024**

- **ຕົວຊີ້ບອກ 27:** ອັດຕາສ່ວນຮ້ອຍຂອງຜູ້ປະສານງານດ້ານໂພຊະນາການ (ຈຸດປະສານງານດ້ານໂພຊະນາການ) ຢູ່ຂັ້ນສູນກາງ, ແຂວງ ແລະ ເມືອງ ທີ່ໄດ້ຮັບການ ອົບຮົມດ້ານໂພຊະນາການ. (ແຍກຕາມເພດ: ຍິງ-ຊາຍ) (ຫຼາຍຂະແໜງການ)
- **ຕົວຊີ້ບອກ 28:** ອັດຕາສ່ວນຮ້ອຍ ຂອງພະນັກງານ-ລັດຖະກອນທັງໝົດ ທີ່ເຮັດວຽກກ່ຽວກັບໂພຊະນາການຢູ່ຂັ້ນສູນກາງ, ແຂວງ ແລະ ເມືອງ ທີ່ໄດ້ຮັບການອົບຮົມດ້ານໂພຊະນາການ. (ແຍກຕາມເພດ:ຍິງ-ຊາຍ) (ຫຼາຍຂະແໜງການ)

1) ຝຶກອົບຮົມກ່ຽວກັບ ພາລະບົດບາດ ແລະ ຄວາມຮັບຜິດຊອບ ແລະ ຂໍ້ແນະນຳ ກ່ຽວກັບ ການເຄື່ອນໄຫວ ຂອງຄະນະກຳມະການດ້ານໂພຊະນາການໃນແຕ່ລະຂັ້ນ ຜ່ານທາງອອນລາຍ ຫຼື ຮ່ວມກັບຄູ່ຮ່ວມພັດທະນາ ທີ່ຈັດຕັ້ງປະຕິບັດກິດຈະກຳຢູ່ໃນພື້ນທີ່ຕົວຈິງ;
2) ຝຶກອົບຮົມໃຫ້ແກ່ຜູ້ປະສານງານໃນແຕ່ລະຂັ້ນ ກ່ຽວກັບ ເຄື່ອງມືກົນໄກການປະສານງານ ໃນການເຮັດວຽກຮ່ວມກັນຫຼາຍຂະແໜງການ ໃຫ້ແກ່ແຕ່ລະຂັ້ນ ໂດຍການຮ່ວມການມືກັນຄູ່ຮ່ວມພັດທະນາໃນພື້ນທີ່ ຫຼື ຜ່ານທາງອອນລາຍ;
3) ຕິດຕາມ ແລະ ປະເມີນຜົນການເຮັດວຽກຂອງຄະນະກຳມະການແຫ່ງຊາດດ້ານໂພຊະນາການ, ຂັ້ນແຂວງ ແລະ ຂັ້ນເມືອງຢ່າງເປັນປົກກະຕິ;
4) ເຊື່ອມສານໂພຊະນາການເຂົ້າໃນຫຼັກສູດ ການຮຽນ-ການສອນ ຂອງບັນດາສະຖາບັນ ແລະ ສຸມໃສ່ຫຼາຍຂະແໜງການທີ່ກ່ຽວຂ້ອງ;
5) ຈັດຝຶກອົບຮົມໄລຍະສັ້ນໃຫ້ຜູ້ບໍລິຫານຄຸ້ມຄອງ ແລະ ພະນັກງານທີ່ເຮັດວຽກກ່ຽວກັບໂພຊະນາການໃນຂັ້ນສູນກາງ, ແຂວງ ແລະ ເມືອງ ຂອງຫຼາຍຂະແໜງການ;
6) ຈັດຝຶກອົບຮົມໄລຍະສັ້ນ ກ່ຽວກັບ ວຽກງານສົ່ງເສີມໂພຊະນາການ ແລະ ການຄໍ້າປະກັນສະບຽງອາຫານໃຫ້ແກ່ຫຼາຍຂະແໜງການກ່ຽວຂ້ອງໃນແຕ່ລະຂັ້ນ;
7) ຍົກລະດັບຄວາມຮູ້ ຄວາມອາດສາມາດຂອງພະນັກງານ ກ່ຽວກັບ ວຽກງານທີ່ພົວພັນກັບໂພຊະນາການ ແລະ ການຄໍ້າປະກັນສະບຽງອາຫານ ໂດຍການຝຶກອົບຮົມໃນໄລຍະສັ້ນຢູ່ພາຍໃນ ແລະ ຕ່າງປະເທດ (ທັດສະນະສຶກສາ, ການແລກປ່ຽນບົດຮຽນ, ສຳມະນາ, ອົບຮົມ, ກອງປະຊຸມ);
8) ຍົກລະດັບຄວາມຮູ້ ແລະ ທັກສະຂອງພະນັກງານທີ່ເຮັດວຽກກ່ຽວກັບ ໂພຊະນາການ ແລະ ການຄໍ້າປະກັນສະບຽງອາຫານ ໂດຍການຝຶກອົບຮົມໃນໄລຍະຍາວ ຢູ່ພາຍໃນ ແລະ ຕ່າງປະເທດ (ປະລິນຍາໂທ ແລະ ປະລິນຍາເອກ);
9) ສ້າງພະນັກງານທີ່ຮັບຜິດຊອບ ກ່ຽວກັບ ວຽກງານການຄົ້ນຄວ້າ, ການເຝົ້າລະວັງດ້ານໂພຊະນາການ.

**ກຸ່ມກິດຈະກຳ 17: ປັບປຸງການຄຸ້ມຄອງ ແລະ ການນຳໃຊ້ກອບຜົນໄດ້ໃນການຕິດຕາມ ແລະ ປະເມີນຜົນ, ການລາຍງານໂພຊະນາການຢ່າງເປັນປົກກະຕິ, ການເຝົ້າລະວັງ, ການຄົ້ນຄວ້າ ແລະ ການສຳຫຼວດ ແລະ ການແລກປ່ຽນຂໍ້ມູນຂ່າວສານ ແລະ ພາກປະຕິບັດທີ່ດີ. (ຫຼາຍຂະແໜງການ)**

**ສູ້ຊົນປະຕິບັດຄາດໝາຍຕົວຊີ້ບອກທີ່ວາງໄວ້ໃນແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ ປີ 2024**

- **<u>ຕົວຊີ້ບອກ 30:</u>** ອັດຕາສ່ວນຮ້ອຍຂອງໜ່ວຍງານໃນຂັ້ນສູນກາງ, ແຂວງ ແລະ ເມືອງ ທີ່ໄດ້ລາຍງານເປັນປົກກະຕິກ່ຽວກັບໂພຊະນາການໂດຍຂະແໜງການ (ສາທາລະນະສຸກ, ສຶກສາທິການ ແລະ ກິລາ, ກະສິກຳ ແລະ ປ່າໄມ້). (ຫຼາຍຂະແໜງການ)
- **<u>ຕົວຊີ້ບອກ 31:</u>** ອັດຕາສ່ວນຮ້ອຍຂອງພະນັກງານ-ລັດຖະກອນທຸກຄົນ ທີ່ເຮັດວຽກກ່ຽວກັບໂພຊະນາການ (ຂັ້ນສູນກາງ, ແຂວງ ແລະ ເມືອງ) ທີ່ໄດ້ຮັບການອົບຮົມ ໂດຍສະເພາະ ກ່ຽວກັບ ການຕິດຕາມ ແລະ ປະເມີນຜົນ, ການປະເມີນ, ການຮຽນຮູ້ (MEAL). (ແຍກຕາມເພດ: ຍິງ-ຊາຍ) (ຫຼາຍຂະແໜງການ)
  1) ການສ້າງຄວາມອາດສາມາດ: ສຸມໃສ່ການສ້າງຄວາມອາດສາມາດທັງຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ ໄຕມາດລະ 01 ຄັ້ງ, ສຸມໃສ່ການຝຶກອົບຮົມສ້າງຄູຝຶກ (TOT) ໂດຍການສ້າງຄວາມເຂັ້ມແຂງໃຫ້ພະນັກງານຂັ້ນສູນກາງ ເພື່ອກຽມພ້ອມຖ່າຍທອດຄວາມຮູ້ ແລະ ຝຶກອົບຮົມຕໍ່ໃຫ້ພະນັກງານຂັ້ນແຂວງ;
  2) ບົດຄົ້ນຄວ້າ: ສຸມໃສ່ສ້າງບົດຄົ້ນຄວ້າໃຫ້ໄດ້ປະຕິບັດສືບຕໍ່ຕາມແຜນກຳຄື ຢ່າງໜ້ອຍປີລະ 04 ຫົວຂໍ້, ໂດຍຫົວຂໍ້ຄົ້ນຄວ້າຂອງທັງສອງໜ່ວຍງານຈະມີຄວາມກົມກຽວກັນຫຼາຍຂຶ້ນ, ຄຸນນະພາບຂອງບົດຄົ້ນຄວ້າຈະເພີ່ມຂຶ້ນ;
  3) ກອງປະຊຸມ ແລະ ການເຜີຍແຜ່: ສຸມໃສ່ການເຜີຍແຜ່ຂໍ້ມູນ ແລະ ບົດຄົ້ນຄວ້າໃຫ້ຫຼາຍຂຶ້ນ ເພື່ອສ້າງຄວາມຕື່ນໂຕໃຫ້ແກ່ບັນດາຜູ້ວາງນະໂຍບາຍ, ໜ່ວຍງານທີ່ກ່ຽວຂ້ອງ ລວມໄປເຖິງບັນດາ ນັກຄົ້ນຄວ້າ, ຄູອາຈານ ແລະ ນັກສຶກສາໃນບັນດາມະຫາໄລຕ່າງໆໃນຂອບເຂດທົ່ວປະເທດ ເພື່ອໃຫ້ ເກີດການນຳໃຊ້ຂໍ້ມູນທີ່ມີຢູ່ໃຫ້ເກີດປະໂຫຍດສູງສຸດ;
  4) ການສະແດງຂໍ້ມູນ: ເວັບໄຊ້ຖານຂໍ້ມູນໂພຊະນາການແຫ່ງຊາດ (NIPN) ໄດ້ພັດທະນາລະບົບການນຳໃຊ້ທີ່ສາມາດ ເຂົ້າເຖິງຂໍ້ມູນໄດ້ງ່າຍ ຂຶ້ນ, ສະດວກ ແລະ ວ່ອງໄວໃນການຄົ້ນຫາຂໍ້ມູນ ແລະ ພັດທະນາລະບົບການສົ່ງຂໍ້ມູນ ຈາກບັນດາຂະແໜງການຈະໄດ້ພິຈາລະນາໃຫ້ມີການລິ້ງເຂົ້າຖານຂໍ້ມູນຂອງ NIPN;
  5) ສືບຕໍ່ປະຊຸມລາຍງານປົກກະຕິ ຂອງກອງເລຂາ ແລະ ຄະນະກຳມະການແຫ່ງຊາດ ເພື່ອຕິດຕາມການຈັດ ຕັ້ງປະຕິບັດ NPAN ແລະ ລາຍງານຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດວຽກງານ ເພື່ອໃຫ້ມີການແກ້ບັນຫາ ຢ່າງທັນທ່ວງທີ.

**ກຸ່ມກິດຈະກຳ 18: ປັບປຸງການຄຸ້ມຄອງທາງດ້ານການເງິນ, ການວາງແຜນ, ການຕິດຕາມ ແລະ ການລາຍງານດ້ານການເງິນ ທັງພາກລັດ ແລະ ການຊ່ວຍເຫຼືອທາງການດ້ານພັດທະນາ (ODA) ໃນທຸກຂະແໜງການ ແລະ ທຸກຂັ້ນ (ຫຼາຍຂະແໜງການ)**

- ອັດຕາສ່ວນຮ້ອຍຂອງ ການຈັດຕັ້ງຂັ້ນສູນກາງ, ແຂວງ ແລະ ເມືອງ ທີ່ໄດ້ລາຍງານດ້ານການເງິນ ກ່ຽວກັບ ໂພຊະນາການແຕ່ລະຂະແໜງ (ສາທາລະນະສຸກ, ສຶກສາທິການ ແລະ ກິລາ, ກະສິກຳ ແລະ ປ່າໄມ້). (ຫຼາຍຂະແໜງການ)
  1) ຈັດກອງປະຊຸມ ເຜີຍແຜ່, ທົບທວນ, ຄູ່ມື ແລະ ຂໍ້ແນະນຳ ກ່ຽວກັບການຄຸ້ມຄອງດ້ານການເງິນ;
  2) ຈັດຊຸດອົບຮົມ ກ່ຽວກັບ ການຄຸ້ມຄອງການເງິນ, ຂໍ້ແນະນຳ ແລະ ເຄື່ອງມືຕ່າງໆ;
  3) ໃຫ້ການຊ່ວຍເຫຼືອ ທາງດ້ານວິຊາການ ໃຫ້ແກ່ພະນັກງານໂພຊະນາການໃນຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອໃຫ້ພວກເຂົາມີຄວາມສາມາດສົ່ງບົດລາຍງານທາງດ້ານການເງິນທີ່ມີຄຸນະພາບ ກ່ຽວກັບກິດຈະກຳໂພຊະນາການ;
  4) ສືບຕໍ່ໃຫ້ການສະໜັບສະໜູນ ການສ້າງເຄື່ອງມື, ຄູ່ມື ແລະ ຂໍ້ແນະນຳ ໃນການເຊື່ອມສານງົບປະມານ ແລະ ແຜນການ ເພື່ອໂພຊະນາການ ໃຫ້ເປັນໄປໃນລວງດຽວກັນ ໂດຍການເລີ່ມຕົ້ນຈາກຂະແໜງການສາທາລະນະສຸກ ແລະ ກະສິກຳ ແລະ ປ່າໄມ້ ເປັນຕົວຢ່າງໃນຈັດຕັ້ງປະຕິບັດ;

5) ຊຸກຍູ້ໃຫ້ມີການເຊື່ອມສານວຽກງານໂພຊະນາການ ເຂົ້າໃນວຽກງານຂອງສາທາລະນະສຸກ, ກະສິກຳ ແລະ ປ່າໄມ້ ແລະ ສຶກສາທິການ ແລະ ກິລາ ໂດຍການຮ່ວມມືກັບຜູ້ຊ່ຽວຊານທາງດ້ານງົບປະມານ ຈາກ EU PFM;
6) ສືບຕໍ່ຊຸກຍູ້ໃຫ້ລັດຖະບານ ມີການຈັດສັນງົບປະມານເຂົ້າໃນວຽກງານໂພຊະນາການເພີ່ມຂຶ້ນ ແລະ ຖືເອົາວຽກງານໂພຊະນາການເປັນບຸລິມະສິດ;
7) ສົ່ງບົດລາຍງານການເງິນ ກ່ຽວກັບ ວຽກໂພຊະນາການຂອງຫຼາຍຂະແໜງການ ຢ່າງເປັນປົກກະຕິ ແລະ ເປັນລະບົບຂອງທຸກໆໄຕມາດໃນແຕ່ລະຂັ້ນ.

**ກຸ່ມກິດຈະກຳ 19: ເພີ່ມການລົງທຶນ ທາງພາກລັດ ແລະ ເອກະຊົນພາຍໃນປະເທດ ສຳລັບວຽກງານໂພຊະນາການ ເພື່ອແນ່ໃສ່ຄວາມຍືນຍົງ. (ຫຼາຍຂະແໜງການ)**

- **<u>ຕົວຊີ້ບອກ 33</u>**: ອັດຕາສ່ວນຮ້ອຍຂອງການໃຊ້ຈ່າຍດ້ານໂພຊະນາການທັງໝົດຈາກການລົງທຶນພາຍໃນປະເທດເມື່ອສົມທຽບໃສ່ການຊ່ວຍເຫຼືອທາງການດ້ານການພັດທະນາ (ODA). (ຫຼາຍຂະແໜງການ)
  1) ເຮັດວຽກຮ່ວມກັບເຄືອຂ່າຍ SUN CSA ລາວ, ແຜນການ ແລະ ການລົງທຶນ, ການເງິນ ໃນການຕິດຕາມ ແລະ ປະເມີນຜົນ ງົບປະມານຊ່ວຍເຫຼືອທາງດ້ານການພັດທະນາ ໃນວຽກງານໂພຊະນາການ;
  2) ຕິດຕາມກວດກາ, ການປະເມີນ ແລະ ລາຍງານ ກ່ຽວກັບການລົງທຶນພາຍໃນປະເທດ ເຂົ້າໃນກິດຈະກຳໂພຊະນາການ ລວມທັງ ການເຮັດແຜນທີ່ ກ່ຽວກັບ ການລົງທຶນພາຍໃນປະເທດ;
  3) ຂົນຂວາຍການສະໜັບສະໜູນຈາກການນຳ ແລະ ຜູ້ໃຫ້ທຶນທັງພາກລັດ, ເອກະຊົນ, ອົງການສາກົນ ແລະ ຊຸມຊົນກ່ຽວກັບການລົງທຶນເພີ່ມ ໃນວຽກງານໂພຊະນາການ, ຄ້ຳປະກັນສະບຽງອາຫານ ແລະ ອາຫານທີ່ ປອດໄພຈາກພາກເອກະຊົນ;
  4) ຊຸກຍູ້ໃຫ້ທາງກະຊວງການເງິນລະບຸສາລະບານການຈ່າຍສຳລັບວຽກງານໂພຊະນາການ.

**ກຸ່ມກິດຈະກຳ 20 ພັດທະນາ ແລະ ຈັດຕັ້ງປະຕິບັດ ແຜນງານແບບປະສົມປະສານຂອງຫຼາຍຂະແໜງການເພື່ອໃຫ້ການບໍລິການທັນເວລາ, ມີປະສິດທິພາບ ແລະ ປະສິດທິຜົນຂອງກຸ່ມກິດຈະກຳໂພຊະນາການ ເພື່ອຕອບໂຕ້ພາວະສຸກເສີນຢ່າງມີປະສິດທິຜົນ ແລະ ສຸມໃສ່ເຫດການໄພພິບັດ ໃນບ່ອນທີ່ມັກເກີດຂຶ້ນ, ສະໜອງຄວາມຕ້ອງການຂອງກຸ່ມປະຊາກອນທີ່ສ່ຽງ. (ຫຼາຍຂະແໜງການ)**

- **<u>ຕົວຊີ້ບອກ 34:</u>** ອັດຕາສ່ວນຮ້ອຍຂອງພະນັກງານ-ລັດຖະກອນທຸກຄົນ ທີ່ເຮັດວຽກກ່ຽວກັບໂພຊະນາການຢູ່ຂັ້ນສູນກາງ, ແຂວງ ແລະ ເມືອງ ທີ່ໄດ້ຮັບການອົບຮົມສະເພາະກ່ຽວກັບໂພຊະນາການໃນໄພພິບັດ ແລະ ເຫດການສຸກເສີນ. (ແຍກຕາມເພດ: ຍິງ-ຊາຍ). (ຫຼາຍຂະແໜງການ).
  1) ອົບຮົບຄູຝຶກຂັ້ນສູນກາງ ກ່ຽວກັບ ອົບຮົມການຕອບໂຕ້ໄພພິບັດດ້ານໂພຊະນາການ ໃນກໍລະນີສຸກເສີນ ໃນຫຼາຍຂະແໜງການ;
  2) ອົບຮົມຄູຝຶກຂັ້ນແຂວງ ກ່ຽວກັບ ອົບຮົມການຕອບໂຕ້ໄພພິບັດດ້ານໂພຊະນາການ ໃນກໍລະນີສຸກເສີນ ຢູ່ 03 ແຂວງ ຄື ແຂວງຄຳມ່ວນ, ແຂວງ ສະຫວັນນະເຂດ ແລະ ແຂວງອັດຕະປື;
  3) ຈັດຕັ້ງປະຕິບັດກົນໄກ, ນະໂຍບາຍ, ຂໍ້ແນະນຳ, ເຄື່ອງມື ແລະ ຄູ່ມືແນະນຳ ຂອງຫຼາຍພາກສ່ວນຮ່ວມກັນ ກ່ຽວກັບ ຄວາມພ້ອມ ແລະ ຕອບໂຕ້ເຫດການໄພພິບັດ ແລະ ພາວະສຸກເສີນ ລວມທັງ ການປ່ຽນແປງຂອງດິນຟ້າອາກາດ;
  4) ເຮັດການສຳຫຼວດແບບໄວຂອງຄວາມຕ້ອງການ ແລະ ວາງແຜນສຳລັບໂພຊະນາການເພື່ອຕອບໂຕ້ຕໍ່ໄພພິບັດ ແລະ ເຫດການສຸກເສີນສຳລັບຫຼາຍພາກສ່ວນຮ່ວມກັນ;
  5) ຈັດອົບຮົມ ກ່ຽວກັບ ຍຸດທະສາດ, ນະໂຍບາຍ, ຂໍ້ແນະນຳ ແລະ ເຄື່ອງມື ສຳລັບຫຼາຍພາກ ສ່ວນຮ່ວມກັນ ໃນແຕ່ລະຂັ້ນ ເພື່ອຕອບໂຕ້ຕໍ່ໄພພິບັດ ແລະ ເຫດການສຸກເສີນ;
  6) ສົມທົບກັບບັນດາໂຄງການທີ່ມີກິດຈະກຳ ກ່ຽວກັບ ການຕອບໂຕ້ຕໍ່ໄພພິບັດ ແລະ ເຊື່ອມສານວຽກງານໂພຊະນາການເຂົ້າກັບບັນດາໂຄງການປ່ຽນແປງດິນຟ້າອາກາດເພື່ອສ້າງຄວາມກຽມພ້ອມ ໃນການກະກຽມ ແລະ ຕອບໂຕ້ຕໍ່ໄພພິບັດ ແລະ ກໍລະນີສຸກເສີນ ລວມທັງ ໂຄງລ່າງພື້ນຖານ, ລະບົບນ້ຳ ແລະ ສຸຂາພິບານ ແລະ ການຄ້ຳປະກັນສະບຽງອາຫານ ເປັນຕົ້ນ;

7) ສ້າງແຜນສະໜອງວັດຖຸ, ອຸປະກອນ, ອາຫານທາງການແພດ ທີ່ຈຳເປັນ ແລະ ບົດລາຍງານ ໃນກໍລະນີເກີດໄພພິບັດ ແລະ ເຫດການສຸກເສີນ ຮ່ວມກັບນຳຫຼາຍຂະແໜງການ;
8) ດຳເນີນການປະເມີນຜົນ ແລະ ລົງຕິດຕາມຊຸກຍູ້ ຮ່ວມກັບ ຫຼາຍຂະແໜງການ ເພື່ອໃຫ້ການຊ່ວຍເຫຼືອປະຊາຊົນ, ປະເມີນຄືນແມ່ຍິງ ແລະ ເດັກນ້ອຍທີ່ເປັນຂາດສານອາຫານ ທີ່ໄດ້ຮັບຜົນກະທົບໃນກໍລະນີເກີດໄພພິບັດ ຫຼື ເຫດການສຸກເສີນ;
9) ກອງປະຊຸມຄະນະກຳມະການຄຸ້ມຄອງໄພພິບັດກະຊວງສາທາລະນະສຸກໄລຍະກຽມພ້ອມປະຕິບັດ ແລະ ຟື້ນຟູ, ຝຶກແອບວຽກງານຕອບໂຕ້ໄພພິບັດປະຈຳປີ ແລະ ເຂົ້າຮ່ວມງານວາງສະແດງໃນ ວັນທີ 13 ຕຸລາ ວັນຄຸ້ມຄອງໄພພິບັດ ອາຊຽນ ແລະ ຫຼຸດຜ່ອນໄພພິບັດສາກົນ ປະຈຳປີ;
10) ລົງປະເມີນຄວາມສ່ຽງຕໍ່ໄພທຳມະຊາດ ໃນຂະແໜງສາທາລະນະສຸກ.

**ກຸ່ມກິດຈະກຳ 21 ສ້າງ ແລະ ຈັດຕັ້ງປະຕິບັດແຜນການຂອງຫຼາຍພາກສ່ວນສຳລັບເພີ່ມທະວີ ວຽກງານກ່ຽວກັບການສື່ສານເພື່ອປ່ຽນແປງພຶດຕິກຳ ຂອງ ສັງຄົມ (SBCC) (ຫຼາຍພາກສ່ວນ)**

- <u>**ຕົວຊີ້ບອກ 35:**</u> ອັດຕາສ່ວນຮ້ອຍ ຂອງແຂວງ ແລະ ເມືອງ ທີ່ໄດ້ຈັດຕັ້ງປະຕິບັດແຜນງານ ກ່ຽວກັບການສື່ສານ ເພື່ອປ່ຽນແປງພຶດຕິກຳ ແລະ ຄວາມເຄີຍຊິນຂອງສັງຄົມຂອງຫຼາຍຂະແໜງການເພື່ອສົ່ງເສີມ ພຶດຕິກຳ ແລະ ພາກປະຕິບັດ ທີ່ດີທາງດ້ານໂພຊະນາການ. (ຫຼາຍຂະແໜງການ)

1) ທົບທວນ, ປັບປຸງ, ສ້າງຍຸດທະສາດຂອງຫຼາຍຂະແໜງການ, ນະໂຍບາຍ, ຂໍ້ແນະນຳ ແລະ ຄູ່ມືກ່ຽວກັບການສື່ສານປ່ຽນແປງພຶດຕິກຳ ແລະ ສັງຄົມຂອງຫຼາຍພາກສ່ວນ (SBCC) ເພື່ອແກ້ໄຂການຂາດສານອາຫານໃນທຸກຮູບແບບ-ໂພຊະນາການຕ່ຳ, ໂພຊະນາການເກີນ (ນ້ຳໜັກເກີນ ແລະ ພະຍາດຕຸ້ຍ) ແລະ ການຂາດຈຸລະສານອາຫານ;
2) ເຜີຍແຜ່ຍຸດທະສາດຂອງຫຼາຍພາກສ່ວນ, ນະໂຍບາຍ, ຄູ່ມື, ຂໍ້ແນະນຳ ກ່ຽວກັບ ການສື່ສານ ປ່ຽນແປງພຶດຕິກຳແລະສັງຄົມ (SBCC);
3) ຈັດອົບຮົມກ່ຽວກັບຄູ່ມືຂອງການສື່ສານການປ່ຽນແປງພຶດຕິກຳ ແລະ ທາງດ້ານສັງຄົມໃຫ້ ຫຼາຍພາກສ່ວນ ໃນແຕ່ລະຂັ້ນ ລວມທັງໂຮງຈັກ, ໂຮງງານ ແລະ ສະຖານທີ່ເຮັດວຽກ;
4) ຈັດຊຸດອົບຮົມ ກ່ຽວກັບ ການບໍລິໂພກອາຫານທີ່ມີຄຸນຄ່າທາງໂພຊະນາການໃຫ້ຂັ້ນທ້ອງຖິ່ນ ລວມທັງການສາທິດການປຸງແຕ່ງອາຫານ;
5) ທົບທວນ, ປັບປຸງ ແລະ ສ້າງເຄື່ອງມືທຸກຊະນິດ ກ່ຽວກັບ ການສຶກສາ ແລະ ການປ່ຽນແປງພຶດຕິກຳເປັນພາສາລາວ ແລະ ພາສາຂອງທ້ອງຖິ່ນ;
6) ສະໜອງຂໍ້ມູນ, ຄວາມຮູ້, ພາກປະຕິບັດ ຫຼື ຜະລິດຕະພັນ ກ່ຽວກັບ ໂພຊະນາການ ແລະ ການສື່ ສານປ່ຽນແປງພຶດຕິກຳທາງດ້ານສັງຄົມ;
7) ປະເມີນຜົນ ແລະ ຈັດກອງປະຊຸມເຜີຍແຜ່ ກ່ຽວກັບ ວຽກງານການສື່ສານປ່ຽນແປງພຶດຕິກຳ ທາງດ້ານສັງຄົມ ຮ່ວມກັບ ຫຼາຍຂະແໜງການ;
8) ຈັດພິມວາລະສານສຸຂະພາບປະຈຳເດືອນ ແລະ ພິມໂປດສະເຕີ້ ກ່ຽວກັບ ພະຍາດຕິດຕໍ່ ແລະ ບໍ່ຕິດຕໍ່;
9) ປັບປຸງຕາໜ່າງ ສະຖິຕິ ແລະ ຂ່າວສານສາທາລະນະສຸກຂັ້ນແຂວງ 18 ແຂວງ;
10) ປັບປຸງຍຸດທະສາດການສື່ສານເພື່ອສຸຂະພາບ (ສະບັບປີ 2014) ເປັນຍຸດທະສາດສະຖິຕິ ແລະ ຂ່າວສານສາທາລະນະສຸກ;
11) ປະຊຸມເຜີຍແຜ່ນິຕິກຳ ແລະ ປັບປຸງແບບຟອມລາຍງານວຽກງານ ສພສ "ສ້າງຄວາມເຂັ້ມແຂງໃຫ້ພະນັກງານຂັ້ນແຂວງ ໃນວຽກງານການສື່ສານເພື່ອສຸຂະພາບ ແລະ ການໃຫ້ຄຳປຶກສາຂະແໜງສົ່ງເສີມສຸຂະພາບຂັ້ນແຂວງ, ໃຫ້ພະນັກງານແພດທີ່ພະແນກຕ່າງໆ ໃນໂຮງໝໍແຂວງ ທີ່ພົວພັນເຖິງວຽກງານການໃຫ້ຄວາມຮູ້ແກ່ປະຊາຊົນໃຫ້ແຂວງ ອັດຕະປື, ເຊກອງ, ສະຫວັນນະເຂດ ແລະ ສາລະວັນ;
12) ຜະລິດລາຍການໂທລະພາບ ຢູ່ນະຄອນຫຼວງ ແລະ ຕ່າງແຂວງ ໃຫ້ໄດ້ 650 ເລື່ອງ ຜະລິດລາຍການວິທະຍຸ ຢູ່ນະຄອນຫຼວງ ແລະ ຕ່າງແຂວງໃຫ້ໄດ້ 750 ລາຍການ;
13) ເກັບກຳຂ່າວອ້ອມຂ້າງກະຊວງສາທາລະນະສຸກ ແລະ ຕ່າງແຂວງໃຫ້ໄດ້ 1,500 ຂ່າວ;

14) ເຮັດໂຄສະນາ ຕາມງານບຸນປະເພນີ ແລະ ວັນສຳຄັນຕ່າງໆຂອງຊາດ ຢູ່ນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ ໃຫ້ໄດ້ 48,000 ຄັ້ງ;

15) ໂຄສະນາຜ່ານທາງ ເຟດບຸກ ກ່ຽວກັບ ສຸຂະພາບ ໃຫ້ໄດ້ 500 ຫົວຂໍ້ ໃຫ້ມີຜູ້ຖືກໃຈ 20,000 ຄົນ ແລະ ຜູ້ຕິດຕາມຮັບຊົມໃຫ້ໄດ້ 23,000 ຄົນ.

16) ຜະລິດ ແລະ ຈັດໜ້າອອກແບບວາລະສານສຸຂະພາບ.

ກຸ່ມກິດຈະກຳ 22: ພັດທະນາ ແລະ ຈັດຕັ້ງປະຕິບັດແຜນງານຂອງຫຼາຍ ພາກສ່ວນເພື່ອ ສົ່ງເສີມຄວາມສະເໝີພາບຂອງບົດບາດຍິງ-ຊາຍ ເຂົ້າໃນກຸ່ມກິດຈະກຳໂພຊະນາການໃນທຸກຂະແໜງການ ແລະ ໃນທຸກຂັ້ນ. (ຫຼາຍຂະແໜງການ)

- <u>ຕົວຊີ້ບອກ 36:</u> ອັດຕາສ່ວນຮ້ອຍຂອງບັນດາແຂວງ ແລະ ເມືອງ ທີ່ໄດ້ໃຫ້ຂໍ້ມູນ ກ່ຽວກັບ ບົດບາດຍິງ-ຊາຍ ແລະ ໂພຊະນາການ ແລະ ໄດ້ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນກຸ່ມກິດຈະກຳດ້ານໂພຊະນາການ. (ຫຼາຍຂະແໜງການ)
  1) ສ້າງຄູ່ມືແນະນຳຮ່ວມຂອງຫຼາຍຂະແໜງການ ກ່ຽວກັບ ບົດບາດຍິງ-ຊາຍ;
  2) ເຜີຍແຜ່ຄູ່ມືແນະນຳຮ່ວມຂອງຫຼາຍຂະແໜງການ ກ່ຽວກັບ ບົດບາດຍິງ-ຊາຍ;
  3) ຈັດອົບຮົມຮ່ວມກັນ ກ່ຽວກັບ ຄູ່ມືແນະນຳຮ່ວມຂອງຫຼາຍຂະແໜງການ ກ່ຽວກັບ ບົດບາດຍິງ-ຊາຍ;
  4) ສ້າງເຄື່ອງມືໂພຊະນາການທີ່ຫຼາກຫຼາຍກ່ຽວກັບບົດບາດຍິງ-ຊາຍ ເປັນພາສາລາວ ແລະ ພາສາຊົນເຜົ່າ ເພື່ອສະໜັບສະໜູນ ການຈັດຕັ້ງປະຕິບັດກິດຈະກຳ ກ່ຽວກັບ ບົດບາດຍິງ-ຊາຍ ຢ່າງກວ້າງຂວາງສຸມໃສ່ປະຊາກອນເປົ້າໝາຍ ໂດຍການຮ່ວມມືຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະ ແມ່ນສະຫະພັນແມ່ຍິງລາວ ແລະ ອົງການຈັດຕັ້ງມະຫາຊົນອື່ນໆ;
  5) ຜະລິດ ແລະ ແຈກຢາຍ ຂໍ້ມູນ ແລະ ສື່ ກ່ຽວກັບ ບົດບາດຍິງ-ຊາຍ ໃນວຽກງານໂພຊະນາການ ທັງການພິມອອກ ແລະ ທາງເອເລັກໂຕຣນິກ ໂດຍຜ່ານຊ່ອງທາງທີ່ເໝາະສົມ, ລວມທັງ ຖະແຫຼງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວ, ອົງການຈັດຕັ້ງມະຫາຊົນ ແລະ ຂະແໜງການທີ່ກ່ຽວຂ້ອງ;
  6) ສຳຫຼວດຮ່ວມກັນຂອງຫຼາຍຂະແໜງການ ກ່ຽວກັບ ບົດບາດຍິງ-ຊາຍ ແລະ ການປົກປ້ອງ ທາງດ້ານສັງຄົມໃນວຽກງານໂພຊະນາການ ແລະ ພັດທະນາ ແລະ ຈັດຕັ້ງປະຕິບັດກິດຈະກຳ ຫຼັກເພື່ອແກ້ໄຂສິ່ງທີ່ຄົ້ນພົບ;
  7) ປະເມີນ ແລະ ເຜີຍແຜ່ ຜົນການຈັດຕັ້ງປະຕິບັດກ່ຽວກັບກິດຈະກຳບົດບາດ ຍິງ-ຊາຍ ໃນວຽກງານໂພຊະນາການ;
  8) ກອງປະຊຸມ ເຜີຍແຜ່ ນິຕິກຳ ແລະ ກົດໝາຍຕ່າງໆ, ຍຸດທະສາດ ເພື່ອຄວາມສະເໝີພາບຍິງ–ຊາຍ ແລະ ວຽກງານແມ່ ແລະ ເດັກຂອງຂະແໜງສາທາລະນະສຸກ ໃຫ້ພະນັກງານຫ້ອງການກະຊວງສາທາລະນະສຸກ.

ນະຄອນຫຼວງວຽງຈັນ, ວັນທີ 06 ມີນາ 2024

ລັດຖະມົນຕີ ກະຊວງສາທາລະນະສຸກ

ຮອງປະທານຄະນະກຳມະການແຫ່ງຊາດດ້ານໂພຊະນາການ

ປອ.ດຣ. ບຸນແຝງ ພູມມະໄລສິດ